

# ນິ
# ທານ
# ພື້ນ
# ເມືອງ
# ລາວ

# ນິ
# ທານ
# ພື້ນ
# ເມືອງ
# ລາວ

# ນິທານພື້ນເມືອງລາວ

ຈາກການກວດສອບ ປີ ໑໙໘໗
ສະຖາບັນຄົ້ນຄວ້າສິລະປະວັນນະຄະດີແຫ່ງຊາດ - ນ.ສ.ພ.ວັນນະສິນ

ໃບອະນຸຍາດພິມ ເລກທີ ໐໗໙/ພ.ຈ.ນ.

ທະບຽນພິມຈຳຫນ່າຍ ເລກທີ ໐໔໘/ພ.ຈ.ຫນ.

ລົງວັນທີ ໒໕/໘/໘໘

ຈັດພິມໂດຍ: ສຳນັກພິມ ວັນນະສິນ

ຈຳນວນ ໔.໐໐໐ ສະບັບ

໑໙໘໘

ຄະນະຈັດທຳ: ຈັນເພັງ, ພັນທະນາສອນ, ໂອທອງ, ພອນທິບ

ອອກແບບປົກ: ດວງເດືອນ ບຸນຍາວົງ

ພາບປະກອບເລື່ອງ: ກອງນະນີ

ພາບປົກ: ຈິດຕະກຳ ຝາວັດໃຫມ່ຫລວງພະບາງ

ໂດຍ: ຈະເລີນໄຊ

ພິມທີ່ໂຮງພິມແຫ່ງລັດ

ວຽງຈັນ ສ.ປ.ປ.ລ

# ຈາກສຳນັກພິມ

ແລະແລ້ວ ລູກຜູ້ຖ້ອນສອງຂອງວັນນະສິນກໍ່ອອກມາຢືນຊິນບັນນະໂລກໃໝ່ . ນັ້ນຄື ປື້ມທີ່ທ່ານພວມຈັບແຍງຢູ່ນີ້ເອງ.

ເພື່ອໃຫ້ " ນິທານພື້ນເມືອງ " ຂອງເຮົາກາຍເປັນພາບມີຊີວິດຊີວາ ໜ້າອອນຊອນສຳນັກພິມພວກເຮົາໄດ້ຈັດຫາຮູບມາປະກອບເປັນຮູບແຕ້ມຈາກຝີມື ຂອງນັກແຕ້ມລາວ ແລະ ຮູບຈິດຕະກຳຝາວັດ ສະທ້ອນໃຫ້ເຫັນພາບການດຳລົງຊີວິດຂອງຄົນລາວບູຮານ ໃນຍຸກກ່ອນ, ສະໄໝເກີດຂອງນິທານ ຫລື ສະໄໝເລື່ອງລາວທີ່ນິທານກາວເຖິງ.

ແນ່ນອນວ່າ ເນື້ອໃນ ຄຳສັບສຳນວນ ຮູບປະກອບ ຕະຫລອດຮອດການ ຈັດຫລັ້ນ ຂອງພວກເຮົາໃນເທື່ອນີ້ ອາດບໍ່ສົມບູນຈົບງາມຮອດຮ້ອຍສ່ວນຮ້ອຍ, ແຕ່ຢືນຢູ່ບົນພື້ນຖານ " ເຮັດໃຫ້ມີຈຸດບົກພ່ອງໜ້ອຍທີ່ສຸດ ", ສຳນັກພິມ ວັນນະສິນຂອງພວກເຮົາຝາກຄວາມຫວັງໃນການຮ່ວມມືຂອງທ່ານຜູ້ອ່ານ ສົ່ງຄວາມ ຕຳໜິຕິຊົມອັນມີຄຸນຄ່າມາໃຫ້ພວກເຮົາ.

ຈາກນັ້ນລູກຜູ້ທີສາມ ທີສີ່... ຈຶ່ງຈະອອກມາວົງການກວ່າເກົ່າເພື່ອໃຫ້ທ່ານຊື່ນໃຈຊຸ່ມຊື່ນດົ່ມແກມ ແລະ ຮັບການບອກສອນແນະນຳຢ່າງເຕັມໃຈ ຈາກທ່ານເພື່ອການເຕີບໃຫຍ່ແບບສົມບູນໃນອະນາຄົດ.

ວຽງຈັນ, ວັນທີ ໔ ຕຸລາ ໑໙໘໘

ສຳນັກພິມ ວັນນະສິນ

# ຄຳນຳ

ໄດ້ເວົ້າກັນມາແລ້ວວ່າວຽກງານປົກປັກຮັກສານໍລະດົກທາງດ້ານວັດທະນະທຳນີ້ ເປັນວຽກງານຂອງທົ່ວປວງຊົນ ມະຫາຊົນມີສ່ວນປະກອບຢ່າງຫລີກບໍ່ໄດ້ ຂະບວນ ກວດສອບນິທານປາກເປົ່າພື້ນເມືອງປີ ໑໙໘໗ ທີ່ທາງ ນ.ສ.ພ. ວັນນະສິນ ກັບສະຖາບັນຄົ້ນຄວ້າສິລະປະວັນນະຄະດີແຫ່ງຊາດ ກະຊວງວັດທະນະທຳ ຈັດຂຶ້ນນັ້ນ ມີຜູ້ສົ່ງນິທານ ເຂົ້າຮ່ວມຮອດ ໔໔໐ ເລື່ອງ

ນັບແຕ່ ສະຕະວັດທີ ໑໗ ເປັນຕົ້ນມາ, ນັກຄົ້ນຄວ້າຢູ່ທະວີບເອີລົບ ເລີ່ມ ສົນໃຈເຫັນຄວາມສຳຄັນຂອງນິທານພື້ນເມືອງ*. ມີການຮິບໂຮມແລ້ວຈັດພິມເປັນເຫລັ້ມ ມີການສຶກສາວິເຄາະຫາແຫລ່ງກຳເນີດ ແລະ ພະຍາຍາມບັນທຶກຕາມການບອກເລົ່າສືບຕໍ່ມາທັງນີ້ຍ້ອນຫລິງເຫັນບົດບາດຂອງນິທານພື້ນເມືອງໃນສັງຄົມຫນຶ່ງໆ ອິດທິພົນທາງດ້ານ ສ້າງຄວາມສຳພັນອັນດີລະຫວ່າງຄົນໃນຄອບຄົວ ຄົງບໍ່ມີໃຜປະຕິເສດໄດ້ວ່າ "ລູກຂອງຕົນ" ບໍ່ມັກຟັງນິທານ. ຄູສອນຂັ້ນອະນຸບານ ຫລື ປະຖົມສາມາດຈັກຈູງຈິດໃຈນັກຮຽນ ໄດ້ດ້ວຍການເລົ່ານິທານປະກອບບົດສອນ. ການໄດ້ຟັງ "ນິທານ" ນອນໆເຮັດໃຫ້ເດັກມີອາລົມເບີກບານແຈ່ມໃສ ມີຈິນຕະນາການເປັນການປູກຝັງ ທັດສະນະອັນດີງາມໃຫ້ແກ່ເດັກເຊັ່ນຮູ້ຈັກເມດຕາສັດ, ຮູ້ຈັກຮັກແພງ ມີຄວາມ ເອື້ອເຟື້ອຕໍ່ເພື່ອນມະນຸດ ແລະ ຖະຫນອມ

---

*(stith thompson, the folk tales london university of california press L,t,d 1977. ໜ້າ...3)

ແພງຕົ້ນໄມ້ປູກຕົ້ນໄມ້, ນິທານກ່ຽວກັບ ເຈົ້າຊາຍເຈົ້າຍິງ ສ້າງຄວາມໄຝ່ຝັນ ອັນດີງາມ ເຊັ່ນ ຮູ້ຈັກເສັຽສະຫຼະ ແລະ ສ້າງວິລະກຳອື່ນໆໃຫແກເດັກນອຍ.

ດ້ວຍຄວາມຈະເລີນທາງເຕັກໂນໂລຊີ, ນິທານພື້ນເມືອງຖືກບັນທຶກປ່ຽນສະພາບ ມາມີຕົວຕົນ ແລ່ນເຕັ້ນ, ມີຊີວິດ ມີສຽງ ມີສີ ແຕ່ກ່ອນຈະກ້າວເຖິງຂັ້ນນີ້ໄດ້ກໍຕ້ອງ ຜ່ານຂັ້ນຕອນສຳຄັນໜຶ່ງກ່ອນ ນັ້ນຄືການບັນທຶກ " ນິທານ " ປາກເປົ່າໃຫ້ເປັນລາຍລັກອັກສອນ ຂຽນດ້ວຍສຳນວນ ໜ້າອ່ານ ໜ້າຟັງ ແຕ່ວິທີການເກັບກຳ ຮິບໂຮມເອົານິທານ ຊຸດນີ້ຂອງພວກເຮົາມີຫຼາຍສິ່ງຫຼາຍແນວບໍ່ສອດຄ່ອງຖືກຕ້ອງຕາມຫລັກການວິທະຍາສາດ ສັງຄົມ ເຊັ່ນ ເຮົາບໍ່ສາມາດຮູ້ຂໍ້ມູນລະອຽດວ່ານິທານເລື່ອງນີ້ເລົ່າສືບຕໍ່ກັນມາຈັກຮຸ່ນຄົນ ແລ້ວ, ເປັນຂອງຊົນເຜົ່າໃດ ? ຜູ້ເລົ່າມີອາຍຸເທົ່າໃດ ? ຟັງມາຈາກໃຜ ?ທ້ອງຖິ່ນໃດ ?... ຂໍ້ມູນດັ່ງກ່າວເປັນສິ່ງຈຳເປັນອັນພື້ນຖານສຳລັບນັກຄົ້ນຄວ້າວິທະຍາສາດສັງຄົມ. ນ.ສ.ພ ວັນນະສິນ ກັບສະຖາບັນເຣັດໜ້າທີ່ເຕົ້າໂຮມເອົາບົດນິທານສຳເລັດແລ້ວ ແລະ ບັດນີ້ ພວມເຣັດບາດກ້າວທີສອງ ນັ້ນຄືການຈັດພິມເຜີຍແຜ່ດ້ານໜຶ່ງກໍ່ເພື່ອຢັ້ງຢືນຄວາມອຸດົມຮັ່ງມີດ້ານວັນນະຄະດີຂອງພວກເຮົາ. ລູກຫຼານເຍົາວະຊົນຜູ້ເກີດໃໝ່ໃຫຍ່ລຸ້ນ ຢູ່ໃນຍຸກ ແສງສີວິທະຍາສາດ ມີໂອກາດຮູ້ຈັກ ຫລື ຊົມນິທານພື້ນເມືອງອາຊີ ແລະ ເອີຣົບໃນຮູບ ແບບຕ່າງໆ... ມີປຶ້ມນິທານຕ່າງປະເທດພິມປະກອບຮູບສອດສີສວຍງາມ (ແປເປັນ ພາສາລາວ), ມີຮູບເງົາກາຕູນ ສາຍອອກທາງໂທລະພາບເກືອບທຸກວັນ ສາມາດເວົ້າ ໄດ້ວ່າເດັກນ້ອຍໃນເມືອງຮູ້ຈັກນິທານຕ່າງປະເທດຫຼາຍກວ່າ ນິທານພື້ນເມືອງຂອງຕົນເອງເຊິ່ງຄວາມຈິງແລ້ວ ບາງເລື່ອງກໍ່ອາດບໍ່ເໝາະສົມກັບຈິດຕະສາດ ວາດແບບການດຳລົງຊີວິດໃນສັງຄົມຂອງເດັກນ້ອຍເຮົາ ເພາະເຖິງວ່າ "ນິທານ" ຈະເປັນເລື່ອງຂອງ ຈິນຕະນາ

ການ ແຕ່ເນື້ອງຈາກຜູ້ເລົ່າ ຫລື ມະຫາຊົນຜູ້ສ້າງນິທານເປັນສະມາຊິກຂອງສັງຄົມ " ນິທານ " ຈຶ່ງມີສ່ວນຖ່າຍທອດແບບແຜນຊີວິດ ທັດສະນະຄະຕິຄວາມນິຍົມໃນຍຸກສະໄໝໜຶ່ງ. ສະນັ້ນການທີ່ພວກເຮົາຈັດພິມ "ນິທານ" ພື້ນເມືອງ ທີ່ໄດ້ມາຈາກການ ກວດສອບຄັ້ງນີ້ຈຶ່ງເປັນການສະໜອງຕອບຄວາມຮຽກຮອງຕອງການອັນເໝາະສົມໃຫ້ແກ່ ສັງຄົມສ່ວນໃດສ່ວນໜຶ່ງ ແລະ ເປັນການຢືນຢັນເຖິງຄວາມອຸດົມຮັ່ງມີທາງດ້ານວັນນະຄະດີປາກເປົ່າຂອງພວກເຮົາ.

ນິທານກວດສອບຂອງພວກເຮົາ ຂຽນບັນທຶກໂດຍຄົນຫຼາຍຮຸ່ນ (ອາຍຸແຕ່ ໘ ປີເຖິງ ໗໐ , ຫຼາຍລະດັບວັດທະນະທຳ (ແຕ່ ປ.໓ ເຖິງຂັ້ນອາຈານມະຫາວິທະຍາໄລ ), ຫຼາຍຊົນຊາດຊົນເຜົ່າ ຫຼາຍທ້ອງຖິ່ນ(ເບິ່ງບົດລາຍງານການກວດສອບ ຂອງທ່ານ ພູມ ພັນ ລັດຕະນະວົງ, ວັນນະສິນສະບັບ ໙໙ - ໑໐໐ - ໑໐໑ /໘໘). ມີຫຼາຍບົດຫຼາຍເລື່ອງຂຽນໄດ້ດີ, ບາງເຄົ້າເລື່ອງ ໂຄງເລື່ອງສົມເຫດສົມຜົນ ແຕ່ຂາດສິລະປະ ໃນການຂຽນ, ບາງເລື່ອງຂຽນບໍ່ຖືກແບບນິທານ ແລະ ອື່ນໆ...

ເພື່ອໃຫ້ນິທານຊຸດຈັດພິມໃນຄັ້ງນີ້ ມີຄວາມສົມບູນກວ່າເກົ່າ, ມີລັກສະນະເປັນ ນິທານພື້ນເມືອງເດັ່ນຂຶ້ນ ພວກເຮົາຈຶ່ງທຳການປັບປຸງແກ້ໄຂສຳນວນບາງເລື່ອງ ແລະ ດັດແປງກະທັ້ງເຄົ້າໂຄງ ເພື່ອໃຫ້ເໝາະສົມ. ວຽກງານດັ່ງກ່າວສຳເລັດລົງ ດ້ວຍການຮ່ວມມືຂອງອາຈານ ສົມແສງ ເກສາວິລະ ແຫ່ງ ມ.ສ.ຄ.ວຽງຈັນ.

ພວກເຮົາຂໍຂອບໃຈເຈົ້າຂອງນິທານທັງເດີມທຸກໆທ່ານ ແລະ ຂໍຂອບໃຈອາຈານສົມແສງ ທີ່ຊ່ວຍສ້າງສີສັນໃໝ່ໃຫ້ແກ່ນິທານປາກເປົ່າກາຍມາເປັນອັກສອນທີ່ໜ້າອ່ານໜ້າເລົ່າຕໍ່. ພໍ່ແມ່ ຄູ ອະນຸບານ ຄົງຈະສາມາດຕອບສະໜອງສຽງຮ້ອງຂໍຂອງລູກໆທີ່ວ່າ

" ເລົ່ານິທານໃຫ້ຟັງແດ່ " ຫລື ລູກໆທີ່ອ່ານຫນັງສືເປັນແລ້ວກໍ່ອາດຈັບປຶ້ມຂຶ້ນມາ ອ່ານເອງ.

ຫວັງວ່າ ຜົນງານຮ່ວມແຮງເຫຼັ້ມນີ້ຂອງພວກເຮົາຈະເປັນໄມ້ວັດຢ່າງຫນຶ່ງ ເພື່ອຍູ້ດັນໃຫ້ພວກເຮົາສືບຕໍ່ສົ່ງເສີມນິທານພື້ນເມືອງຂຶ້ນສູ່ເວທີ ຊີວິດແຫ່ງຍຸກສະໄຫມຄຽງຄູ່ກັບວັນນະຄະດີອື່ນໆ.

ວັນນະສືນ ວັນທີ ໔໐ ກັນຍາ ໑໙໘໘

ເລຂາຄະນະກຳມະການກວດສອບນິທານປາກເປົ່າ

ທົ່ວປະເທດ ຄັ້ງທີ I

ດວງເດືອນ ບຸນຍາວົງ


ພະຍານົກເປົ້າ

ຕັ້ງແຕ່ເກີດລອດທ້ອງ ພະມ່ອນແມ່ມານດາ ມານີ້ ບໍ່ເຄີຍມີບໍ່ເຄີຍເຫັນ ເຫດການມານຮ້າຍ ມີແຕ່ສຸກຢູ່ສ້າງ ນາສອນຮົ້ວໄຮ່ ໃຜເຮັດຫຼາຍກໍ່ໄດ້ເຂົ້າເຕັມເລົ້າອັງເຢຍ ເຄຍລະສານສັດຮ້າຍ ບໍ່ມີມາປົ່ນປ່ອນ ເຮັດຮຸ່ນກາໄລແຮງ ກົວຢ້ານຜ່າຍໜີ ມັນຈັກເກີດເຫດຮ້າຍ ສັບພະສິ່ງສັນໃດເດນໍ ຫລື ອິນພົມຍົມມະນາ ເສກສັນກັ່ນແກ້ງ ຮູ້ຮັດໃຫ້ເຂົ້າ ຂາດແລງ ແກງຂາດໜັ້ນ ໃຜມີບຸນສົມພານ ຈຶ່ງຕະຫຼອດ ຮອດບ່ອນບັ້ນເຂົ້າຊອນຮອນເອົາແລ້ວບໍ່ ພໍ່ເຄີຍເວົ້າຍັງສານຮົ່ມໂພສີ ໃຜບໍ່ມີກຳເວນຮົ່ມໂພຈຶ່ງກວມກຸມ ໃຜຍັງຝັນຍັງເພີ້ ຍັງລະເມີຝັນໄຝ່ ມັກສິ່ງຂອງມາກລົ້ນເຫຼືອທອງອື່ນບໍ່ເປັນ ນັ້ນ ຈັກໄດ້ຕົກອອກຈາກສະ ຫວິງຄຳ ກາສົບເຫຼັກສົບທອງ ຈິ່ຍອງຍີ່ສົບພອນ ສັບທົ່ວແລ້ວ ສັບຕາມຕົນໂຕທ່ານ ສັບໃຫ້ລານແຫລກຫລອນ ຕົກລົງພົ້ນອະເວຈີ ພູນເຍີ ງົດເດໝູ່ປັກຂີຊາດຊອຍ ເຂົາເຄີຍວອຍກົ້ງວ່າບໍ່ເຄີຍມາເວີ່ນໃກ້ຊີງເຂົ້າໄຮ່ກິນ ມີແຕ່ບິນເວີ່ນຟ້າເວຫາແອະແອ່ນ ແມ່ນສຽງອັນ ກໍ່ອື່ນອອຍ ອອຍໃຫ້ຊື່ນພະໄທ ຕົກເມື່ອນີ້ກັບເກີດເປັນຜີ ແລ້ວບໍ່ ແສ່ວລົງມາເມືອງຄົນ ນົດມົນເຕັມພົ້ນ ກືນກິນເຂົ້າ ທີ່ສຸກເຫລືອງເຕັມທົ່ງ ໃຜສິ່ງຝູງພວກເຈົ້າມາປຸ້ນໝູ່ເຮົາ ບໍ່ນໍ ຫລືວ່າຜິດຮີດບ້ານຄອງຫຼວງຂຶ້ນຂວດ ໃຫ້ບອກລາງອອກຊີ້ ພໍໄດ້ແຕ່ງຕານແດຖອນ ໃຜພາບແຜ້ໝູ່ນົກສັກກູນາຫານີ້ ຈັກຍົກໃຫ້ເປັນ ຜູ້ກາແມ່ທັບເອກອົງ ຫລື ບໍ່ດັ່ງນັ້ນ ກໍ່ຍົກໃຫ້ເປັນເຈົ້າແຜ່ນດິນແທນ ພູນແຫລວ... "

ນີ້ແມ່ນຄຳສັ່ງຂອງເຈົ້າພະຍາ ທີ່ອອກຕິດປະກາດໄປທົ່ວ ຫ້ອງຖິ່ນດິນນາໃຫ້ທຸກຄົນຕໍ່ສູ້ກັບໝູ່ນົກເປົ້າທີ່ລົງມາກິນເຂົ້າ ຕາມທົ່ງໄຮ່ທົ່ງນາ ຈົນເຮັດໃຫ້ປະຊາຊົນພົນລະເມືອງເກີດອຶດຫິວ. ກິນເຂົ້າຢູ່ຕາມໄຮ່ຕາມນາໝົດແລ້ວ ບິນເຂົ້າໄປກິນຮອດເຂົ້າຢູ່ໃນ ເລົ້າໃນເຍຍ ໜັກຕາມໜັກໂລດບິນມາຍາດກິນຮອດເຂົ້າໜຶ້ງ ຢູ່ຫວດຢູ່ມອຍເຫັນໃຜຖື ປັ້ນເຂົ້າບໍ່ໄດ້ ບິນມາສັບຕອດກິນໂລດ. ແມ່ນແຕ່ຢູ່ຫໍໂຮງເຈົ້າພະຍາ ກໍ່ເຕັມໄປດ້ວຍຝູງນົກເປົ້າຄອຍຖ້າຍາດກິນເຂົ້າປາອາຫານ. ມີເທື່ອໜຶ່ງເຈົ້າພະຍາສະເຫວີຍອາຫານ ຢູ່ນັ້ນ ນົກເປົ້າໂຕໜຶ່ງບິນແສ່ວມາ ຄາບເອົາພາເຂົ້າບິນອອກຈາກວັງ ໄປຖິ້ມລົງວັງນ້ຳ ເທື່ອຕໍ່ມາເລີຍຖືກພະຍາຈັບໄດ້. ພະຍາຈຶ່ງກ່າວຕໍ່ນົກເປົ້າໂຕນັ້ນວ່າ:

-ດູລາທ່ານນົກເປົ້າເຈົ້າແຫ່ງກາຍຍະສິດ ກ່ອນເຮົາເຈົ້າເຄີຍເປັນມິດ ຜູກພັນ**ສະໜິດ** ແໜ້ນ ແມ່ນວ່າເສັຽພະໄທຊ້ຳ ນຳໄພນີ້ຈຶ່ງປັ້ນຕ່າວ ເຮັດໃຫ້ຊາວພີ່ນ້ອງ ຮົ້ນຮ້ອນເດືອດ ນຳ.

ນົກເປົ້າຈຶ່ງເວົ້າຕໍ່ພະຍາວ່າ:

-ຟັງເຍີພະຍາເຈົ້າເນົານັ່ງເມືອງຄົນ ຍັງມີນາຍພານສັດລັດດົງເດີນດັ້ນ ລາວທຸ່ມ ຈັບເອົາໄດ້ອົງຊາຍໂອລົດ ພະຍາເຮົາ ທັງບີບຄໍຍໍຍັດປ່ອນລົງຕາມຕູ້ມ ມູນນຳເວົ້າ ວ່າເອົາໄປເຮັດລາບແຈ່ວ ໃສ່ຂອງແລ້ວເມືອຈ້ອຍບໍ່ສົ່ງຄືນ. ເຫດນັ້ນພະຍານົກເປົ້າ ຂອງພວກເຮົາຈຶ່ງຈັດສົ່ງກັນມາ ນຳເອົາພະໂອລົດຂອງເພິ່ນ. ຂໍເດຊະ ເຈົ້າພະຍາເມືອງ ຂ້ານີ້ແມ່ນແມ່ທັບກາຂອງພະຍານົກເປົ້າ ບັນຊາທະຫານນົກທັງໝົດ ມາຕໍ່ສູ້ເອົາພະໂອລົດ ກັບຄືນເມືອ ຖ້າບໍ່ໄດ້ຟັງຂ້າຈະບໍ່ພາກັນກັບຄືນ ແລະ **ຈະ**ທຳຄວາມວຸ້ນວາຍຢູ່ຢ່າງນີ້.

ເມື່ອຮູ້ຈຸດປະສົງແນວນັ້ນ ພະຍາຈຶ່ງແຕ່ງຄົນໄປນຳ ເອົານາຍພານສັດມາພົບ. ນາຍພານກໍຮັບສາລະພາບ ວ່າຕົນໄດ້ເອົາລູກນົກເປົ້າແທ້ ຍອນເຫັນຄວາມສວຍງາມ ແປກປະຫຼາດ ບໍ່ເໝືອນນົກຕົວອື່ນໆທີ່ເຄີຍພົບເຫັນ. ດຽວນີ້ໄດ້ມອບໃຫ້ລູກສາວພະຍາແລ້ວ ເມື່ອຮູ້ແນວນັ້ນພະຍາຈຶ່ງຮ້ອງລູກສາວມາພົບ ບອກວ່າ:

-ໃຫ້ລູກຈົ່ງປ່ອຍນົກເປົ້ານ້ອຍຕົວນີ້ສາ ຖ້າບໍ່ດັ່ງນັ້ນບ້ານເມືອງຂອງເຮົາຊິຫຼົ້ມຈົມ.

ລູກສາວຕອບວ່າ: ຖ້າປ່ອຍນົກຕົວນີ້ໄປ ໃຈລູກຄົງຂາດ.

-ລູກເອີຍ ! ຕົນຕາຍນີ້ກໍຍັງດີຫຼາຍຢ່າງ ດີກ່ອນວາງປ່ອຍໃຫ້ປະຊາເຊື້ອ ມອດວາຍຕາຍເພື່ອນາທົ່ງເຂົ້າເຮົາຍັງລ້ຽງຊີບ ຊີວິດຍັງປ່ອຍໃຫ້ເຂົ້ານາສຽງເຊື່ອມສູນ ເປັນບໍ , ຕາຍໜຶ່ງຍັງເປັນຕໍ້ ກໍຄືໄຄອວນແດ່ ຕໍ້ຕາຍຍັງໜຶ່ງນັ້ນ ເຂົາເວົ້າຊ່າຂວັນລູກເອີຍ ດຽວດາຍສ້າງນະຄອນສີມີເຣືອງຮຸ່ງ ດອກນາ ແໜງຮົບໂຮມໄພ່ຟ້າ ສັ້ນສ້າງຈັ່ງຊິຄວນ ໄດ້.

ເມື່ອພໍ່ເວົ້າແນວນີ້ ລູກສາວຈຶ່ງຕັດສິນໃຈ ປ່ອຍນົກອອກຈາກຕູ້ມ. ນົກເນົາຢູ່ຕູ້ມເຫງົາຫວ່ວມຫົ່ນທຸກ ຊຸກຢູ່ໃນລີ້ໄທຈິດ ຄິດຮັກນາງຄາມນ້ອຍ ງອຍຄອນຕູ້ມຍັງມີນາງປອນເຫຍື່ອ ປະປ່ອຍຕູ້ມໜີນ້ອງຫ່າງໄກ ແລນໍ ອອກຈາກຕູ້ມໂດດດຽວປ່ຽວເຫງົາ ທາຄອນຈັບພັກເຊົາເນົາຢັ້ງ ຕັດໃຈໄດ້ໄລບິນທະຍານສູ່ ໃຈໜຶ່ງຄິດຮອດຊູ້ນາງຫລາລູກພະຍາ . ນົກບິນອອກຫວິດທໍ່ປະສາດ ນາງກໍພໍດີສິ້ນລົມຫາຍໃຈ ນາງສະໜົມກົມມະວັງໄໜ້ນຳແຊວງເມື່ອໄດ້ຍິນສຽງໄຫ້ ນົກຕົວນັ້ນກໍບິນກັບຄືນມາຫາ ເຝົ້າຊາກສົບຂອງນາງ ແລະ ບໍ່ຍອມ

ບິນໄປໃສ່ອີກ: ເຫັນແນວນັ້ນພະຍາຈຶ່ງອອກຄຳສັ່ງ ໃຫ້ຈັບເອົານົກເຂົ້າຕຸ້ມ ສ່ວນຂອນພິນາງບໍ່ໃຫ້ຈູດ ດອຍປະໄວ້ລໍຖ້າພະຍາ ກັບມາແຕ່ພູເຂົາຫິມະພານ ເຊິ່ງເປັນບ່ອນຢູ່ ຂອງພະຍານົກເປົ້າ ຈຶ່ງຄອຍມຽນສືບມຽນຄາບ.

ຮຸ່ງເຊົ້າມື້ຕໍ່ມາ ພະຍາໄດ້ເດີນທາງອອກຈາກພະນະຄອນ ນຳເອົານົກເປົ້ານ້ອຍ ສົ່ງຄືນໃຫ້ ພະຍານົກເປົ້າຜູ້ເປັນພໍ່. ຕາມສັນຍາຖ້າບໍ່ດັ່ງນັ້ນ ຈະເສັຽສັດຈະ, ການເດີນທາງໄດ້ແກ່ຍາວເກືອບຮອດປີ ເສນາອາມາດໄດ້ລົ້ມຫາຍຕາຍຈາກ ເທື່ອລະຄົນ ເທື່ອລະສອງຄົນ ຕະຫຼອດຮອດມາກໍ່ຕາຍຈົນຫມົດ. ຍ້ອນເກີດເຈັບໄຂ້ໄດ້ພະຍາດ ໃນໄລຍະເດີນທາງ ສຸດທ້າຍມາເຫຼືອພຽງພະຍາກັບນົກເປົ້ານ້ອຍ. ທັງສອງໄດ້ເດີນທາງໄປເຖິງແມ່ນ້ຳໃຫຍ່ແຫ່ງຫນຶ່ງເຊິ່ງບໍ່ສາມາດ ລອຍຂ້າມໄດ້ ພະຍາຈຶ່ງມີແຕ່ນັ່ງຄິດ ເຂົ້ານ້ຳ ຖືໄປກິນທາງກໍ່ຫມົດກຽງ. ເຫັນແນວນັ້ນ ນົກເປົ້າຈຶ່ງເວົ້າກັບພະຍາວ່າ:

-ເຈົ້າພະຍາເມືອງຜູ້ຊົງສິນທຳ ປະຈຳໃຈ, ເຈົ້າພະຍາຢາກຂ້າມແມ່ນ້ຳນີ້ໄດ້ ຈົ່ງຫຼັບຕາແລ້ວປ່ອຍຜູ້ນ້ອຍນີ້ອອກຈາກຕຸ້ມ ແລ້ວທ່ານກໍ່ຈະຂ້າມໄດ້ຢ່າງສະບາຍ ແຕ່ຕ້ອງ ຖືຄຳຫມັ້ນສັນຍາແທ້ໄດ້ ຢ່າມືນຕາເປັນອັນຂາດ ຖ້າພະຍາມືນຕາເມື່ອນັ້ນພະຍາຈະກາຍ ເປັນຫມາຂີ້ເຮື້ອນໂຕຫນຶ່ງ ທີ່ຈ່ອຍຜອມ ແລະ ຫນ້າກຽດຊັງ ທັງຂີ້ດຽດກວ່າສິ່ງໃດຫມົດ. ພະຍາຄິດຢູ່ຄາວຫນຶ່ງຈຶ່ງຕອບ ນົກເປົ້ານ້ອຍວ່າ:

-ເຈົ້າຕ້ອງໃຫ້ສັນຍາກັບຂ້ອຍເຫມືອນກັນ ເມື່ອປ່ອຍຕົວແລ້ວຢ່າບິນຫນີໄປທາງໃຫນ່ . ຖ້າເຈົ້າບໍ່ນັບຖືຄຳສັນຍາ ຂ້ອຍຈະເສກໃຫ້ເຈົ້າກັບກາຍເປັນກ້ອນຫີນທັນທີ, ເມື່ອຕົກລົງກັນຄັກແນ່ແລ້ວ ພະຍາກໍ່ປ່ອຍນົກອອກຈາກຕຸ້ມ. ເມື່ອຂ້າມແມ່ນ້ຳໃຫຍ່ຫວິດແລ້ວ ເຈົ້າພະຍາຍ່າງຕໍ່ໄປ ລັດດົງລົງພູຂຶ້ນຫ້ວຍຜ່ານເນີນເຂົາ ບໍ່ຈັກເທົ່າໃດຊັ້ນເທົ່າໃດຊ່ອ. ບາດນີ້ຊ້ຳພັດມາພໍ້ຜາຊັນຕັນຫນ້າ ຈົນຫຼຽວສຸດສາຍຕາ ຂອບຟ້າເວຫາກາງກາດ. ນົກ ເປົ້ານ້ອຍບອກກັບພະຍາ ແມ່ນແຫ່ງສຸດທ້າຍທຸລະກັນດານ ກາຍນີ້ກໍ່ຈະຮອດນະຄອນຂອງພໍ່ ພະຍານົກເປົ້າແລ້ວ. ພະຍາຈຶ່ງວອນຖາມນົກເປົ້າຕື່ມອີກ: ເຮັດແນວໃດພວກເຮົາຈຶ່ງຈະພາກັນໄປພົ້ນຈາກບ່ອນນີ້. ນົກເປົ້າຕອບພະຍາດ້ວຍຄວາມເສັຽໃຈວ່າ:

ດຽວນີ້ຜູ້ຂ້າບໍ່ສາມາດບິນ ເມືອຮອດຈອມສູງນັ້ນໄດ້ ເພາະຜ່ານມາໄດ້ໃຊ້ກຳລັງແຮງກາຍເກີນຄວາມສາມາດ ດັ່ງນັ້ນຈຶ່ງເກີດອິດອ່ອນໂຮຍແຮງ.

-ເຮັດແນວໃດເຈົ້າຈຶ່ງເກີດມີພະລັງແຮງຄືນມາ ຄືເກົ່າໄດ້ອີກ.

-ບໍ່ຍາກ ແຕ່ພະຍາຕ້ອງໄດ້ສ່ຽງບຸນວາດສະໜາ ໄປຫາໝາກໄມ້ທິບມາໃຫ້ ຜູ້ຂ້າກິນແລ້ວເຫື່ອແຮງກໍ່ຈະກັບຄືນມາເໝືອນເກົ່າ.

- ໝາກໄມ້ທິບນັ້ນມີຢູ່ແຫ່ງໃດ ?

- ມີຢູ່ໜອງກະແສແສນຍານ ຖ້າສິນພານບໍ່ກ້ຽວ ຫຼຽວໄດ້ກໍ່ບໍ່ເຫັນ ກໍແກ້ວແກ່ນ ກະເດົ້າທ່ານເອີຍ. ເມື່ອເວົ້າສຸດຄວາມ ນົກເປົ້າກໍ່ລົ້ມໜອນນອນເສື່ອ ຍອມຕົນເອງ ໄດ້ອອກແຮງເກີນຄວາມສາມາດແລ້ວ.

ພະຍາໄດ້ແຕ່ເລົ່າລະລຽບ ແຄມໜອງກະແສແສນຍ່ານ ບໍ່ມີປັນຍາຈະລອຍຂ້າມນ້ຳໄປເອົາໝາກໄມ້ທິບໄດ້. ຕົກມາຮອດຍາມຄ່ຳຄືນ ໝາກໄມ້ທິບກໍ່ປະກາຍແສງຮຸ່ງ ໄປທົ່ວບໍລິເວນເຂດໜອງ ຢ່າງສວຍງາມດ້ວຍແສງສີເຫຼືອມຍິບຍັບ. ພະຍານັ່ງຄິດນອນລະເມີຝັນ ຊອກຫາວິທີທາງຂ້າມນ້ຳ ໄປຍັງດອນບ່ອນຕົ້ນໝາກໄມ້ທິບຢູ່. ພະຍາຊຸດຫົວ ເລົາເກົາຫົວຫຍ້າ ຢູ່ແຄມໜອງແຫ່ງນີ້ ແຕ່ຕົ້ນລະດູແລ້ງ ຈົນກະທັ່ງຕົກມາຮອດລະດູຝົນ.ສາຍຝົນກາງເກົ້າກາງສິບຊິວ່າກັບໃຜ ລົມຢູ່ເຈັດມື້ເຈັດຄືນຍັງບໍ່ເຊົາ ຄວາມໜາວໄດ້ ບີບຄັ້ນພະຍາຢ່າງໜັກ ຍ້ອນບໍ່ມີບ່ອນພັກພາອາໄສ ແຕ່ເຈົ້າພະຍາກໍ່ບໍ່ຍອມນັ່ງຢູ່ ນອນດາຍຢ່າງໄຮ້ຫວັດຜົນ ຕ້ອງດັ້ນຮົນຫາບ່ອນກຳບັງ. ຍ່າງໄປເລື້ອຍໆເມື່ອຍຍ່າງແລ້ວແລ່ນໄປຢ່າງບໍ່ມີຈຸດໝາຍປາຍທາງ ບັງເອີນເລີຍພົບນົກຫົງຄຳໂຕໜຶ່ງ ຢືນຊື່ງຕາກຝົນຢູ່ ພະຍາຈຶ່ງຟ້າວຂຶ້ນຂີ່ນໄປລີ້ໃນກ້ອງກົກປີກ. ຍ້ອນຄວາມອິດເມື່ອຍເຈົ້າພະຍາຈຶ່ງນອນເຊືອບຫຼັບໄປຢ່າງແຈບຈົມ.

ເມື່ອຟ້າຂາວດາວແຈ້ງ ນົກຫົງຄຳຈຶ່ງເວີ່ນໄປຊອກຫາກິນຢູ່ກາງດອນ. ຊວາດຮູ້ເມື່ອຄີງຕື່ນຂຶ້ນມາ ພະຍາຕົກພະໄທຢ່າງແຮງ.

- ໂອຍ ! ກູນີ້ກໍ່ຊົ່ວຊາມເຖີງປານນັ້ນ ນອນຈົນລືມຮອດຕື່ນ ບ່ອນນີ້ຈັກແມ່ນບໍລິເວນເຂດໃດກັນແທ້. ນົກຫົງຄຳມັນບິນເທື່ອໜຶ່ງໆ ໄດ້ຕັ້ງຫຼາຍພັນໂຍດ ດຽວນີ້ໂຕຂອງເຮົາຄົງຫ່າງໄກຈາກດິນແດນໜອງກະແສຕັ້ງໄກແສນໄກແລ້ວ ອັນນີ້ລະນໍເພີ່ນວ່າ ຢາກໄວໃຫ້ຄານຢາກນານໃຫ້ແລ່ນ.

ເມື່ອຍນັ່ງເວົ້າຈົ່ມຢູ່ຄົນດຽວ ພະຍາຈຶ່ງຄ່ອຍໆ **ໝົ້ນ**ອອກຈາກກົກປີກນົກຫົງຄຳ. ພໍຍ່ວາງຕີນລົງຢຽບດິນ ພະຍາກໍ່ຖືກລັດສະໝີອັນແປກປະຫຼາດມາກະທົບໃສ່ຢ່າງແຮງຈົນຕັ້ງໂຕບໍ່ຢູ່ ຄວາມເຈັບປວດ ແລະ ຮ້ອນເອົ້າປານໄຟລົນ ໄດ້ເກີດຂຶ້ນທົ່ວຕົນໂຕຂອງພະຍາ.

ພະຍາຄິດວ່າຖືກແມ່ມົດສະແດງລິດເດດໃສ່, ແລ້ວຈຶ່ງຕັ້ງສະມາທິ ຈົ່ມມົນກົນຄາຖາ, ໂຕ້ຕອບຄືນ ຄວາມຮ້ອນ ແລະ ເຈັບປວດ ດັ່ງກ່າວກໍ່ສ່ອຍໆຫາຍໜີ. ແຕ່ ແສງສະຫວ່າງເປັນສີຂຽວ ສີແດງສະຫລັບສີເຫຼືອງ ຍັງຄົງສະຫວ່າງສະໄຫວ ຈົບງາມຮຸ່ງປະກາຍຢູ່ ພະຍາສັງເກດເບິ່ງຮອບໆ ຈຶ່ງເຫັນຕົ້ນໄມ້ທິບ ຕັ້ງຢູ່ ກົກມັນສູງສະງ່າ ມີໝາກຢ່າງດົກໝາໜາແຊບນົວແທ້ໆ ກິນລົງໄປຄືຈະມີແຮງຂຶ້ນວາບໆ. ແຕ່ຈະຫາວິທີໃດຂຶ້ນໄປເອົາໝາກໄມ້ນັ້ນໄດ້. ເພາະຕົ້ນໄມ້ນີ້ໃຫຍ່ ສູງຈົນຫຼຽວສຸດສາຍຕາ ຈຳເປັນພະຍາຈຶ່ງໄດ້ແຕ່ນອນເຝົ້າ ຢູ່ຮິມຕົ້ນໄມ້ນີ້ຫຼາຍເວັນຫຼາຍຄືນ.

ເຊົ້າໜຶ່ງມີນົກແກງຄູ່ບ່າວສາວ ບິນມາຈັບຕົ້ນໄມ້ທິບ ແລ້ວສັບຕອດກິນໝາກໄມ້ຢ່າງສຳລານ ຍອກໄຍກັນໄປພອນ. ພະຍາໄດ້ແຕ່ແຫງນເບິ່ງຄູ່ນົກນັ້ນດ້ວຍຄວາມອອນຊອນໃຈ. ນົກແກງສາວນົວເນົາແຕ່ອຽງອາຍ ກິນແຈະໆເລຽໆຈົນເຮັດໃຫ້ ໝາກໄມ້ ຫລຸດອອກຈາກສົບຕົກລົງ ພະຍາເຫັນ ແນວນັ້ນຈຶ່ງຟ້າວເກັບເອົາ ແລ້ວຫໍ່ພົກ ໃສ່ແພມັດແອວໄວ້ຢ່າງດີ. ເມື່ອໄດ້ໝາກໄມ້ທິບດັ່ງໃຈປອງແລ້ວ ພະຍາຈົນຕາແຈຂ້າມນ້ຳບໍ່ໄດ້ ຈົນຕາເວັນຕົກຕ່ຳຄ່ຳແຮງ ຄວາມອິດອອນໂຮຍແຮງ ໄດ້ແລ່ນເຂົ້າມາຊຸມທົ່ວຮ່າງຄີງຂອງພະຍາ ຍອນຄວາມເມື່ອຍຈຶ່ງໄດ້ລົ້ມຕົວເຂົ້າຫລີບຫີນແລ້ວນອນຫລັບໄປ.

ນອນຫລັບຝັນດີໆເກີດມີນ້ຳໄຫລເຂົ້າປາກເຂົ້າດັງ ເຮັດໃຫ້ພະຍາຕື່ນຂຶ້ນທັງ ຫງາຍຢ່າງໄວວາ ມືນຕາເບິ່ງເຫັນແຕ່ພື້ນນ້ຳ.

- ໂອ້ຍ ! ເກີດເປັນມະນຸດຮ້ອຍແປດພັນປະການນໍ ສິ່ງບໍ່ເຄີຍພົບກໍ່ໄດ້ເຫັນ ແນວບໍ່ເປັນກໍ່ໄດ້ຮູ້ ກຳພູຂາເວົ້ນມານຳຈອງແລ້ວນໍ ຄາດບໍ່ສູກຢູ່ສ້າງ ນະຄອນກວ້າງສອງສີ ຖ້າວ່າມີກຳແທ້ ຂໍໃຫ້ຕາຍຈົມຈຸ່ມນ້ຳທ້ອນ ໃຫ້ນ້ຳໄຫຼລ່ອງຫີນຕາຍຖິ້ມໃຫ້ສູ້ລາງສ່າ.

ພະຍາໃຊ້ໝົດກຳລັງທີ່ມີຢູ່ ເພື່ອກັ້ນໃຈສວາດນ້ຳທັງຄິດໃນໃຈພູດຽວວ່າ:

- ໂອ ! ບ່ອນເຮົານອນມື້ຄືນນີ້ແມ່ນເກັດແຂ ບໍ່ແມ່ນຫລີບຫີນດັ່ງເຮົາຄິດ.

ເມື່ອໂປໂລຂຶ້ນຈາກໜ້ານ້ຳ ພະຍາບໍ່ຮູ້ວ່າຈະລອຍໄປທາງໃດດີ ເພາະວ່ານ້ຳກວ້າງຫຼາຍສັງເກດບໍ່ໄດ້ ວ່າທາງໃດຝັ່ງທາງໃດດອນ. ນົກກະເຕັນຊົວໂຕໜຶ່ງ ຈັບຢູ່ໂງ່ນຫີນຖ້າຈອບກິນປາ ເມື່ອຫຼຽວເຫັນພະຍາລອຍນ້ຳ ປະລຳຫລີບ... ປະລຳຫລີບ ຄຶດວ່າແມ່ນປາເລີຍແສ່ວລົງຄາບເອົາ ໄດ້ແລ້ວບິນວື່ເຂົ້າຫາຮັງຢູ່ແຄມຝັ່ງ ເພື່ອເອົາເຫຍື່ອທີ່ຫາໄດ້ເມືອປ້ອນລູກ. ແຕ່ເວລານັ້ນລູກຂອງນົກກະເຕັນ ພວມນອນຫລັບຢູ່. ກະຍັງບຸ້ມຖ້າບໍ່ຊົ້ນ

ເຈົ້າພະຍາຄືຊິບໍ່ເຫັນຮອດກະດູກ, ລູກນ້ອຍຫລັບແມ່ຂອງມັນເລີຍປະເຫຍື່ອໄວ້ໃຫ້ ແລ້ວບິນຫນີໄປຊອກຫາເຫຍື່ອມາຕື່ມອີກ. ໄດ້ໂອກາດດີ ພະຍາເລີຍລັກຫນີອອກຈາກ ຮັງນົກຫວິດຈາກຮັງນົກແລ້ວຊ້ຳພັດບໍ່ຮູ້ລົງຈາກຕົ້ນໄມ້ ເພາະຕົ້ນໄມ້ນີ້ໃຫຍ່ສູງຫຼາຍ. ພະຍາຢ້ານແມ່ນົກເຕັນຊິວຈະກັບຄືນມາພໍ້ ຈຶ່ງປີນເຂົ້າໄປຫລີ້ຢູ່ໂກນໄມ້ບ່ອນຫນຶ່ງ ຍ້ອນຄວາມອິດເມື່ອຍພະຍາຈຶ່ງນອນຫລັບໄປ.

ນອນຢູ່ດີໆພະຍາກໍ່ຈຳຕ້ອງຕື່ນທັງແຮງ ເພາະຕົນເອງໄດ້ຕົກກົ້ງລົງດິນຢ່າງມະລຶກຄຶກຄັກ ! ມືນຕາໄດ້ຈຶ່ງຮູ້ວ່າຕົນເອງຕົກອອກຈາກເກັດແລນ ເມື່ອແລນໂຕນັ້ນໂຕນລົງຈາກຕົ້ນໄມ້ໃຫຍ່ ບ່ອນຮັງນົກເຕັນຢູ່ ແລະ ພະຍາກໍ່ເຂົ້າໄປລີ້ນອນຢູ່ເກັດແລນໂຕນີ້ ຕັ້ງແຕ່ເຊົ້າງຸ້ມ. ເອົ້າ ! ບາດນີ້ຕົນເຖິງດິນແລ້ວຄືຊິບໍ່ຕາຍອີກແລ້ວ ກົ້ມເບິ່ງຕາມຕົນໂຕ ບໍ່ເຫັນມີບ່ອນໃດເຈັບປວດແລ້ວ ພະຍາຈຶ່ງເດີນທາງຕໍ່ມຸ່ງຫນ້າໄປຫານົກເປົ້າ ທີ່ນອນ ລໍຖ້າກິນຫມາກໄມ້ທິບຢູ່ຢ່າງອິດອ່ອນ. ເມື່ອເດີນທາງໄປເຖິງບ່ອນນົກເປົ້ານອນ ກໍ່ພໍດີ ຂວບສາມປີເຕັມໆ ນົກເປົ້າກໍ່ບໍ່ເຫັນ ຈັກວ່າຫາຍໄປທາງໃດ ຫລື ວ່າຕາຍໄປແຕ່ດົນນານແລ້ວກໍ່ບໍ່ຮູ້. ພະຍາເມື່ອຍແຕ່ຮ້ອງຮຽກຫາກໍ່ບໍ່ມີສຽງຕອບແຕ່ຢ່າງໃດເລີຍ ພະອົງກໍ່ຮູ້ສຶກ ຫິວແຮງ ຕັ້ງແຕ່ເດີນທາງມາຮອດຫນອງກະແສແສນຍານ ເຂົ້າປາອາຫານມື້ກິນມື້ບໍ່ ເປັນແນວນັ້ນພະຍາຈຶ່ງຊອກຫາຫນໍ່ໄມ້ຫົວມັນ ກິນໃຫ້ອີ່ມດີມີຜະຫຍາເສຽກ່ອນ ຈຶ່ງຈະນຳ ຊອກຫາຮ່ອງຮອຍຂອງນົກເປົ້າຕື່ມອີກ. ພະຍາໄປພໍ້ເຄືອມັນເຄືອຫນຶ່ງເກີດຢູ່ຫົວໂພນດິນເປັນເຄືອທີ່ໃຫຍ່ງາມເບິ່ງຊົງຄືຊິຫົວໃຫຍ່ ຈຶ່ງໃຊ້ເລັບມືທັງສອງເບື້ອງຄວັດມັນເຄືອນັ້ນ ຄວັດລົງໄປ... ຄວັດລົງໄປ... ກໍ່ເລີຍພໍ້ນົກເປົ້ານອນສັ່ນຢູ່ວັບໆ.

ເມື່ອເຫັນແນວນັ້ນ ພະຍາຈຶ່ງຟ້າວແກ້ເອົາຫມາກໄມ້ທິບ ທີ່ຂອດໄວ້ຢູ່ພົກແພມາໃຫ້ນົກເປົ້າກິນ ລິດຂອງຫມາກໄມ້ທິບໄດ້ກະຈາຍໄປທົ່ວ ເສັ້ນເອັນຂອງນົກເປົ້າ ບໍ່ພໍຄາວ ເຫື່ອແຮງ ກໍ່ແລ່ນມາມີຄືເກົ່າ ທັງສອງຕ່າງກໍ່ດີອົກດີໃຈ ເວົ້າລົມກັນຢ່າງມ່ວນຊື່ນ ນອນ ແຮມຄືນຢູ່ຕີນຜາຊັນເອົາແຮງຕື່ມອີກຈັກຄືນເສຽກ່ອນ ຕື່ນມາຟ້າໃຫມ່ໃຈດີມີຜະຫຍາ ຈຶ່ງຈະພາກັນເຫາະເຫີນເດີນອາກາດທະຍານ ຂຶ້ນສູ່ຍອດເຂົາຫິມະພານທີ່ມີເສົາສະຫນູນສູງສຸດຊົ່ວຈູຮອດເມືອງຟ້າຄາລຽງ.

× ×

×

ກ່ອນພະຍາເມືອງຄົນ ຈະກັບຄືນເມືອພະນະຄອນ ພະຍາເມືອງນົກເປົ້າ ໄດ້ເອົາຫມາກໄມ້ມະນີໂຄດ ໃຫ້ສະເຫວີຍ. ສະເຫວີຍລົງໄປແລ້ວມີເຫື່ອແຮງເຫາະເຫີນ ເດີນອາກາດໄດ້ ຄົນເຖົ້າກັບກາຍເປັນຫນຸ່ມ ດັ່ງນັ້ນພະຍາຈຶ່ງກັບກາຍມາເປັນອາຍບ່າວ ນ້ອຍຄືນໃຫມ່. ພະຍານົກເປົ້າຊື່ນຊົມພະໄທຫຼາຍ ເມື່ອລູກຊາຍດຽວສຸດທີ່ຮັກໄດ້ກັບມາຢູ່ ໃນອ້ອມກອດຂອງຕົນດັ່ງເດີມ ດ້ວຍຄວາມປອດໄພທຸກປະການ. ພະຍາເມືອງຄົນຈາກ ນະຄອນນົກເປົ້າ ຄືນສູ່ນະຄອນເມືອງຄົນບໍ່ດົນປານໃດ ບ່າວນົກເປົ້າກໍ່ເກີດ ຫງອມເຫງົາເສົ້າທຸກ ຢູ່ໃນໃຈຈິດຄິດຫາແຕ່ລູກສາວພະຍາເມືອງຄົນ ທີ່ຂາດໃຈຕາຍຕໍ່ຫນ້າຕໍ່ຕາ ຂອງຕົນຄາວນັ້ນ.

- ໂອ ! ຄວາມຮັກຊູ້ອ້ອນນອນບໍ່ມີໄທ ນີ້ຫລື ? ຄິດຢູ່ເລື້ອງຄາວຍາວ **ຍືດ**ເຍື້ອ ມິເວັ້ນ ນົກເຫັນບາງໃບຫນ້າ ວາຈາຍິ້ມອ້ອນນາງເດ**ຫຼອນຫາກ**ໄລຫ່າງເຈົ້າ ເຫງົາເສົ້າເຫງົາຊູວງ ແຫ່ເດ. ຍອນບຸບເພພີ່ເຄີຍສ້າງ · ນຳກັນມາແຕ່ປາງກ່ອນ ຄາດບໍ່ໄດ້ຢູ່ຊ້ອນນ້າງຫລ້າລູກພະອົງ ສົ້ນປະສົງຂອຍ ຂໍວອຍເມື່ອນຳສູ່ ພູ້ນແລ້ວ ຄິດຢູ່ດາຍເປົ່າລ້າ ນາງຫລ້າໄດ້ຈາກເຮົາ ແລ້ວນໍ ຍອນພະພໍ່ເຈົ້າເອົາໄພ່ໄລນາງ ຊາຍຂໍຂານຕ້າຍຕາງ ເຂົ້າຮ່ອມໂຄງລາຍແຕ້ມ ນາງຕາຍແລ້ວບໍ່ມີແວວຊີ່ຄືນຕ່າວ ຫົວລົມຫນາວພັດພາວ ຫົວໃຈຈາວປວດບໍ່ຫາຍ... ເຈົ້າເອີຍ ! ເມື່ອເຫັນລູກຊາຍຫງອມເຫງົາ ພໍ່ພະຍານົກເປົ້າ ກໍ່ຖາມ ນົກເປົ້ານ້ອຍຜູ້ເປັນລູກຊາຍ ຕອບພະຍາພໍ່ວ່າ ບໍ່ມີເລື່ອງຫຍັງ.

ໃນມື້ຫນຶ່ງນົກເປົ້ານ້ອຍບິນ ອອກຈາກຫ້ອງນອນຂອງຕົນໄປຈັບທີ່ງ່າຕົ້ນໄມ້ມະນີໂຄດ ແລ້ວອະທິຖານວ່າ:

-ມະນີໂຄດລ້ຳກ້ຳເກີ້ງອິນທາ ເຈົ້າເອີຍ ຊ່ອຍປຸນແປງກາຍເຮົາ ເປັນຄາບຄົນທັງສິ້ນ ກິນລົງໄປແລ້ວໃຫ້ແປງກາຍສົມດັ່ງ ຮູບຮ່າງຄົນເກີດຂຶ້ນ ແທນເປົ້າຊາດຕະກູນ.

ເມື່ອນົກເປົ້ານ້ອຍອ້ອນວອນແນວນັ້ນ ຕົ້ນໄມ້ມະນີໂຄດກໍ່ໄດ້ກົ່ງງ່າ ຫມາກທີ່ກິນລົງໄປແລ້ວກາຍເປັນຄົນລົງມາ ໃຫ້ທ້າວເປົ້ານ້ອຍສົມດັ່ງໃຈປາຖະຫນາ. ທ້າວເປົ້າຈຶ່ງອະທິຖານອີກຕໍ່ໄປ:

-ມະນີໂຄດລ້ານ**ກ້ານກິ່ງສານສີ**ສີຫນຶ່ງເປັນສັດສາ ສິ່ງສຽງເຮຮ້ອງ ສີສອງກິນລົງທ້ອງເປັນຄົນມະນຸດຊາດ ສີສາມກິນຫນຸ່ມແຫນນ ຕາຍແລ້ວເກີດຄືນ ຈິງລີ ?

ຍ້ອນມາເຖິງເຈົ້າພະຍາເມືອງຄົນ ນັບແຕ່ໄດ້ຈາກພະນະຄອນໄປ ອຳນາດຊັ້ນຜູ້ໃຫຍ່

ຈຶ່ງໄດ້ວ່າລາດຊະການແທນ ວາງລະບຽບຢ່າງເຄັ່ງຄັດ ຄົນໃນບໍ່ໃຫ້ອອກ ຄົນນອກ ບໍ່ໃຫ້ເຂົ້າ. ສ່ວນຊາກສົບຂອງລູກສາວພະຍາ ກໍ່ຍັງຄົງຮັກສາໄວ້ເປັນຢ່າງດີ. ມື້ໜຶ່ງ ມີຊາຍໜຸ່ມຄົນໜຶ່ງເດີນທາງມາແຕ່ໄກ ຂໍເຂົ້າມາໃນເມືອງ, ທະຫານຍາມສໍ້ຖາມ ມີທ່າທາງເປັນໜ້າສົງໄສ ທະຫານຈຶ່ງຈຸມຕົວໄປຂັງໄວ້ຢູ່ຄຸກຫຼວງ. **ຍ້ອນເຈົ້າພະຍາເມືອງ**ອອກເດີນທາງ ໄປສົ່ງນົກເປົ້ານ້ອຍເປັນເວລາຫຼາຍຟາຫລາປີແລວ ບໍ່ເຫັນກັບຕາວ ເສນາອາມາດຈຶ່ງຈັດພິທີສ່ຽງໂຊກຫາຜູ້ມາຄອງບ້ານສືບເມືອງແທນ **ໂດຍ**ເອົາພວງມະໄລແກວ່ງໄປ ຖ້າພວງມະໄລຕົກຄອງຄໍໃຜຜູ້ນັ້ນ **ຈະ**ໄດ້ເປັນເຈົ້າພະຍາ. ພວງມະໄລໄດ້ ລອຍກາຍຝູງຄົນທັງຫຼາຍເຂົ້າໄປຫາຄຸກຫຼວງແລວໄປຄອງເອົາຄໍຂອງຊາຍໜຸ່ມແປກໜ້າຄົນນັ້ນ ເມື່ອເປັນແນວນີ້ຂ່າວໄພ່ລາຊະດອນຈຶ່ງຍົກໃຫ້ຊາຍຄົນນັ້ນ ນັ່ງຄອງເມືອງເປັນເຈົ້າພະຍາແທນ.

ເມື່ອຊາຍຄົນນັ້ນໄດ້ນັ່ງເມືອງ ກໍ່ຊົງປະກາດຫາໝໍຢາມາປົວເອົາ ລູກສາວພະຍາ ທີ່ຕາຍໄປປາງກ່ອນນັ້ນ ໃຫ້ຄືນເປັນຄົນຄືເກົ່າ ຖ້າໃຜປົວໄດ້ຈະຍົກນາງໃຫ້ເປັນເມຍພ້ອມໃຫ້ເປັນເຈົ້າພະຍາແທນ. ບັນດາໝໍຢາຕ່າງໆກໍ່ລຽນແຖວກັນມາປິ່ນປົວເອົານາງຫວັງໃຫ້ມີຊີວິດຄືນມາ ແຕ່ກໍ່ບໍ່ມີໃຜສາມາດເຮັດໄດ້. ສຸດທ້າຍມີໝໍຢາໜຸ່ມນ້ອຍຄົນໜຶ່ງ ອາສາປິ່ນປົວ ລາວສັ່ງໃຫ້ສາວສະໜົມກົມມະວັງ ທີ່ເຝົ້າຢູ່ນັ້ນອອກນອກຈົນໝົດ ທັງຫຼາຍ ກໍ່ປະຕິບັດຕາມຄຳສັ່ງຂອງໝໍ. ເມື່ອຄົນອອກຈາກຫ້ອງໄປໝົດແລ້ວ ທາວຈຶ່ງຄ່ອຍເປີດ ຜ້າໄຫມຄຳ ປົກສົບນັ້ນອອກ...

- ໂອ້ ! ຄົນຕາຍໄຂ້ໂລກໄພໃດອື່ນເດນໍ ຕາຍມືນຕາຍິ້ມແຍ້ມ ຕົນຕົວເຈົ້າ ບໍ່ຫລ່າເຫຼືອງ ຕາຍສະອື້ນເສຽພະໄທໃຈຂາດ ຕາຍວາດນີ້ຄົງໄດ້ໄຖ່ຖາມ ຍົມພະບານເຈົ້າເອົາບັນຊີເຂົ້າຊື່ ແລ້ວບໍ່ ? ຕາຍບໍ່ມີໃຜຮັບຮູ້ ວິນຍານເຈົ້າເຫຼົ່າຍັງ ຢູ່ດາຍ. ບາຍເອົາໄດ້ຢາດີວິເສດກ່ອນມາ ມະນີໂຄດຄ່າລ້ານທານແລ້ວເກີດຄືນ ຂໍແຕ່ສິ່ງສັກສິດລ້ຳ ນຳວິນຍານມາສູ່ ເຂົ້າຢູ່ສິງເກົ່າເຄົ້າ ວິນຍານເຈົ້າຄັ່ງເດີມ ນີ້ທອນ !.

ແລ້ວລູກສາວພະຍາກໍ່ຄືນມາເປັນຄົນຄືເກົ່າ ຢ່າງບໍ່ໜ້າເຊື່ອ ຫລັງຈາກປິ່ນປົວນາງຄືນມາເປັນຄົນແລ້ວ ໝໍຢາໜຸ່ມກໍ່ອອກຈາກຫ້ອງ ພໍຫວິດປະຕູຫ້ອງ ກໍ່ ເລີຍເກີດມືດມົນອົນທະການອື້ນ ຝູງຄົນທັງຫຼາຍພາກັນແຕກຕື່ນ ເມື່ອຄວາມມືດຫາຍໄປໝໍຢາວິເສດຄົນນັ້ນ ກໍ່ຫາຍໄປນຳ. ຄາລູກສາວພະຍາຄືນເປັນຄົນມານີ້ ບ້ານເມືອງ ກໍ່ມີແຕ່

ຄວາມເບີກບານສຸກສະບາຍ ຕໍ່ມາມື້ໜຶ່ງ ຢູ່ໆກໍ່ໄດ້ຍິນສຽງປີ່ສຽງແຄນ ພ້ອມລະນາດຄ້ອງ ວົງເສບງັນຢ່າງໜາອອນຊອນ ແຕ່ຫາກບໍ່ເຫັນວ່າແມ່ນໃຜເປັນຄົນ ເສບບັນເລງບິດ ອັບບິດກ່ອນທີ່ແສນມ່ວນແນວນີ້. ສຽງນັ້ນດັງເຄື່ອນທີ່ໄປເລື້ອຍໆແລ້ວໄປຢຸດຢູ່ຕໍ່ໜ້າວັງຫຼວງ ເຮັດໃຫ້ເຈົ້າພະຍາເມືອງຊື່ນພະໄທ ເປັນຢ່າງມາກຕໍ່ເຄື່ອງມະໂຫລີເຫຼົ່ານີ້.

**ສຽງນັ້ນມິດໄປຊົ່ວຂະນະ ພັດມີສຽງແປກປະຫຼາດສັ່ນສະທ້ານຂຶ້ນຕໍ່ໜ້າບັນລັງ ພໍ່ພະຍາ...**

**- ຂໍແນບນ້ອຖວາຍຂາບລະອອງທູນ ກ່ອນເຍີ້ ເຈົ້າພະຍາເມືອງຄົນຜູ້ລີໄກກ້າ ພວກເຮົານີ້ນຳຂັນເຂົ້າ ສູ່ຂໍທີດານອນ ຕາມຮີດສິບສອງຄອງສິບສີ່ ຮີດຍີ່ຄອງຈຽງ ຝ່າຍຜູ້ວ່າຂາກໍມີ ພະຍານິກເປົ້າເຈົ້າໃຫຍ່ ທີ່ນະພານເປັນເຄົ້າ. ເມື່ອຮູ້ຈຸດປະສົງແນວນັ້ນເຈົ້າ ພະຍາເມືອງຄົນກໍ່ບໍ່ຂືນແຕ່ຕ້ອງຖາມເບິ່ງລູກສາວກ່ອນ ນາງຈະພໍໃຈແຕ່ງງານກັບ ລູກຊາຍຂອງທ່ານບໍ່.**

ທັງສອງຝ່າຍຕົກລົງເປັນໃຈກັນແລ້ວ, ໄພ່ຊຶ້ນພົນລະເມືອງແຫ່ງນະຄອນນິກເປົ້າ ກໍ່ໄດ້ແປງກາຍເປັນຄົນທັງໝົດ ແລ້ວປະກົດຕົວໃຫ້ເຫັນ. ໂອ້ ! ຄົນນະຄອນນິກເປົ້າ ມີແຕ່ຜູ້ງາມໆ ເຄື່ອງນຸ່ງຂອງຖືກໍ່ມີແຕ່ຜ້າໄໝ. ຜ່ານການໂອ້ລົມສົນທະນາກັນດອງຕໍ່ດອງ ຄືພະຍານິກເປົ້າ ແລະ ພະຍາເມືອງຄົນ ເວົ້າເຖິງເລື່ອງເກົ່າເລື່ອງຫລັງ ບ່າວໄພ່ທັງຫຼາຍຈຶ່ງຮູ້ໄດ້ວ່າ ພະຍາໜຸ່ມຜູ້ນີ້ທີ່ແທ້ກໍ່ແມ່ນພະຍາທີ່ຫາຍສາບສູນໄປ ໃນຫຼາຍສິບປີ ຫລັງນັ້ນເອງ ຍ້ອນເພິ່ນໄດ້ກິນໝາກໄມ້ມະນີໂຊດ ຈຶ່ງກັບກາຍມາເປັນໜຸ່ມຄືນໃໝ່. ໂອ້ ! ເກືອບສະແນງລະບໍ່ ພວກເຮົາໂລດຈັບເພິ່ນໄປຂັງຄຸກຕັ້ງດົນນານ ຖ້າບໍ່ມີການສ່ຽງ ບຸນວາດສະໜາຫາພະຍານັ່ງເມືອງ ແລະ ຖ້າພະຍານິກເປົ້າບໍ່ມາເວົ້າ ພວກເຮົາຄົງບໍ່ ຮູ້ຄວາມຈິງຕະຫຼອດໄປ. ຖັດຈາກນັ້ນມາພະຍາໄດ້ມອບເມືອງໃຫ້ລູກເຂີຍ ລູກສາວເປັນຜູ້ສືບຕໍ່ປົກຄອງ ພ້ອມໄພ່ຟ້າລາຊະດອນສາງຢູ່ກະທຳກິນ ດ້ວຍຄວາມຢູ່ເຢັນເປັນສຸກ. ສ່ວນພະຍາເອງແມ່ນໝົດກຳໝົດເວນ **ສະຫລະກິເຫຼດ**ຕັນຫາຕ່າງໆບວດເປັນອິນທາ ພ້ອມທັງພະຍານິກເປົ້າ ທັງສອງໄດ້ທະຍານເຫາະຂຶ້ນເມືອບຳເພັນສິນຢູ່ເມືອງສະຫວັນຊັ້ນຟ້າເພື່ອ

ໂຜດເອົາມະນຸດຜູ້ທີ່ຍັງຂີ້ໂທດສານານ ໃຫ້ເຫັນແຈ້ງແສງສະຫວ່າງຈາກຄອງທຳ. ແຕ່ນັ້ນເປັນຕົ້ນມາສອງນະຄອນກາຍເປັນພີ່ນ້ອງ ເພື່ອນມິດສະຫນິດແຫນ້ນໄປມາຫາສູ່ ຊ່ວຍເຫຼືອຊຶ່ງກັນແລະກັນມາເທົ່າຊົ່ວກາລະ**ນານ**.

● ເຊລະນອງ

24/VII
ຫ້າມຈຳໜ່າຍ





**ແຕ່**ກີ້ແຕ່ກ່ອນ ຢູ່ເຂດບ້ານສ້ານເມືອງຫຼີ່ເມືອງລອງຍັງມີຄອບຄົວຫນຶ່ງສານປີໃດເກີດລູກສີ່ ມີລູກຖີ່ປານເຫັດບໍ້ກາງຂອນ ຊອນຈົນກັນຄືແກ່ນຫມາກແຄງ ຜູ້ເປັນແມ່ເກີດເປັນວັນພັນ ເປັນນັ້ນມີແຕ່ວົ້ນນຳລູກ. ຄາວນັ້ນເຂົ້າຈະລ້ຽງລູກກໍ່ບໍ່ມີ ມື້ໃດກໍ່ໄດ້ຫຽວເລາະຂໍເຂົ້າ ນຳໄທເຮືອນເຫນືອ ຂໍເກືອນຳລູງເຮືອນໃຕ້ ຈົນໄທບ້ານໄທເມືອງພາກັນຫນ່າຍຊັງ ໄທເຮືອນຕັ້ງສິບຕັ້ງຊາວ ມີແຕ່ພໍ່ຜູ້ດຽວໄປຊອກຂອງກິນມາລ້ຽງ ວ່າແຕ່ເຮັດໄຮ່ກໍ່ເຮັດ ໄຮ່ເຂົ້າດໍໃສ່ປ່າແຂມໄດ້ປີລະຊາວໂບກ ເຮັດໄຮ່ເຂົ້າປີໃສ່ປ່າໂຄກໄດ້ປີລະສີ່ຢັງເຂົ້າຍັງສຸກບໍ່ເຕັ້ນຮວງກໍ່ໄດ້ຮູດ, ຢາກກິນຊີ້ນຊ້ຳບໍ່ທັນໄປຫາ ຢາກກິນປາຊ້ຳບໍ່ທັນໄປຊອກ ໄດ້ແຕ່ ພາລູກເຕົ້າກິນນອກເຫັດເຫືອກກັບຈື້ມັນກໍ ໄທບ້ານຈຶ່ງເອີ້ນໄທເຮືອນນີ້ວ່າ: "ລູກຫນໍ່ເຫືອກ"

ມື້ຫນຶ່ງຜົວເມຍພ້ອມກັບລູກທັງຫມົດພາກັນນອນສວາຍ ບັງເອີນລົມພັດເຂົ້າມາ ໃສ່ເຮືອນຖ້ວຍບ່ວງຢູ່ທັ້ງກໍ່ຕຸບກັນແລວຕົກລົງ. ເມື່ອໄດ້ຍິນສຽງຖ້ວຍບ່ວງຕົກລູກຫນໍ່ເຫືອກກໍ່ລູກເພື່ອບຂຶ້ນມາ ຫລຸບໄປເບິ່ງເຫັນແຕ່ຖ້ວຍບ່ວງເປົ່າແລ້ວກໍ່ສົງໄສວ່າພໍ່ແມ່ລັກກິນຂອງກິນຈົນຫມົດຈຶ່ງແຄ້ນເຄືອງໃຫ້ພໍ່ແມ່ແລວພາກັນຫຸມໄປໃສ່ພໍ່ແມ່ຜູ້ຂີ່ຜູ້ໂຄນຜູ້ຫລົກຜົມຜູ້ກັດຫີ້ນ ທັງຄັ້ນຄໍພໍ່ແມ່ຈົນຕາເຫຼືອກຕາ**ລານ** ໄທເຮືອນຢູ່ ບໍ່ໄດ້ຍິນກໍ່ພາກັນປຸ້ນມາຊ່ວຍພໍ່ແມ່ຫນໍ່ເຫືອກຈຶ່ງພົ້ນຈາກຄວາມຕາຍ.

ຈາກນັ້ນ ພໍ່ແມ່ຫນໍ່ເຫືອກໄດ້ລັກລົມກັນແລ້ວຕົກລົງ**ປົງ**ໃຈເອົາລູກທັງຫມົດໄປປ່ອຍ ປ່າຖິ້ມສາ.

ເຊົ້າມື້ຫນຶ່ງ ພໍ່ໄດ້ຮຽກເອົາລູກເຕົ້າທັງຫມົດມາແລ້ວເວົ້າວ່າ: ມື້ນີ້ພໍ່ຈະພາ ພວກລູກໄປຢາມປູ່ຢາມຍ່າຢູ່ເມືອງຄ່າງເມືອງກັງພຸ່ນ, ເຮົາໄດ້ຍ່າງຕັ້ງສອງຄືນທາງຜ່ານປ່າຕຶບດົງຫນາ, ຢູ່ບ້ານປູ່ເມືອງຍ່າບໍ່ອຶດເຂົ້າຢາກປາ ຫມາກເຕົ້າກໍ່ມີແກງຫມາກແຕງກໍ່ມີມາກ

ເມື່ອແດດພົງາຍຜູ້ເປັນພໍ່ໄດ້ເອົາເຂົ້າສານມາພົກໃສ່ປີກເສື້ອໃຫ້ລູກຜູ້ລະຫໍ່ຫນ່ອຍ ໄຂ່ໄກ່ແລ້ວກໍ່ພາລູກອອກຈາກບ້ານໄປເຂົ້າດົງ. ໄປຕາມໄປຈົນຄ່ຳຈຶ່ງໄປເຖິງດົງແຫ່ງຫນຶ່ງຜູ້ເປັນພໍ່ບອກໃຫ້ລູກທັງຫມົດນັ່ງເຊົາແຮງຢູ່ທີ່ນັ້ນແລ້ວບອກວ່າ ພວກລູກນັ່ງຢູ່ນີ້ຖ້າພໍ່ເດີ ! ພໍ່ໄປຖ່າຍຈັກບຶດຫນຶ່ງຈະມາ. ເວົ້າແລ້ວກໍ່ຍ່າງອອກໄປ ພໍໄປພົ້ນສາຍຕາຂອງພວກ ລູກແລ້ວກໍ່ແລ່ນຫລົບເຂົ້າປ່າຫນີຄືນເມືອບ້ານ.

ຝ່າຍລູກ ຄອຍພໍ່ກັບມາຈົນມືດກໍ່ບໍ່ເຫັນມີແຕ່ພາກັນເອີ້ນຫາພໍ່ຢູ່ວອຍໆ ບໍ່ນານ ຕາເວັນກໍ່ລັບພູລົງ ເຂົາພາກັນໄຫ້ເຫຼີໄຫ້ເຫຼືດ ຈົນກອງປ່າສະເທືອນດົງແລວກໍ່ແຕກໄປ ທາງໃຜທາງມັນຕາມປ່າ. ຄາວນັ້ນຜູ້ເປັນອາຍຄິດອິຕົນນ້ອງຊາຍຫຼາຫຼາຍຈຶ່ງຈູງແຂນນ້ອງ ແລວພາກັນຊັດເຊພະເນຈອນໄປຕາມປ່າ. ຕໍ່ມາເຂົ້າທີ່ພໍ່ເອົາໃຫ້ກໍ່ໝົດໄປ ຍັງເຫຼືອແຕ່ເຂົ້າກະແດ້ງເມັດດຽວທີ່ຕິດຢູ່ແຈເສື້ອ, ສອງອາຍນ້ອງໄດ້ແກະເອົາເຂົ້າເມັດນັ້ນມາປຽນ ກັນອົມ. ໄປຕາມໄປກໍ່ເຖິງຫ້ວຍໃຫຍ່ອັນໜຶ່ງ. ຜູ້ອາຍເວົ້ານຳນ້ອງວ່າ: ເຂົ້າເມັດນັ້ນໃຫ້ອ້າຍອົມສາແລ້ວຈະເຈັຍນ້ອງຂ້າມນ້ຳນີ້. ຜູ້ນ້ອງກໍ່ຄາຍເຂົ້າເມັດນັ້ນອອກແລ້ວຍື່ນໃຫ້ອ້າຍອົມ. ຈາກນັ້ນຜູ້ອ້າຍກໍ່ເຈ່ຍເອົານ້ອງຍັ່ງຂ້າມນ້ຳໄປ ຄາວໂຫຂ້າມນ້ຳໄປເຖິງກາງ ໄລຫຼອນຢຽບພະລາດຫີນໝື່ນຈຶ່ງພານ້ອງລົ້ມຫວ່ານລົ້ມກາງນ້ຳນີ້ແລ, ພໍ່ເມື່ອລຸກຂຶ້ນໄດ້ກໍ່ຫາວຫົ້ນເອົານ້ອງຊາຍແລ້ວຈູງແຂນກັນອອກມາບົກ ເມື່ອຮອດບົກຜູ້ນ້ອງໄດ້ຖາມເຂົ້າເມັດ ນັ້ນນຳອ້າຍ ຜູ້ອ້າຍເບິ່ງໜ້ານ້ອງຊາຍມິກໆຢູ່ຄາວໜຶ່ງແລ້ວຕອບວ່າ: ເຂົ້າເມັດນັ້ນໄດ້ຫລົງກືນຄາວພະລາດຫີນໝື່ນກາງໄລນ້ຳແລ້ວ ຜູ້ນ້ອງຄິດຄຽດຂຶ້ນຕໍ່ຜູ້ເປັນອ້າຍຫຼາຍຈຶ່ງເອົາຫີນເປົ່າແວ້ງ (ອາດແມ່ນຊື່ຫີນຊະນິດໜຶ່ງ) ທັບຫົວອ້າຍແລ້ວຊຸກອ້າຍລົງນ້ຳໃຫ້ໄຫຼລ່ອງ ນີ້ແລ.

ເມື່ອອ້າຍໄຫຼນ້ຳໄປຍັງເຫຼືອແຕ່ຕົນຜູ້ດຽວກໍ່ໄດ້ແຕ່ໄຫ້ເລາະຂຶ້ນເລາະລ່ອງຕາມ ແຄມນ້ຳນານສົມຄວນຈຶ່ງມີຍາຈຳສວນຜູ້ໜຶ່ງທີ່ຊອກເກັບຜັກຕາມແຄມນ້ຳ ໄປຈອບແລ້ວນຳເອົາເມືອຢູ່ສວນນຳ.

ພໍ່ແມ່ຢູ່ທາງບ້ານຄາວເຖິງຍາມໄດ້ເຂົ້າໃຫມ່ປາມັນມາແລ້ວກໍ່ເກີດຄວາມຄິດຮອດ ລູກເຕົ້າເປັນອັນມາກ, ມານີ້ໜຶ່ງຈຶ່ງໄດ້ຈີ່ເຂົ້າໃຫມ່ທາໄຂ່ຫອມແຫມ, ໜຶ່ງເຂົ້າຮາງ ແກງມັນເຜືອກອົ້ມ ເພື່ອເອົາໄປຕອນລູກເຕົ້າຢູ່ໃນດົງ.

ເມື່ອກະກຽມຢ່າງຄົບຄັນທັງຂອງກິນນ້ຳລິ້ນປອງແລ້ວສອງຜົວເມຍກໍ່ອອກຈາກບ້ານດຸ່ງເດີນໄປສູ່ດົງແຫ່ງນັ້ນ. ຄາວໄປເຖິງດົງແລ້ວໄດ້ເອົາເຄື່ອງໜາກຂອງກິນມາວາງ ໄວ້ທັງຮຽກຫາລູກວ່າ: ນອນລູກເຕົ້າຜູ້ເມົາປ່ານອນດົງ ລົງມາເຢີ ມາເຕົ້າພໍ່ແມ່ມາກິນອອຍຫົກປອງໜາ ມາກິນເຂົ້າຈີ່ທາໄຂ່ໄກ່, ເຂົ້າຮາງໃຫມ່ກັບນາງຕໍ່ໜຶ້ງຫອມ. ຄັນມາ ກິນອີ່ມແລ້ວໃຫ້ລູກເຕົ້າເມືອຢູ່ເຮືອນຊານ ເມືອຫຼ່ຳແລມານດາ ບິດາຜູ້ສູນລຽງ ພໍ່ແມ່ມີຄວາມ

ເຖົ້ານັບມື້ແວ່ ຄວາມແກ່ນັບມື້ຢາມ ເຈັບເປັນນັບມື້ມາກ ຄົນລູກເຕົ້າບໍ່ຫຼໍ່າຊ້ຳບໍ່ມີບ່ອນຄອງ ຄົນລູກເຕົ້າບໍ່ມອງຊ້ຳບໍ່ມີທີ່ເພິ່ງ...

ທັງຝ່າຍລູກເຕົ້າຜູ້ຍັງມີຊີວິດລອດເຫຼືອມາ ຄາວໄດ້ຍິນສຽງພໍ່ແມ່ກໍ່ພາກັນເຕົ້າຕອມມາ ຈອບເບິ່ງແລ້ວຕອບວ່າ:

- ກຸຍ ! ໆ ! ປ່ອງ ສອງພໍ່ແມ່ ຂຶ້ນແລ່ງລູກຍາວພໍ້ຮ້ອຍປ່າແລ້ວ ຂຶ້ນຂາລູກຍາວພໍ້ຮ້ອຍຂຽດແລ້ວ ຂຶ້ນຄີງຂອຍພໍຝູງຄວາໄຊແລ້ວ ເມື່ອຢູ່ບ້ານເຫັນຂຶ້ນແລ່ງໄຫບ້ານຊີມິນທາ, ເຫັນຂຶ້ນຂາໄຫເມືອງຊີຈາຄຳຫວງ, ຢູ່ປ່ານອນຄູ້ກໍ່ສະບາຍ ນອນຫງາຍໃຜບໍ່ຈົ່ມ ຣົ່ມຕົ້ນໄມ້ກໍ່ມີ ຍາມແດດດີກໍ່ຊຸ້ມ ຍາມຝົນກໍ່ຫຼີກ ຫວານອ່ອຍຫີກ ກໍ່ຫົ່ນນ້ຳຄາງຜາ ບໍ່ເດ, ເຂົ້າຈີ່ພອກໄຂ່ຫນາ ແຊບຊ່ຳຕາຫມາກກູ ບໍ່ເດ... ກຸຍ ! ໆ ! ໆ

ເມື່ອຍິນຄຳເວົ້າຂອງລູກແນວນັ້ນສອງຜົວເມຍກໍ່ໄດ້ແຕ່ເບິ່ງຫນ້າກັນດ້ວຍຄວາມ ໂສກເສົ້າ - ຜູ້ເປັນພໍ່ເກີດຄວາມໂມໂຫຍອນລູກເຕົ້າເປັນອັນມາກຈຶ່ງເອົາເຄື່ອງຫມາກ ຂອງກິນຄວ່າງຖິ້ມຕາມປ່າແລ້ວກໍ່ພາເມຍກັບຄືນບ້ານ.

ມາກ່າວເຖິງຜູ້ອາຍທີ່ໄຫຼນ້ຳໄປນັ້ນກໍ່ມີນາຍສະເພົາມາພໍ້ແລ້ວກູ້ເອົາໄປດູແລຈົນ ຊາຍຄົນນັ້ນໃຫຍ່ກາຫນາຊຶ່ນ ອາລົມດີມີປັນຍາສຽມ ຄັ້ງຫນຶ່ງນາຍສະເພົາກໍ່ຖາມເຖິງ ເລື່ອງລາວຂ່າວເຫດຂອງການເປັນມາຊາຍຄົນນັ້ນກໍ່ໄດ້ເລົ່າຄືນທຸກເລື່ອງລາຍຢ່າງເສັດສຽງ . ເມື່ອຊາບວ່າຊາຍຄົນນີ້ຢາກໄປຊອກຫານ້ອງຊາຍນາຍສະເພົາກໍ່ພາຂີ່ສະເພົາເລາະຂຶ້ນຕາມລຳນ້ຳ ຄາວໄປເຖິງທ່ານ້ຳແຫ່ງຫນຶ່ງ ກໍ່ພໍ້ກັບຍ່າເຖົ້າຄົນຫນຶ່ງ ເມື່ອຖາມກັນຮູ້ເລື່ອງລາຍປາຍຕົ້ນຄັກແລ້ວຍ່າເຖົ້າກໍ່ບອກນາຍສະເພົາທັງຫມົດຢູ່ແວ່ຢາມສວນ. ເມື່ອນັ້ນສອງອ້າຍນ້ອງກໍ່ໄດ້ມາພໍ້ກັນຄືນອີກ.

ເມື່ອຢູ່ນຳກັນໄດ້ພໍຄາວ ຍ່າຈຳສວນ ນາຍສະເພົາທັງຊາຍສອງຄົນກໍ່ໄດ້ແຮກກັນເປັນພີ່ເປັນນ້ອງ ຈາກນັ້ນເຂົາເຈົ້າກໍ່ໄດ້ມອບເງິນຄຳໃຫ້ຊາຍທັງສອງໄປໃຫ້ພໍ່ແມ່ຢູ່ທາງບ້ານ.

ຊາຍທັງສອງຂີ່ສະເພົາເມືອຈອດໄວ້ທ່ານ້ຳ ກອງບ້ານແລ້ວຂຶ້ນໄປຫາເຮືອນແຕ່ບໍ່ເຫັນພໍ່ແມ່ ຈຶ່ງໄດ້ເອົາເງິນຄຳຍັດໃສ່ບັ້ງໄມ້ໄຜ່ ສອດໃສ່ພື້ນເຮືອນໄວ້ແລ້ວກໍ່ອຳລາຊາວ ບ້ານກັບຄືນໄປຫາສະເພົາ.

ຝ່າຍພໍ່ແມ່ ຫລັງຈາກໄປນຳເອົາລູກຢູ່ປ່າບໍ່ໄດ້ ເມື່ອກັບມາຮອດເຮືອນກໍ່ຍິນໄທ ບ້ານຈ່າລືກັນເຖິງເລື່ອງລາວຂອງຊາຍທັງສອງ. ເມື່ອຊາບດັ່ງນັ້ນພໍ່ຊ້ຳເກີດຄວາມໂມໂຫປ່ອຍ

ດ່າຊາຍທັງສອງວ່າ: ໄມ້ໄຜ່ຕົ້ນບ້ານຕົ້ນເມືອງປານນີ້ຍັງເອົາມາຣັດສົ້ງຕີ້ນ ! ຈັ່ງແມ່ນຊາດຊົ່ວ ! ເວົ້າແລ້ວກໍ່ຈັບບັ້ງໄມ້ໄຜ່ຄວ່າງຖິ້ມ. ເມື່ອຖືກຄວ່າງເງິນຄຳໃນບັ້ງ ກໍ່ຊະຟົ້ງອອກ. ສອງຜົວເມຍຮີບພາກັນຫອບເອົາເງິນຄຳນັ້ນໄວ້ບໍ່ຄ້ານ ໄດ້ຫມົດແລ້ວກໍ່ແລ່ນໄລ່ຊັບລູກທັງສອງລົງໄປທ່ານ້ຳ ຄາວໄປເຖິງທ່ານ້ຳກໍ່ພຽງແຕ່ແລເຫັນສະເພົາໄປ ໄກຈົນສຸດຊົ່ວຕາ. ສອງຜົວເມຍໄດ້ແຕ່ຮອງຫາຈົນຄໍແຫບ ແຕ່ແລ້ວສະເພົາກໍ່ຍາຍ**ຫຍັບ**ເຂົ້າໄປລັບຮອມພູແດນໄກຊ້ຳ.

- ມາກາວເຖິງເຂົ້າຈີ່ທີ່ສອງຜົວເມຍຫວ່ານຖິ້ມເຕັມດົງນັ້ນກໍ່ກາຍ **ເປັນຫມາກ**ເຂົ້າຈີ່ນິລົງຈົນເທົ່າທຸກວັນນີ້.

- ເມື່ອສອງອ້າຍນ້ອງເຖົ້າແກ່ຕາຍໄປແລ້ວ ວິນຍານຂອງຜູ່ເປັນນ້ອງກໍ່ກາຍ ເກີດເປັນແມງວ້າງ ເມື່ອຮອດຍາມເຂົ້າໃຫມ່ປີໃດແມງວ້າງກໍ່ອອກມາຮ້ອງເປັນສຽງ ເປົ່າແວ້ງ ! ໆ ! ອ້າຍ... ! ໆ ດັ່ງສຽງຄາວເມື່ອໄຫ້ຫາອ້າຍຕອນເອົາຫີນເປົ່າແວ້ງທັບຫົວຍອນຫລົງກືນເມັດເຂົ້າກະແດງຄາວນັ້ນ ຈົນເທົ່າທຸກວັນນີ້.

● ພາບ ວິວສະຫວັນ



ຈິດຕະກຳ ຝາວັດຊຸບມຸງ ວຽງຈັນ



ພັນທະນາສອນ



ຜານ້ອງຕັ້ງຢູ່ທາງທິດເໜືອຂອງເມືອງແອດ (ຊຳເໜືອ) ໂດຍມີ ແມ່ນ້ຳ ແອດ ໄຫຼລອດອອກມາຢ່າງໜ້າເບິ່ງ, ແຕ່ສິ່ງມະຫັດສະຈັນກວ່າໝູ່ແມ່ນຜານ້ອງມີຮູບແມ່ຍິງກັບຜູ້ຊາຍຢູ່ຄຽງກັນໂດຍທຳມະຊາດບໍ່ໄດ້ມີຜູ້ໃດໄຟສະລັກຫລືໄປຄວັດໄວ້ກ່ອນເລີຍ...ເພາະມັນເປັນຜາໃຫຍ່ທີ່ສູງຊັນ, ເລື່ອງຂອງມັນກໍ່ມີຢູ່ວ່າ:

ແຕ່ກີ້ແຕ່ກ່ອນ ຜານ້ອງແມ່ນບ່ອນຢູ່ອາໄສຂອງພະຍາ ເງືອກ ຕົວໜຶ່ງຊື່ວ່າ: "ພະຍາຫົວແອດ" ຊຶ່ງມີອິດທິພົນ ຄວບຄຸມໝົດບັນດາອານາຈັກເງືອກທັງຫຼາຍທີ່ອາໄສຢູ່ຕາມແມ່ນ້ຳແອດອັນກວ້າງຍາວ ແລະ ສວຍສົດງົດງາມແຫ່ງນີ້.

ພະຍາເງືອກ "ຫົວແອດ" ມີລູກສາວຄົນໜຶ່ງຊື່ວ່າ "ນາງຜານ້ອງ" ເພາະ ນາງເງືອກນ້ອຍໂຕນີ້ໄດ້ກຳເນີດເກີດມາຢູ່ກັບຜານ້ອງນີ້ເອງ.

ເມື່ອນາງຜານ້ອງໃຫຍ່ກ້າໜ້າບານຂຶ້ນມາ, ຖືກເນື້ອສາວຄືງຍາວໄດ້ແນວພໍ່ແນວແມ່ຊື່ສຽງຄວາມງາມທາງອັນປຽບບໍ່ໄດ້ຂອງນາງກໍ່ໄດ້ແຜ່ກະຈາຍໄປສູ່ເຂດແຄວນແດນ ພະຍາເງືອກທັງຫຼາຍບໍ່ວ່າຢູ່ໃກ້ ແລະ ໄກຕ່າງກໍ່ກ່າວຂານກັນວ່າລູກສາວພະຍາຫົວແອດ ງາມເປັນເລີດ, ບໍ່ມີນາງເງືອກເມືອງໃດປຸນປຽບໄດ້ ຈຶ່ງເຮັດໃຫ້ບັນດາພະຍາເງືອກ ຈາກເຈັດດ່ານດາວ, ຈາກເກົ້າສິບມະຫາວັງຫລັ່ງໄຫຼກັນມາເບິ່ງ, ຈົນວ່າໃນລະຫວ່າງນັ້ນແມ່ນ້ຳແອດ, ນ້ຳມາຝົດສະໜັ່ນຟັ່ນເຟືອນເປັນຟອງບໍ່ຂາດ, ເຮັດໃຫ້ນ້ຳຂຸ່ນກິນບໍ່ໄດ້ ໃຊ້ບໍ່ເປັນ ການລ່ອງລອຍເຮືອແພຂອງຜູ້ຄົນກໍ່ໄດ້ຢຸດສະງັກໄປຫຼາຍວັນເຕີບ. ບັນດາ ພະຍາເງືອກທັງຫຼາຍທີ່ມາເຫັນນາງຜານ້ອງງາມລື່ນຄຳຊາລື, ຂະໜາດວ່າບໍ່ທັນໄດ້ປາກໄດ້ລົມນຳນາງພໍຄຳ, ພໍແຕ່ມາບເຫັນຊື່ໆ ກໍ່ໃຈຊິຫລຸດຊິຂາດແລ້ວ, ບາງໂຕກໍ່ຫລົງລົ້ມຕັກຫງາຍລົງກັບບ່ອນ, ບາງໂຕກໍ່ຈົ້ມຕາຄາງກັບທີ່.

ຜູ້ເປັນແຮງກວ່າໝູ່ແມ່ນລູກພະຍາເງືອກ "ຜາລ້ານ" ຈາກນ້ຳໃຫຍ່ເມືອງແຖງ ຫຼົງຄວນຄາງອອກມາຕໍ່ນາງວ່າ: " ໂອນໍ... ນາງຜານ້ອງເອີຍ, ຕໍ່ໃຫ້ສິບນາງຟ້າ ຢູ່ນ້ຳ

ຣ່ຽງເມືອງຫລາ... ຣຽມພຸ່ມ ທັງລູກພະຍາຜານັ້ນເຈັດຕົນບໍ່ທຽມນ້ອງ..." ທ້າວຜາລານມັກນາງຜາມ້ອງແຮງຈົນຂານອາສາຫຼາຍຢ່າງ ກິນກໍ່ຊິປ້ອນ, ນອນກໍ່ຊິກ່ອນ, ຍ່າງກໍ່ຊິອຸ້ມຄຳຕື້ບໍ່ໃຫ້ເຄືອງ, ເປັນຕາຍຮ້າຍດີແນວໃດກໍ່ຢ່າ, ຖ້າບໍ່ໄດ້ນາງຜາມ້ອງ ເປັນເມັຍຊາດນີ້ຊິຂໍຕາຍດີກວ່າແລະ ຂໍບໍ່ກັບໄປນະຄອນຜາລານ ບ້ານເກີດຂອງຕົນເອງເປັນ ອັນຂາດ.

ຜູ້ທີ່ສອງທີ່ຫລົງມັກນາງຜາມ້ອງຈົນບໍ່ມີຫີບຢູ່ດີກິນໄດ້ແກ່ ລູກພະຍາເວືອກ " ຜາຖື້ " ທ້າວຜາຖື້ກໍ່ວ່າຄວາມດຽວ ຖ້າບໍ່ໄດ້ນາງຜາມ້ອງ ໄປເປັນເມັຍຊາດນີ້ຕາຍກໍ່ຢ່າມັນ,ແລະຂໍຂານຮັບຂານລອງກັບນາງຜາມ້ອງທຸກອັນພັນຢ່າງ ຄວາມເວົ້າຂອງທ້າວຜາຖື້ ເວົ້າໃສ່ນາງຜາມ້ອງ ຈົນມີສຽງຊ່າລືກັນສືບມາເຖິງເທົ້າທຸກວັນນີ້ວ່າ: "ຜາມ້ອງຂວັນແພງ ຣຽມເອີຍ ! ບໍ່ໄດ້ນ້ອງໄປພ້ອມຕາຍຂວ້າອ້າຍບໍ່ແຫນງ ບໍ່ໄດ້ຂວັນແພງໄປ ຕາຍແລ້ງອ້າຍບໍ່ຈົ່ມ... ຖ້າແມ່ນຕາຍງຸ່ມນ້ຳກະຕາງໃຫ້ຊຸ່ມເຢັນສາເຢີ ".

ນາງຜາມ້ອງເຂົ້າໃຈດີທີ່ມີສອງຄົນມາມັກແນວນີ້, ກໍ່ບໍ່ຊ່າງຈະຕັດສິນໃຈເອົາຜູ້ໃດດີ, ເພາະວ່າຜູ້ໃດກໍ່ແມ່ນລູກພະຍາ, ພະຍາຜາລານ ກໍ່ມີອິດທິພົນເບື້ອງຕາວັນອອກ, ແລະພະຍາຜາຖື້ກໍ່ມີອິດທິພົນເບື້ອງຕາວັນຕົກ ໃນເມື່ອຕັດສິນໃຈດ້ວຍຕົນເອງບໍ່ໄດ້ແລ້ວຈຶ່ງເຂົ້າປຶກສາຫາລືນຳພໍ່ແມ່ເພື່ອຂໍຄວາມເຫັນ.

ພໍ່ແມ່ຂອງນາງຜາມ້ອງກໍ່ຕັດວ່າສຸດແລ້ວແຕ່ໃຈ, ແຕ່ໃຫ້ເອົາໃຈໃສ່ສິ່ງສຳຄັນຄືວ່າ : ແມ່ນໃຜມີຫມູ່ຄູ່ຫຼາຍ ມີສະຫມອງດີໃຫ້ເອົາຜູ້ນັ້ນ (ມີຫມູ່ຄູ່ຫມາຍເຖິງຄົນໃຈກວ້າງ ສະຫມອງດີມີປັນຍາແມ່ນມີອະນາຄົດ) ແລະ ສອງມາຕອງເອົາຜູ້ເກັ່ງກາສາມາດ ເພື່ອສືບເຊື້ອປົກຄອງອານາຈັກເວືອກຫົວແອດຕໍ່ໄປ.

ເມື່ອທັງສອງຜູ້ບ່າວຄື: ທ້າວຜາລານກັບທ້າວຜາຖື້ຮູ້ຈຸດປະສົງຂອງພໍ່ແມ່ນາງຜາມ້ອງແລ້ວ ກໍ່ຈຶ່ງປະກາດສົງຄາມຕໍ່ສູ້ກັນ, ຜູ້ໃດເກັ່ງແມ່ນຜູ້ນັ້ນໄດ້ ໃຜມີລິດມີເດດຜູ້ນັ້ນຊະນະ. ຈາກນັ້ນ ທ້າວຜາຖື້ກໍ່ໄດ້ອອກປະກາດເກັບເກນເອົາບັນດາເວືອກນ້ອຍເວືອກໃຫຍ່ ເບື້ອງຕາວັນຕົກມາຫມົດເພື່ອມາລົບກັບທ້າວຜາລານໃຫ້ໄດ້. ຝ່າຍທ້າວຜາລານກໍ່ສັ່ງການເປັນການໃຫຍ່ໃຫ້ເວືອກທຸກໂຕທີ່ເປັນມິດກັບຕົນຢູ່ເບື້ອງຕາວັນອອກໃຫ້ມາຊ່ອຍລົບຍາດນາງຜາມ້ອງຄັ້ງນີ້.

ກ່ອນຈະອອກສູ່ສົງຄາມ, ພະຍາຜາລ້ານຊຶ່ງເປັນຜູ້ສະຫລາດ, ໄດ້ເອີ້ນ ທ້າວ ຜາລ້ານລູກຊາຍຂອງຕົນມາພົບແລ້ວຊີ້ແຈງວ່າ: " ຈະອາໄສແຕ່ກຳລັງຕົນເອງລູກຈະ ເສຍໄຊໃຫ້ທ້າວຜາຖີ້, ດັ່ງນັ້ນເພື່ອຮັບປະກັນໄຊຊະນະຄັ້ງນີ້, ລູກຕ້ອງໄປ " ຂອດສ່ຽວ " ນຳຜູ້ພວກ (ຊົນເຜົ່າໜຶ່ງຂອງຊາວລອງແອດ) ຜູ້ພວກເປັນຄົນກ້າຫານຊານໄຊ ມີນ້ຳໃຈສັດຊື່, ພວກເຂົາມັກໃຊ້ໜ້າໜ້ອງເປັນອາວຸດ-ໜ້າໜ້ອງແມ່ນອາວຸດທີ່ເງືອກທຸກ ໂຕຢ້ານກົວ, ໃຜຖືກໜ້າໜ້ອງແລ້ວຕ້ອງຕາຍເພາະປົວບໍ່ໄດ້ ".

ພາຍຫລັງໄດ້ຮັບຄວາມແນະນຳຈາກພໍ່ແລ້ວ, ທ້າວຜາລ້ານກໍ່ແປງຮ່າງເປັນຄົນ,ເຂົ້າມາບ້ານຂອງຊາວຜູ້ພວກ, ທ້າວຜາລ້ານໄດ້ເຂົ້າມາພົບພໍ່ "ເຈົ້າກວານ" (ຫົວໜ້າເຜົ່າຜູ້ພວກ) ແລະ ໄດ້ສະເໜີຈຸດປະສົງຂອງຕົນຕາມທີ່ພໍ່ໄດ້ແນະນຳມາ.

ເຈົ້າກວານ, ຫົວໜ້າຜູ້ພວກເມື່ອຊາບເຖິງຈຸດປະສົງ ແລະ ຮູ້ວ່າແຂກຜູ້ມາຫາແມ່ນລູກພະຍາຜາລ້ານ, ກໍ່ເກີດໂມໂຫຂຶ້ນກັບບ່ອນ ແລະ ອະດີດເກົ່າຄາວຫລັງກໍ່ຟື້ນຂຶ້ນ ໃນຄວາມຊົງຈຳທັນທີ ເພາະສາມສິບປີຫລັງ, ສະໄໝເປັນບ່າວ, ພະຍາຜາລ້ານກໍ່ເຄີຍໄດ້ຂອດສ່ຽວກັບຊາວຜູ້ພວກເທື່ອໜຶ່ງແລ້ວ, ພາຍຫລັງໄປຮົບສົງຄາມກັບພະຍານ້ຳມາ -(ເງືອກ) ເພື່ອຍາດນາງສິບສາມລູກສາວເງືອກທີ່ມີຄວາມງາມໃນປາງກ່ອນ ເມື່ອລົບຊະນະພະຍານ້ຳມາໄດ້ແລ້ວ, ເຈົ້າກວານກໍ່ຫາວ່າພະຍາຜາລ້ານເປັນຜູ້ທີ່ລະຍຶດຕໍ່ສັນຍາຂອດສ່ຽວ ຄືວ່າສິບຫ້າປີກ່ອນນີ້ໄດ້ມີເງືອກຫອນຂຽວຫອນລາຍມາເອົາເດັກນ້ອຍຜູ້ພວກ ຕາຍສອງຄົນ. ເງືອກຫອນຂຽວຫອນລາຍມີແຕ່ເງືອກຕາເວັນອອກທີ່ຢູ່ໃຕ້ອຳນາດຂອງພະຍາຜາລ້ານທັງນັ້ນ, ສ່ວນເງືອກນ້ຳແອດນ້ຳມາມີແຕ່ເງືອກຫອນສີ້ວຫອນແດງ, ເວລາ ເດັກນ້ອຍຕາຍດິກນ້ຳນັ້ນກໍ່ມີຊາວບ້ານຫຼາຍຄົນເຫັນກັບຕາວ່າແມ່ນເງືອກຫອນຂຽວຫອນລາຍມາເອົາ-ການເຂົ້າໃຈຜິດດັ່ງກ່າວໄດ້ກາຍມາເປັນການບາດໝາງຈົນໄປສູ່ການຕັດສຳພັນໄມຕີກັນລະຫວ່າງຊາວຜູ້ພວກ ທີ່ມີຕໍ່ເງືອກຜາລ້ານ ຕັ້ງແຕ່ນັ້ນມາ.

ເມື່ອບໍ່ໄດ້ຂອດສ່ຽວຕາມປະສົງຄືແນວນັ້ນ, ທ້າວຜາລ້ານກໍ່ກັບຄືນໄປລາຍງານ ລາຍລະອຽດທັງອຸປະສັກທີ່ບໍ່ໄດ້ຂອດສ່ຽວໃຫ້ພະຍາພໍ່ຂອງຕົນຟັງ. ເມື່ອພະຍາຜາລ້ານໄດ້ຟັງຄຳລູກກ່າວແລ້ວກໍ່ເກີດຄວາມເຫັນໃຈອອກມາ ແລະ ໄດ້ກ່າວຄວາມຈິງຕໍ່ລູກຟັງວ່າ: ການທີ່ສ່ຽວ ເຈົ້າກວານເຂົ້າໃຈຜິດແນວນັ້ນກໍ່ມີເຫດຜົນຢູ່... ເພາະວ່າພາຍຫລັງພໍ່ໄດ້ ນາງສິບສາມມາເປັນເມຍຍອມການຊ່ອຍເຫຼືອຂອງສ່ຽວເຈົ້າກວານພວກນີ້ແລ້ວ... ພໍ່ກໍ່ບໍ່ຄ່ອຍ

ໄດ້ໄປຢາມເຂົາ, ຕ່າງເຫີນເຂົາ... ອັນຮ້າຍແຮງກວ່າໝູ່ແມ່ນພວກສັດຕູຄູ່ອາຄາດ - ຂອງພໍ່ທີ່ພ່າຍແພ້ໄປແລ້ວນັ້ນ... ພັດບໍ່ຍອມຢູ່ຊື່ໆ... ພວກມັນປອມເປັນເງືອກຫອນຂຽວ ແປງຕົວເປັນເງືອກຫອນລາຍໄປຫຼອກກວນ ແລະ ຊອກກິນຄົນລ່ອງນ້ຳແອດ, ລ່ອງນ້ຳມ້າ... ເຮັດໃຫ້ເພື່ອນມິດສ່ຽວເຫີຍຂອງພໍ່ເຂົ້າໃຈຜິດໄປໝົດ... ບັດນີ້ເຖິງຄາວ ທີ່ພໍ່ຕ້ອງອອກໂຮງໄປຊີ້ແຈງເອງ !"

ຫລັງຈາກນັ້ນພະຍາຜາລານກັບລູກຊາຍກໍໄດ້ໄປພົບປະເຈລະຈາເປັນມິດທີ່ດີກັບເຈົ້າກວ້ານຄືນໄດ້ສຳເລັດ, ເຈົ້າກວ້ານກໍເຂົ້າອົກເຂົ້າໃຈເຖິງເລ່ກົນອຸບາຍຂອງສັດຕູທີ່ມີຕໍ່ສຳພັນທະພາບຂອງພວກຕົນ. ແລະທັງໄດ້ກ່າວທວນຄືນເຖິງຄຳສັນຍາສາມຂໍ້ເພື່ອສືບຕໍ່ເປັນສ່ຽວກັນຕໍ່ໄປ.

<u>ຂໍ້ໜຶ່ງ</u>: ຜູ້ພວກໄປທາງນ້ຳບໍ່ໃຫ້ເງືອກກິນ.

<u>ຂໍ້ສອງ</u>: ໄປຫາກິນທາງນ້ຳບໍ່ໃຫ້ຄືນເຮືອນມາເປົ່າ.

<u>ຂໍ້ສາມ</u>: ຍາມທ່າເປົ່າໃຫ້ເງືອກຊອຍເປັນເຮືອເປັນແພ (ທ່າເປົ່າ - ຍາມ ຢາກຂ້າມນ້ຳ) ພະຍາຜາລານພ້ອມກັບລູກຊາຍພາກັນພູມໃຈຍິ້ມຮັບຄຳສັນຍາທີ່ດີນັ້ນໄວ້ນຳກັນ ນັບເປັນເວລາດົນນານ ທັງໄດ້ກ່າວສັນລະເສີນສ່ຽວເຈົ້າກວ້ານທີ່ຍັງຈົດຈຳໄດ້ທຸກຂໍ້ ທຸກຄວາມ. ຕັ້ງແຕ່ນັ້ນມາ, ຜູ້ພວກລ່ອງນ້ຳແອດຈຶ່ງໄດ້ກາຍເປັນສ່ຽວກັບເງືອກຜາລານ , ແລ້ວກໍກາຍເປັນທີ່ເຊື່ອຖືກັນມາວ່າຜູ້ພວກໄປທາງນ້ຳເງືອກບໍ່ກິນຈັກເທື່ອ ແລະ ກໍ່ມີຄວາມປອດໄພສະເໝີ, ບາງບ່ອນຈິ່ງຊາກັນວ່າຂະໜາດຍາມຂ້າມນ້ຳເວລາບໍ່ມີເຮືອບໍ່ມີແພ , ຕົວເງືອກກໍໄດ້ມາກັບເພດເລື້ອມຕາເປັນເຮືອໃຫ້ ຜູ້ພວກຂີ່ຂ້າມນ້ຳ ຫລື ວ່າໄປຫາປາຕຶກເບັດຄວ່າງແຫກໍມັກເຊື່ອກັນວ່າຜູ້ພວກໄດ້ປາຫຼາຍກວ່າໝູ່ ເພາະມີສ່ຽວເປັນເງືອກ ຄອຍບັນຊາຊ່ວຍເຫຼືອຢູ່ທາງນ້ຳ.

ເມື່ອຮອດມື້ນັດໝາຍເຮັດເສິກກັບເງືອກຜາຖີ້, ຊາວບ້ານຜູ້ພວກທີ່ຢູ່ລ້ອງນ້ຳ ແອດຕ່າງກໍຖືໜ້າໜ້ອງມາເຕົ້າໂຮມກັນຢູ່ທີ່ແຄມນ້ຳຜານອງ.

ສົງຄາມລະຫວ່າງເງືອກຜາລານກັບເງືອກຜາຖີ້ຍາດນາງຜານອງໄດ້ລະເບີດ ຂຶ້ນຈົນສະເທືອນຟ້າ ສະເທືອນດິນ ສຽງມັນສະໜັ່ນສັ່ນຄາງດັງປານສຽງຟ້າຮ້ອງ. ວັງນ້ຳ -

ສະເທືອນຟ້າ ສະເທືອນດິນ ສຽງມັນສະໜັ່ນສັ່ນຄາງດັງປານສຽງຟ້າຮ້ອງ. ວັງນ້ຳໃຫຍ່ຕໍ່ໜ້າຜານ້ອງກາຍເປັນຄື້ນເປັນຟອງໃຫຍ່ທີ່ພູເຂົາ, ເບິ່ງພວກມັນກຽວກັນ, ກຸ້ມກັນເປັນເລົາໆຂຶ້ນ, ບາງໂຕຖືກບາດເຈັບກໍພຸ່ງຕົວຂຶ້ນສູງ ພຽງປາຍໄມ້, ເບິ່ງຫອນມັນແດງມາບມາບ ປານແສງຕາເວັນເດືອນຫ້າ. ບາງໂຕໃຊ້ກຳລັງແຮງໃສ່ຄູ່ຕໍ່ສູ້ພຸ່ງໂຕພິດເປົ້າໝາຍກາຍໄປຕົກໃສ່ກາງປ່າດົງເຮັດໃຫ້ຕົ້ນໄມ້ຍູງໄມ້ຍາງແຖວນັ້ນລົ້ມຫັກເປັນແຖວໆ ປ່າດົງແຄມນ້ຳບາງບ່ອນກາຍເປັນໂຄກ, ຫຼາຍໂຕຖືກເຈັບໜັກກໍໜີໄປລົ້ມນອນເຈັບຢູ່ຕີນ ພູບ່ອນໄກໆ ຊຶ່ງຕໍ່ມາກໍເລີຍມີຊື່ຕິດປາກຊາວບ້ານມາເຖິງປັດຈຸບັນນີ້ວ່າ: ລອງເງືອກລີ້ " (ຢູ່ໃຕ້ຜານ້ອງ).

ການຕໍ່ສູ້ໄດ້ດຳເນີນເປັນເວລາເຈັດມື້ເຈັດຄືນ, ຍັງບໍ່ໝົດ, ແຕ່ກໍ່ຮ້ອຍລົງຫຼາຍແລ້ວ ຍ້ອນວ່າກຳລັງພົນເງືອກຂອງທ້າວຜາຖີ້ ຕາຍນັ້ນບໍ່ຖ້ວນຍ້ອນຖືກໜ້າໜ້ອງຂອງພູພວກ ທີ່ລຽນກັນຢູ່ທາງບົກຍິງສຸ່ມມາໃສ່ຢ່າງບໍ່ຂາດສາຍສ່ວນກຳລັງຂອງທ້າວຜາລານຍັງແຂງແຮງຢູ່ເພາະມີສຽວພູ້ພວກຊ່ວຍແຕ່ກໍເຈັບມະນິງພິງພິດເປັນຮອຍໆ ເບິ່ງນ້ຳແອດໃນໄລຍະນັ້ນບໍ່ເປັນອັນກິນອັນໃຊ້, ເພາະນ້ຳເຕັມແຕ່ເລືອດຂອງທະຫານເງືອກ, ກິ່ນເໝັນຄາວ ຈາກເງືອກຕາຍໄທບ້ານແຖບນັ້ນກໍເກືອບຢູ່ບໍ່ໄດ້ກິນບໍ່ເປັນ.

ໃນທີ່ສຸດ, ທ້າວຜາລານກໍເປັນຜູ້ຊະນະ ແລະ ໄດ້ແຕ່ງດອງກັບນາງຜານ້ອງຢ່າງສົມຫວັງ, ສ່ວນ**ທ້າວ**ຜາຖີ້ຜູ້ເສຍໄຊ ແລະ ທັງໄດ້ຮັບບາດເຈັບກັບໄປນັ້ນໄດ້ຝາກຄວາມ ອາຄາດໄວ້ກັບທ້າວຜາລານວ່າ: ໃຫ້ເຈົ້າຮັກສານາງຜານ້ອງໄວ້ໃຫ້ດີ, ຖ້າຂ້ອຍຫາແຮງໄດ້ເມື່ອໃດຂ້ອຍຈະດັ້ນ (ດູດພື້ນດິນ) ຕັ້ງແຕ່ຜາຖີ້ໃຫ້ຊອດໃສ່ຜານ້ອງໃຫ້ໄດ້ ".

ເມື່ອທ້າວຜາຖີ້ປົວບາດແຜດີແລ້ວກໍລັກດູດພື້ນດິນ ຈາກຜາຖີ້ກະວ່າໃຫ້ຊອດໃສ່ກາງຜານ້ອງຕາມຄວາມແຄ້ນ ແລະ ຄວາມຮັກຂອງຕົນທີ່ມີຕໍ່ນາງ ຜານ້ອງ. ແຕ່ແລ້ວເມື່ອ ດູດມາໄດ້ຫຼາຍຮ້ອຍຫຼັກຕົນກໍເລີຍເຮັດເສຍລັບ ທ້າວຜາລານຮູ້ກ່ອນແລ້ວຈຶ່ງສັ່ງໃຫ້ ກຳລັງເງືອກຂອງຕົນດູດພື້ນດິນລັດຫາທ້າວຜາຖີ້ ພໍດີມາພໍ້ກັນຢູ່ທາງກ້ຳເໜືອສຸດຂອງ ແມ່ນ້ຳແອດຈຶ່ງເກີດລົບເລວກັນຂຶ້ນເປັນຄັ້ງທີສອງ. ທ້າວຜາຖີ້ບໍ່ແພ້ທ້າວຜາລານຄືເກົ່າ, ຄິດລະອາຍ ແລະ ເສຍກຽດສັກສີ ບໍ່ຍອມກັບຄືນໄປຜາຖີ້ເລີຍຂໍລີ້ຊ່ອນປ່ອນຕົວຢູ່ຕາມ ລຳນ້ຳຫ້ວຍທາງເໜືອ (ບ່ອນທ້າວຜາຖີ້ລີ້ຊ່ອນຢູ່ແຕ່ກ່ອນນັ້ນ, ມີຊື່ມາເຖິງປັດຈຸບັນນີ້ວ່າ: ເມືອງຊ່ອນ).

ສ່ວນທ້າວຜາລ້ານ ກັບນາງຜາມ້ອງກໍໄດ້ເປັນຄູ່ຜົວແກ້ວເມຍທິບສືບຕະກູນ ແລະ ກໍໄດ້ເປັນພະຍາເວືອກປົກຄອງອານາຈັກນ້ຳແອດສືບມາຢ່າງບໍ່ມີເວືອກຕົວໃດການາຍຽບຢ່ຳປາລະມີໄດ້.

● ເຕມທະນູ ຮຸນພົນພັກດີ



ຈິດຕະກຳ ຝາວັດຊູບມຸງ ວຽງຈັນ



ພັນທະນາສອນ


ໄຊວິເສດ

ແຕ່ນານມາແລ້ວ ຍັງມີພະຍາເມືອງໜຶ່ງ ມີອຳນາດຍິ່ງບໍ່ແພ້ ຕື່ນຢາກລວຍເງິນຄຳ ຈຶ່ງທຳຊຸບາຍກອບໂກຍຊັບສິນຂອງ ດິນດອນ ຕອນນ້ຳ ລຳໄມ້ ໄຮສວນ ສ້າງແຕ່ເລື່ອງ ບໍ່ນ່າຍຄາຍບໍ່ແລ້ວເປັນຈັກເທື່ອ. ຍັງບໍ່ແລ້ວເທົ່ານັ້ນໃຜມາກາຍໜ້າບ້ານພະຍາ ໃຫ້ເສຍຄ່າສິບສະຕາງ, ໃຜຍ່າງກາຍຫລັງເຮືອນໃຫ້ເສຍຄ່າສອງເບ້ຍ, ໃຜເສຍເງິນບໍ່ໄດ້ ໃຫ້ເອົາໄກ່ມາຕໍ່ຕຳ, ໃຜເສຍຄ່າບໍ່ໄດ້ໃຫ້ຈຳຄວາຍສາມນ້ອງ ກອງຫຍ້າໄພ່ຣອຍຈານ ຊາວບ້ານ ຊາວເມືອງກໍ່ເດືອດແຄ້ນແໜ່ນໃຈນຳພະຍາຄົນນີ້.

- ມາເຖິງວັນໜຶ່ງ ກໍ່ມີຊາຍຕ່າງບ້ານທວານຕ່າງສວນເດີນຈາກແດນໄກ ດັ້ນມາເຖິງເມືອງນັ້ນກໍ່ໄປຜ່ານເຂດເຮືອນພະຍານີ້ແລ. ເມື່ອເຖິງເຮືອນພະຍາຊາຍຄົນນັ້ນຊ້ຳຂໍແວ່ແຮມຄືນ ຈັກຄືນແລ້ວກໍ່ຈະດຸ້ງເດີນໄປໜ້າ, ຝ່າຍພະຍາເຫັນວ່າຕົນຈະໄດ້ເງິນ ຄຳດັ່ງວ່ານັ້ນກໍ່ຕົກລົງໃຫ້ຊາຍແວ່ແຮມຄືນນຳ.

ເມື່ອຄ່ຳມາ ຊາຍຄົນນັ້ນກໍ່ທັກທາຍເລື່ອງລາວຂ່າວເຫດ ທັງເວົ້າວ່າ ຕົນຍັງ ຈະໄດ້ດຸ້ງເດີນໄປທາງໜ້າອີກ, ຂອນເດີກມາແລ້ວ ຊາຍນັ້ນກໍ່ຫຼອນຖາມພະຍາວ່າ: ຢູ່ເຂດນີ້ມີບ່ອນໃດແດ່ທີ່ເປັນມະຫາສັກຫຼັກເມືອງ ບ່ອນເຂັດຢ້ຳຄ່ຳບໍ່ໃຫ້ຫຽວດຽວບໍ່ໃຫ້ຜ່ານ ພະຍາເມື່ອຊາຍນັ້ນຖາມດັ່ງນີ້ກໍ່ມີຄວາມແປກໃຈຈຶ່ງຖາມວ່າ: ຊັ້ນເຈົ້າຖາມຫາບ່ອນ ແນວນັ້ນເຮັດຫຍັງ ? ຊາຍນັ້ນຕອບ: ໂອ ! ອັນວ່າ ຂ້ານ້ອຍນີ້ຜູ້ຊ່ຳຮານປານເດັກບໍ່ເຄີຍຖາມຍອມວ່າຍາຫານເປັນຜູ້ໃຫຍ່ໄມ້ໂດດ ພໍເປັນທີ່ເພິ່ງໃຈໄວ້ເມື່ອໄດ້ຈຶ່ງທູນເວົ້າແນວນີ້ ພະຍາແຮງແປກໃຈຈຶ່ງຖາມຊ້ຳອີກ: ຊັ້ນເຈົ້າຖາມຫາບ່ອນແນວນີ້ເຮັດຫຍັງ ລອງເວົ້າສູ່ຟັງເບິ່ງດູ. ຊາຍນັ້ນ: ອັນວ່າຂ້ານ້ອຍນີ້ກໍ່ຈົບສູດວິຊາອາຄົມມາແຕ່ເມືອງປີ່ເມືອງແຄນພູນແລ, ພໍ່ສິດສອນ ອາຄົມຈົບສິ້ນ ພະອາຈານກໍ່ມີຄວາມເມດຕາຈຶ່ງໄດ້ມອບຖົງຄາຖາ ອັນໜຶ່ງໃຫ້ເພື່ອໃຊ້ຫາກິນຕາມບ່ອນເຂັດຢ້ຳ, ທັງບ່ອນແວ່ແຮມແກມກິນກໍ່ໃຫ້ແມ່ນເຮືອນຫລັງໃຫຍ່ໄດ້ເປັນເພຍຂຶ້ນເມືອ ດັ່ງນີ້ຂ້ານ້ອຍຈຶ່ງມາແວ່ເຊົານຳພະຍາ. ເມື່ອຮູ້ດັ່ງນັ້ນພະຍາກໍ່ຖາມເບິ່ງຂອງຄາຖາ. ຊາຍນັ້ນກ່ອນຈະເອົາມາໃຫ້ເບິ່ງກໍ່ເຕືອນວ່າ: ຂ້ານ້ອຍນີ້ຍັງສົງໄສວ່າພະຍາຈະໄປເລົ່າລືເລື່ອງຂອງດີມີວິເສດນີ້ໃຫ້ຄົນອື່ນຮູ້, ຖ້າດັ່ງນັ້ນແທ້ ຄາຖາກໍ່ເສຍຄວາມເຂັດຢ້ຳອິດທິດາຍ ! ຝ່າຍພະຍາເປັນຜູ້ຢາກເຫັນໄວໆກໍ່ເວົ້າວ່າ: ບໍ່, ຂ້ອຍບໍ່

ບອກໃຜ, ມີແຕ່ໄດ້ເຫັນແລ້ວກໍ່ຊິບອກບ່ອນນະເຫສັກຫຼັກເມືອງ, ຄັນເຈົ້າຫາກປະສົງ ດັ່ງວ່າແຫ້ຂ້ອຍກໍ່ບໍ່ຂັດບໍ່ຂືນຫຍັງນຳຄຳເວົ້າຂອງເຈົ້າຫຼາຍຢ່າງ. ຈາກນັ້ນຊາຍຫນຸ່ມກໍ່ ໄຂຖົງຄາຖາອອກຈຶ່ງເຫັນມີໄຊຫລັງຫນຶ່ງ. ພະຍາ: ຊັ້ນເຈົ້າໃຊ້ໄຊນີ້ເຮັດຫຍັງ ? ຊາຍນັ້ນ: ຂ້ານ້ອຍໃຊ້ໄຊນີ້ໄປກາງໄວ້ບ່ອນເຂັດບ່ອນຢຳແລ້ວປາຖະຫນາໃຫ້ຖືກເງິນຖືກຄຳໂດຍເອົາເງິນຫມັນຂັນຄຳເປັນ ຂອງອ່ອຍໄວ້ໃນໄຊນີ້. ມີແຕ່ເຮັດແນວນັ້ນກໍ່ພໍໄດ້ເງິນມາໃຊ້ເລັກນ້ອຍຊັ້ນແລ້ວພະຍາເອີຍ !

ເມື່ອຮູ້ດັ່ງນັ້ນພະຍາກໍ່ຕົກລົງພາຊາຍນັ້ນໃຫ້ເອົາໄຊໄປກາງຢູ່ກອງກົກໄຣ ໃຫຍ່ຫລັງບ້ານບ່ອນມີຕູບລຽງພີຕັ້ງອ້ອມຢູ່ ໃນຕອນຄ່ຳຄືນນັ້ນເລີຍ.

ມື້ຕໍ່ມາ ພໍແຕ່ຮຸ່ງຂຶ້ນພະຍາກໍ່ປຸກຊາຍນັ້ນພາກັນໄປຢາມໄຊ, ເມື່ອໄປຮອດ ຊາຍນັ້ນກໍ່ບອກພະຍາເປັນຜູ້ຢາມ. ພໍແຕ່ພະຍາຍົກໄຊຂຶ້ນເບິ່ງກໍ່ເຫັນມີເງິນສອງຫມັນຢູ່ໃນໄຊນັ້ນ. ເຫັນແນວນີ້ພະຍາກໍ່ຫົວອັກໆ ທັງຍ້ອງຄວາມວິເສດວິໂສຂອງໄຊ ທັງຍ້ອງຊາຍນັ້ນນຳ ຄ່ຳມາອີກພະຍາກໍ່ຊວນຊາຍນັ້ນໄປກາງໄຊ ເທື່ອນີ້ຊາຍນັ້ນເວົ້າວ່າ: ຄັນຢາກໃຫ້ຖືກຫຼາຍກໍ່ເອົາເງິນຫມັນຂັນຄຳອ່ອຍໄວ້, ໃສ່ເທົ່າໃດມັນກໍ່ມາຖືກຄູນຫຼາຍເທົ່ານັ້ນ, ພໍວ່າແນວນີ້ພະຍາກໍ່ບໍ່ຂັດຂືນ ທັງຈົກເອົາເງິນປ່ອນໃສ່ຫນຶ່ງຫມັນ ຊາຍນັ້ນກໍ່ໃສ່ຫນຶ່ງຫມັນ . ຕື່ນເຊົ້າມາພະຍາກໍ່ພາຊາຍນັ້ນໄປຢາມໄຊອີກ. ພໍແຕ່ໄປຍົກໄຊຂຶ້ນມາກໍ່ເຫັນມີເງິນ ຢູ່ສີ່ຫມັນ. ພະຍາທັງຫົວອັກໆ ທັງຕົບແຂ່ງຕົບຂາ, ທັງຍ້ອງໄຊ ຍ້ອງຄາຖາ ແລະຮຽກ - ຊາຍນັ້ນເປັນຫຼານຊາຍໄຊເງິນວິເສດ ຢູ່ບໍ່ແລ້ວບໍ່ເຊົາ ເມື່ອຫ່ຽວມາຊາຍນັ້ນກໍ່ມາກ່າວຂອບຄວາມສົມນະນາຄຸນບຸນຄຸນຄ້ຳຂອງພະຍາ ທີ່ຕົນໄດ້ມາແວ່ເຊົາແຮມຢູ່ເຖິງ ໔ ຄືນແລະກໍ່ຈະໄດ້ອຳລາຄາຈາກ ພະຍາໄປໃນມື້ແລງນີ້. ເມື່ອຮູ້ເຊັ່ນນັ້ນ ຝ່າຍພະຍາກໍ່ກ່າວວ່າ: ເຈົ້າຊາຍ ຄາຖາເງິນ ວິເສດ ໄດ້ສາງເຫດແນວສັງຫລູ້ນມາຊ່າງນອນຫາເງິນໄຖ ມາຊ່າງໄດ້ຄາຖາເຜັດ, ຄັນບໍ່ມີເຫດຂັດຄາຖາບໍ່ເປັນຢ່າແກຄວາມເຂັດໄຊວິເສດຄາຖາ ຄູນຂອງເຈົ້າ ຈິ່ງຢູ່ນອນຊ້ຳຄືນສາກ່ອນຈະພໍໄດ້ບໍ່ຫລື ? ຈາກນັ້ນຊາຍກໍ່ຕອບວ່າ, ຕາມອາຈານເພິ່ນສອນຄາຖາ ຄາວມອບຂອງວິເສດໃຫ້ກໍ່ກ່າວຄຳເຕືອນ ຄັນເມື່ອຂ້ານ້ອຍຫາກມາແວ່ ບ້ານເພິ່ນເມືອງທ່ານ, ໄດ້ໄປເພິ່ງເຮືອນຮ້ານກວ້ານເພຍຊຸຍພະຍາກໍ່ດີບໍ່ໃຫ້ ແຮມເກີນ ໓ ຄ່ຳ ບໍ່ໃຫ້ຕ່ຳກວ່າ ໔ ຄືນ ຄັນຊັ້ນຊ້ຳມື້ອື່ນນີ້ກາລະກໍ່ຈະຈຸບຕານຄາຖາແລ້ວ. ຄັນອົດສາແວ່ແຮມຄືນຄົງຕົ້ນໄດ້ພຽງຄືນດຽວເທົ່ານັ້ນ. ຈາກນັ້ນພະຍາກໍ່ອ້ອນວອນໃຫ້ຊາຍຈິ່ງຢູ່ຊ້ຳຈັກຄືນຈົນຈູບຄາຖາພໍກາງໄຊເອົາເງິນສ້ຽນໃຫ້ໄດ້ຈັກພັນເອົາເງິນຫມັນໃຫ້ໄດ້ຈັກ

ໜື້ນ ຈະຕ້ານທານກໍ່ບໍ່ເກັບຄ່າຢູ່ ບໍ່ກູ້ຄ່ານອນນຳແລ້ວ ເມື່ອເປັນດັ່ງນັ້ນຊາຍໜຸ່ມກໍ່ຢູ່ ເຊົາ ນຳພະຍາຈະຕີນນັ້ນອີກ.

ພໍຄ່ຳມາພະຍາກໍ່ເອົາໄຊນຳຊາຍນັ້ນໄປກາງອີກ. ເທື່ອນີ້ພະຍາກໍ່ເອົາເງິນໜັນ ໃສ່ໃນໄຊຈົນກາງແລ້ວກໍ່ໄປວາງໄວ້ກອງຕົ້ນໄຮ້ຄືແຕ່ເກົ່າ. ຫລັງຈາກກັບມາແລ້ວພະຍາ ກໍ່ຊວນຊາຍຄົນນັ້ນນອນແລ້ວບອກໃຫ້ຂ້ອຍໃຊ້ຈຶ່ງໝົ້ງເຂົ້າເປົ່າໄຟໃຫ້ທັນຕອນໄກ່ຂັນສອງ, ກຽມທໍ່ເຂົ້າຕົ້ມນ້ຳ ຕຳແຈ່ວ ປີ້ງປາ ເພື່ອຫາໃຫ້ຊາຍເອົາໄປກິນທາງໃນເຊົ້າມື້ໜ້າ.

ພໍໄກ່ຂັນສອງພະຍາໄດ້ຍິນສຽງຂ້ອຍໃຊ້ລຸກມາໝົ້ງເຂົ້າພະຍາລຸກຂຶ້ນແລ້ວ ຄ່ອຍ ຢ່ອງໆໄປເບິ່ງຊາຍໜຸ່ມ ທັງເຫັນວ່າຊາຍນັ້ນຍັງນອນໂກນຄອກງຢູ່ກໍ່ໄປໄຂປະຕູລົງເຮືອນ ໄປ. ພໍອອກນັ້ນເຮືອນພະຍາກໍ່ຮີບແລ່ນໄປຫາຕົ້ນໄຮບ່ອນກາງໄຊໄວ້. ໄປຮອດແລ້ວກໍ່ ວົນຫາໄຊທີ່ກາງໄວ້, ວົນໄປວົນມາ ທັງໃຊ້ມືໃຊ້ຕີນຊ່ວງເບິ່ງແຕ່ບໍ່ພໍ້ໄຊຈັກເທື່ອ. ພະຍາ ຊອກແນວນັ້ນອ້ອມຕົ້ນໄຮໄດ້ຈັກຮອບຈົນບໍ່ຈື່, ກົກຫຍ້າປ່າເຮື້ອແຖວນັ້ນກໍ່ມຸ່ນມິນປົ່ນແປ້ ແຕ່ ກໍ່ຍັງບໍ່ພໍ້ໄຊໄກ່ກໍ່ຂັນສາມຂຶ້ນມາອີກ. ພະຍາທັງຢາກຮ້າຍ ທັງຢາກໄຫ້ ທັງຄິດສົງໄສວ່າ ຊາຍນັ້ນລຸກໄປລັກຢາມກ່ອນຈຶ່ງຮີບກັບເມືອເຮືອນ ພໍມາເຖິງຕີນຂັ້ນໄດພະຍາກໍ່ຮ້ອງປຸກໃຫ້ ຊາຍນັ້ນຕື່ນ ຊາຍຕື່ນຂຶ້ນມາກໍ່ຖາມວ່າ: ມີເຫດຫຍັງນໍ່ຂ້ານ້ອຍ ! ໂອຍຕາຍ ! ຈັກແນວ ໃດກັນແລ້ວ ໄຊບໍ່ເຫັນຈ້າ ຫຼືວ່າເຈົ້າໄປກູ້ເອົາແລ້ວຫວະ ? ຊາຍນັ້ນລຸກຂຶ້ນ ຣື ! ແມ່ນ ຫຍັງຂ້ານ້ອຍ ໄຊເສຍແລ້ວຫວ່ະ, ຂ້ານ້ອຍບໍ່ຮູ້ເລື່ອງນຳພະຍາໄດ໋ ບໍ່ຮູ້ຮອດບ່ອນກາງ ບໍ່ ຮູ້ຮອດຍາມພະຍາໄປ ໂອຍວອນແລ້ວຂ້ານ້ອຍຊິເຮັດແນວໃດບັດນີ້ຝ່າຍພະຍາເຫັນຊາຍ ເວົ້າດ້ວຍຄວາມຕື່ນແນວນັ້ນກໍ່ແຮງຕົກໃຈທັງຮູ້ວ່າ ໄຊນັ້ນເສຍແທ້ແລ້ວ ຊາຍໜຸ່ມຍັງຈົ່ມ ມັນບໍ່ແມ່ນພະຍາເອົາໄປເຊື່ອງນຽນຈ້າບໍ່ຣື ! ? ພະຍາ: ຊາຍເຮີຍ ! ບໍ່ໄດ້ຊຸກບໍ່ໄດ້ ເຊື່ອງເລື່ອງມັນຕັ້ງແນວນັ້ນແຫ, ໂອຍ! ຂ້ອຍກໍ່ເສຍດາຍເງິນສຽນຕັ້ງສິບກຳ ຄຳຕັ້ງຫາ ບັກ ເງິນໜັນຈັກເທົ່າໃດບໍ່ຈື່ ຕາຍແລ້ວ ວອນແລ້ວ... ຊາຍນັ້ນເວົ້າຂຶ້ນ: ຂອງດີມີ ວິເສດໄດ້ຈາກຮຽນເວດມົນຄາຖາອາຈານມອບເປັນສິດໃຫ້ຊອກເງິນຊອກຄຳມາໃຊ້ ໄວ້ຕໍ່ ເຊັ່ນ ຫຼານເຫຼັນ, ເດີນທາງມາບໍ່ສຸດເສັ້ນຈະເປັນເຫດກາງທາງເຄີຍຄາຖາຈາງ ເຮືອນ ເພີ່ນເຄີຍ ບັດນີ້ຊິຫາເງິນແນວໃດພໍຊິໃຊ້ໄປຮອດບ້ານຈະຂວບຍາມແລ້ວຊິກັບໄປຕັ້ງ ຄາຍ ເສກຄາຖານຳອາຈານອີກ ເມື່ອເວົ້າແນວນີ້ ພະຍາໄດ້ຍິນກໍ່ຄິດວ່າ ບະ ! ແມ່ນກູ ແທ້ ເຄເຮັດໃຫ້ໄຊຂອງລາວເສຍ ເປັນຜູ້ສ້າງບາບ ຂາຍວອນໃຫ້ຊາຍ ເພື່ອຄັ້ງໜ້າຫາກວ່າ ຊິໄປເສກຄາຖານຳອາຈານອີກເອົາເງິນໃຫ້ລາວຄືງບໍ່ເສຍລາຕີບໍ່ ! ຄິດແລ້ວກໍ່ເວົ້າວ່າ:

ຊາຍຄາຖາຄ້ຳຄາຖາຄູນ ອັນວ່າເງິນຄຳຂ້ອຍເສຍໄປນັ້ນກໍ່ໂສເປັນດັ່ງຂອງຈູດໄຟໄຫລລົງນ້ຳໄປສາ, ຂ້ອຍບໍ່ລືມບໍ່ຟ້ານຄວາມດີບໍ່ຍືດວາມເຂັດຂອງເຈົ້າ ຄັນຈະເດີນທາງໄປ ໜ້າຂ້ອຍກໍ່ຍັງມີເງິນແຮໄຖ່ໄວ້ມອບແທນແກ່ເຈົ້າ ໂອຄັນຫາກໄດ້ໄປເສກເວດມົນຄາຖາ ອີກເງິນເຈົ້າຈະຕັ້ງຄາຍຫາກເໜັດເພັດເຈົ້າຫາກຈີນໃຫ້ມາປັນເອົານຳຂ້ອຍກໍ່ຊົມໃຈພໍຊີແບ່ງຊອບນຳ ແລະ ເວົ້າແລ້ວພະຍາກໍ່ໄປຈົກເອົາເງິນໜັນ ເຕັມກຳມືມາຍັດໃສ່ຖົງທັງ - ຂອນວອນຜ່ອນຜັນໂທດນຳຊາຍຄົນນັ້ນ. ພໍເຖິງຍາມຮຸ່ງແຈ້ງຊາຍນັ້ນກໍ່ອຳລາພະຍາແລ້ວອອກຈາກບ້ານດົງເດີນໄປໜ້າ ຄາວເມື່ອໄປນັ້ນເຂດແດນແຄວ້ນພະຍາເຖິງແດນເຮືອນນີກອງລ່າງຍ່າງຢຽບຟາກໄມ້ຫົກແລ້ວຊາຍນັ້ນກໍ່ໄປຫາສຽວຊາຍກຳພ້າຄົນໜຶ່ງ ຄາວເມື່ອພົບພໍ້ກັບຊາຍກຳພ້າກໍ່ເຫັນໄຊພອນເງິນໜັນເຄິ່ງໄຊນຳດ້ວຍຊາຍຄົນນັ້ນກັບຊາຍກຳພ້າ ກໍ່ໂດດກອດກັນທັງຫົວອັກຫົວອັ່ນຈົນນ້ຳຫູນ້ຳຕາຍ້ອຍຕໍ່ເລື່ອງຂອງເຂົາທັງ ໔ ທີ່ໄດ້ຮູ້ດເສັ້ນພະຍາ ຈາກນັ້ນເຂົາກໍ່ເອົາເງິນມາແບ່ງສ່ວນກັນຊ່ຳໃດ ທັງເອົາສ່ວນໜຶ່ງອີກໄວ້ໄປ - ຢາຍຊາວບ້ານຊາວເມືອງ ຄັນວ່າໄທ້ເມືອງເມື່ອຮູ້ເລື່ອງນີ້ນຳຊາຍທັງ ໔ ເຂົາກໍ່ພາກັນຫົວຂວັນພະຍາເມືອງຄົນນັ້ນ ທັງຍົກຍ້ອງປັນຍາອາຄົມ ໔ ຊາຍແລ້ວເລົ່າຄວາມນີ້ຕື່ນ - ຄວາມນັ້ນຈົນສືບກັນມາເປັນເລື່ອງ ພື້ນໄຊວິເສດນັ້ນແລ.

● ສົມແສງ ເກສາວິລະ-ຮຽບຮຽງ

247VII
ຫ້າມຈຳໜ່າຍ



ຈິດຕະກຳ ຝາວັດຊຸບມຸງ ວຽງຈັນ



ພັນທະນາສອນ

# ຍາດໄດ້
# ບ່ປ່ອຍເສຍ



ນີ້ກໍ່ເປັນພື້ນເກົ່າເລົ່າສືບກັນມາໄດ້ສິບເຊັ່ນ ເປັນພື້ນສອນກອນສັ່ງຍັງສັກສິດໃຫ້ຄິດໃຫ້ວ່າ ຈຳໄວ້ດັ່ງພື້ນຄາດໄດ້ບໍ່ຫອນເສຍນີ້ແລ

ຄາວກ່ອນນັ້ນຍັງມີ ໓ ຊາຍ ເຕັມບ່າວໜຶ່ງຊາວປາຍຈັກຂວບນີ້ແລ ເປັນສ່ຽວກັນມາແຕ່ຄາວຢູ່ທ້ອງແມ່ຍັງກໍ່ໄສ້ແທ້ ທີວ ສາວພູນ, ຝ່າຍພໍ່ແມ່ຂອງຊາຍທັງສາມກໍ່ຮັກແພງກັນ ທັງໃຫ້ລູກຕົນຂອດພັນໝັ້ນສ່ຽວເມື່ອເກີດມາ ແລ້ວກໍ່ຮັກລູກວ່າແຕ່ພາບໍ່ໃຫ້ບາຍໄຖຍໍ່ໃຫ້ ຕ້ອງຊ້ຳກໍ່ຍອງວ່າ: ບຸນໃດບໍ່ໃຫ້ຫູ່ ຂໍອັນໃດບໍ່ໄດ້ຄາ. ດັ່ງນັ້ນເມື່ອຊາຍທັງ ໓ ໃຫຍ່ມາເຖິງຍາມຢາກໄດ້ເມຍແລ້ວ ພໍ່ແມ່ເຂົາທັງ ໓ ຈິ່ງຮູ້ວ່າ ຄັນຫາກໃຫ້ເອົາເມຍແທ້ຊ້ຳຈິເກີດ-ເຮືອນໄດ້ຫຼື, ຕົ້ນໝາກຣາກພູກໍ່ຍັງບໍ່ຮູ້, ຈິເຂົ້າປ່າຫາຍິງແຮງບໍ່ເປັນລຶງນ້ຳເຫັນປີງກໍ່ຍັງວ່າປາຫຼາຍຢູ່, ຄັນວຽກບ້ານການບໍ່ໄດ້ດັ່ງນີ້ໃຫ້ເອົາໄປແອບຮູທຸກກ່ອນຈິບໍ່ດີກວ່າບໍ່, ພໍ່ປຶກສາກັນແລ້ວກໍ່ຕົກລົງໃຫ້ຊາຍທັງ ໓ ໄປຊອກຮຽນທຸກສາກ່ອນ. ຄາວຈະໄປແຫນັ້ນພໍ່ແມ່ຂອງຊາຍໜຶ່ງໄດ້ມອບແຫວນຄຳວົງໜຶ່ງໃຫ້ລູກຕົນທັງສັ່ງໄວ້ໃຫ້ໃຊ້ຍາມຈັບເປັນເອັນ-ຮອນ ສ່ວນອີກ ໒ ຊາຍພໍ່ແມ່ບໍ່ເອົາຫຍັງໃຫ້.

ຄັນວ່າອອກບ້ານໄປແລ້ວ ຊາຍທັງ ໓ ກໍ່ໄປພໍ້ຄົນພອກຄັນນາ ແລະ ຂຸດເໝືອງ ຢູ່ແຄມບ້ານແຫ່ງໜຶ່ງ, ເຂົາທັງ ໓ ກໍ່ໄປຂໍປ່ຽນເພື່ອຂຸດດິນເບິ່ງວ່າມັນຈິເມື່ອຍປານໃດ ? ພໍແຕ່ຂຸດລົງບໍ່ພໍຄາວກໍ່ງັດດິນຈົນດ້າມຫຼົວຫັກ, ຄາວນັ້ນເຈົ້າດິນນາມາຮອດກໍ່ສັ່ງຕັດ ເຂົ້າເອົາຄວາມນຳພອກຮັບຈາງ. ເມື່ອຊາຍວ່າດ້າມຫຼົວຫັກຍອມຊາຍທັງ ໓ ເຈົ້າທີ່ດິນກໍ່ໄລ່ເຂົາໜີທັນທີ, ເຂົາທັງ ໓ ຖືກເຫດຮ້າຍຄັ້ງໜຶ່ງແລ້ວກໍ່ອຶກສັ່ນຂວັນຄອນ ບໍ່ໜ້ອຍ ແຕ່ກໍ່ສືບຕໍ່ດ່ຽວເດີນໄປໜ້າເລື້ອຍໆ, ໄປຕາມໄປກໍ່ພໍ້ກັບຊາຍຄວາງແຫຼົມໜຶ່ງພວມຄວ່າງ ແຫ ວົ້ນເອົາປາຢູ່ແຄມໜອງນັ້ນ. ເຫັນແລ້ວເຂົາກໍ່ຂໍລົງຄວ່າງແຫນຳ ແລະ ຊາຍນັ້ນ ກໍ່ສະແດງຄຳຊອບຕໍ່ການກ່າວຂໍຂອງຊາຍທັງ ໓. ກ່ອນຈະລົງນ້ຳວົ້ນແຫນຳເພິ່ນ ຊາຍຜູ້ ມີແຫວນກໍ່ປົດແຫວນຕົນໃສ່ຖົງສົ້ງແລ້ວ ກວນສົ້ງເຂົ້າຍອງໄວ້ແຄມໜອງ. ສ່ວນຊາຍເຈົ້າຂອງແຫກໍ່ຂຶ້ນມານັ່ງເທິງບົກຄອຍເບິ່ງເຂົາ. ເມື່ອເຫັນວ່າຊາຍທັງ ໓ ເມົາມົວນຳ ແຕ່

ຄວ່າງແຫ ງົມແຫເອົາປາຢູ່ ຊາຍເຈົ້າຂອງແຫກໍ່ງົມພຸ້ນຫາວພີ້ຊິຈົບພົກຈົກໄຖ່ຫຼອນໄປ ພໍ້ ແຫວນຄຳວົງນັ້ນແລ້ວກໍ່ລັກເຊື່ອງເອົາສາ.

ເມື່ອຊາຍທັງ ໓ ຄວ່າງແຫໄປເທິງພໍສາວກໍ່ອິດເມື່ອຍຈຶ່ງຂຶ້ນມາພັກເທິງບົກທັງໄດ້ລົມ ເລື່ອງລາວການຫາສັດເທິງບົກ, ການເຮັດຫຼັກເຮັດຫຼີ່ທາງນ້ຳ ກໍ່ເຫັນວ່າຊາຍເຈົ້າ ຂອງ ແຫເວົ້າສູ່ຟັງໄດ້ຢ່າງລ່ຽນໄຫຼ ຮອດການສານໄຊ ສານແຫ ແຊບັດ ເຮັດຕອນ, ລວງ ລ້ອນ ບ່ອນກາງ ຈົນຊາຍທັງ ໓ ເກີດຄວາມພໍໃຈນຳການຫາປາເປັນອັນມາກຈຶ່ງ ອວນ ຮຽກເອົາລາວເປັນສ່ຽວນຳອີກ. ແລະ ຊາຍຫາປາກໍ່ປົງໃຈຂອດເປັນສ່ຽວກ່ຽວເປັນເຄືອ ນຳກັນຕໍ່ໄປ.

ຈາກນັ້ນສ່ຽວທັງ ໔ ກໍ່ຖ່ຽວເດີນໄປໜ້າອີກ, ເມື່ອໄປເຖິງສາລາຫລັງໜຶ່ງກໍ່ພໍດີຄ່າຍ ຄ່ຳແລ້ວຈຶ່ງພາກັນແວເຊົາເອົາແຮງແຕ່ງກິນແລງຢູ່ທີ່ນັ້ນ. ເມື່ອກິນແລງເສັດສິ້ນ ເຂົາກໍ່ ພາກັນນອນພັກຜ່ອນ. ສ່ວນຊາຍເຈົ້າຂອງແຫວນກໍ່ຊອກແຫວນຊິມາຖືເລີຍບໍ່ເຫັນ ເມື່ອ ບໍ່ເຫັນແລ້ວລາວຄິດວ່າ: ແຫວນນັ້ນຄົງບໍ່ຕົກບໍ່ເຮ່ຍທີ່ໃດ ຖ້າເປັນດັ່ງນີ້ຄົງແມ່ນພວກຊາຍທີ່ ມານຳກັນນີ້ແລເປັນຜູ້ເອົາ. ແຕ່ຈະຖາມນຳໃຜຄັນແມ່ນເຂົາລັກແຫລົງຈະບໍ່ມີໃຜບອກ - ດາຍດອກ ລາວທັງຄິດເສ່ຍດາຍ ທັງຫາວິທີ ເພື່ອເອົາແຫວນນັ້ນຄືນ.

ພໍຄ່ຳມືດຈືດູຕາຊາຍເຈົ້າຂອງແຫວນກໍ່ຊວນສ່ຽວທັງ ໓ ໄປທ່ຽວສາວໃນບ້ານເຂົາພາ ກັນອັບລຳ ທຳຮອງໄປພໍ້ໃຫ້ສາວໃນບ້ານຮູ້ວ່າ ບ່າວຕ່າງບ້ານຊານຕ່າງເຮືອນມາ ທ່ຽວ ກ້ຽວສາວແລ້ວ. ເຂົາທັງ ໔ ເຂົ້າໄປບ້ານກໍ່ຂະນະກັບເຮືອນໜຶ່ງເຊິ່ງມີສາວພວມ ຍິກ ຫຼາລົງຂວງເຂັ້ນຝ້າຍ ຝ່າຍອ້າຍບ່າວ ໓ ຄົນກໍ່ອ້ອນວຽນປ່ຽນທັກທາຍຈາຍພະຫຍາຍ ໃສ່ ສາວນັ້ນ ສ່ວນຊາຍເຈົ້າຂອງແຫວນຊ້ຳພັດຂຶ້ນໄປເທິງເຮືອນຫາລົມພໍ່ລົມແມ່. ຝ່າຍພໍ່ແມ່ ຄັນເຫັນວ່າຊາຍຕ່າງບ້ານທ່ວານຕ່າງແດນມາກໍ່ມາທັກທາຍໄຕ່ຖາມຕາມເລື່ອງຢ່າງ ທຳ ຊອບ ເມື່ອລົມກັນມາຍືດຍາວຄາວເຍັນຊາຍຄົນນີ້ກໍ່ຮູ້ວ່າ ພໍ່ແມ່ເຮືອນນີ້ເປັນຄົນດີ ມີສິນ ປາກຊ່າງກ່າວຈາອາລົມທຸ່ນຈຶ່ງກ້າກ່າວຄວາມເປັນໄປຂອງແຫວນຕົນສູ່ຟັງພ້ອມຂໍຄຳ ຊິດ ຊ່ວຍນຳແລ. ເມື່ອຊາບເລື່ອງລາຍດັ່ງນັ້ນພໍ່ແມ່ກໍ່ຂານຄຳຕອບມອບຄຳຈາວ່າຈະ ຊ່ວຍ ຊ້າຍໄດ.

ນີ້ຕໍ່ມາພໍ່ແມ່ໄດ້ຖາມລູກສາວຕົນເຖິງເລື່ອງລົມຂອງຜູ້ບ່າວທັງ ໓ ຈາກນັ້ນກໍ່ບອກວ່າ: ຖ້າຄ່ຳນີ້ບ່າວທັງ ໔ ນັ້ນຫາກມາ ຄັນຕໍ່ແຍວ່າຢາກຮັກຫວງຄອງເປັນຊູ້ແຫນັ້ນໃຫ້ລູກ ຮັບ

ປາກກໍ່ໄດ້. ແຕ່ກ່ອນຈະຮັບປາກນັ້ນໃຫ້ຂໍຂອງໝັ້ນເປັນເງິນແສນແຫວນປອກຈຳໄວ້ກ່ອນເດີລູກເຮີຍ.

ສ່ວນຊາຍທັງ ໓ ທີ່ໄດ້ລົມສາວຕ່າງກໍ່ວ່າສາວມັກຕົນຈຶ່ງຖືກຖຽງກັນ ຂັ້ນທ້າຍກໍ່ຕົກລົງແບ່ງພຽນດຸຽນກັນໄປລົມຜູ້ລະຄັ້ງທັງ ໔ ຄືນທັດ, ຊາຍໃດລົມແລ້ວບໍ່ໃຫ້ເລົ່າສູ່ກັນຟັງ ນຳດວຍ. ສ່ວນສອງຄືນຕໍ່ມານັ້ນກໍ່ມີສອງຊາຍໄປລົມກ່ອນ ເມື່ອສາວເວົ້າເຖິງຂອງ ໝັ້ນການຈຳກໍ່ພາກັນຄາງແລ້ວກໍ່ກັບມາເປົ່າງນັ້ແລ, ຄາວເຖິງຄືນຊາຍຫາປາໄປເຫັນວ່າ ລົມເຂົ້າຂໍ້ ຂໍຂອງຈຳກໍ່ບໍ່ຍາກອີຫຼີ, ວ່າກໍ່ປົດແຫວນໝັ້ນອອກມາຈຳສາວໄວ້ແລ້ວກໍ່ກັບຄືນດ້ວຍຄວາມຊື່ນຊົມ. ເຖິງຄືນໃໝ່ຊາຍເຈົ້າຂອງແຫວນກໍ່ໄປຫາພໍ່ແມ່ຜູ້ສາວນັ້ນ ເທື່ອນີ້ ພໍໄປຮອດ ເພິ່ນກໍ່ຖາມຮູບໂສມຍົນຍ້ອນຂອງແຫວນຈາກຊາຍຄືນນັ້ນ ເມື່ອເຫັນວ່າເວົ້າຖືກ ແທ້ເພິ່ນກໍ່ເອົາແຫວນວົງນັ້ນມາສົ່ງຊາຍນັ້ນຮັບເອົາແຫວນແລ້ວກໍ່ກ່າວຄຳຂອບສົມມະນາ ອາລີ ຊຸນຕໍ່ພໍ່ແມ່ທັງຂໍຂອດດຸເປັນລູກເຕົ້າຈົນເຖິງດຽວນີ້ກໍ່ຍັງຍິນຄຳເວົ້າ: ລູກທົວແກ້ວ ທົວແຫວນແມ່ນພາກັນເວົ້າແຕ່ຄາວພຸນມານັ້ນແລ.

ຢູ່ທີ່ນັ້ນມາໄດ້ຫຼາຍວັນແລ້ວເຂົາທັງ ໔ ກໍ່ເຖິງຍາມຕ້ອງດ່ຽງເດີນໄປຊອກຮູ້ຄວາມທຸກຕໍ່ແຕ່ເທື່ອນີ້ຊາຍເຈົ້າຂອງແຫຊຸ້ພັດຂໍແຍກຂື້ແຍກຂາງແຍກທາງເດີນນຳສຽວ. ພໍກ່າວຄຳແຍກແລ້ວກໍ່ນັດວັນມາຮ່ວມສູ່ຂວັນບາສີທຳສິລິມຸງຊຸນຂອງຕົນກັບສາວ, ເຊັ່ນ ນັ້ນແລ້ວເຂົາກໍ່ອຳລາກັນໄປ.

ຫຼາຍມື້ຕໍ່ມາຊາຍເຈົ້າຂອງແຫກໍ່ໄປນຳເອົາພໍ່ແມ່ ເຖົ້າແກ່ພົງສາມາສູ່ຂໍຜູ້ສາວ ກ່ອນຈະສູ່ຂໍພໍ່ແມ່ຜູ້ສາວກໍ່ທັກທາຍເຊື້ອສາຍລາຍລ່ອງ ຄອງບ້ານສະຖານແດນຂອງພໍ່ແມ່ຜູ້ຊາຍ. ຕອນທ້າຍກໍ່ລົມໄປຮອດຄ່າດອງຂອງນ້ຳມົນ. ພໍ່ແມ່ຜູ້ຊາຍກໍ່ຂໍນຳໃຫ້ຖືກງຍອມຄວາມຈິນ, ຕັ້ງແຕ່ເປັນຢາວເຮືອນມາເງິນບໍ່ເຄີຍມີກາງຖົງແຫວນພໍວົງບໍ່ເຄີຍໄດ້ຈວບ (ພໍ້) ເມື່ອ - ເວົ້າຮອດນີ້ເລື່ອງການສູ່ຂໍກໍ່ມາຫຍຸ້ງຢູ່ບ່ອນແຫວນທີ່ລູກຊາຍເອົາມາໝັ້ນກັບສາວນັ້ນວ່າໄດ້ມາແຕ່ໃສ ? ຄັນວ່າເລື່ອງລາຍເປັນແນວນັ້ນພໍ່ແມ່ຝ່າຍຊາຍກໍ່ຫາທາງພາຍາດຕີພິປາ ນ້າຈູງທັງນວນຊວນຮຽກເອົາລູກຊາຍແລ້ວກໍ່ກ່າວອຳລາພໍ່ແມ່ຜູ້ສາວໄປຢ່າງບໍ່ຊານີ້ແລ.

● ສົມເສົາ ພາສາວິລະ - ຮຽບຮຽງ

# ລວບ່ງເອື້ອຍ





ກ່ອນກັ້ນສິບສີ່ເດືອນເຄີຍເພັນ ຕອນກາງວັນ ເດືອນຫງາຍ ຕອນສວາຍດາວເຮືອພຸ່ນ ຢູ່ເຂດແຖບແດນໃດ ກໍ່ລືມແລ້ວ ຍັງມີໝາແມ່ໂຕໜຶ່ງສຽງເຫົ່າຈ້ຳນວນ ດີສຽງກອງຂັນ ໃຜຟັງບໍ່ທັນຈຳດີສຽງກະແຈຮອງ. ເປັນເຊັ່ນນີ້ເຈົ້າຂອງໝາກໍ່ເກີດຄວາມຮັກຫວງມັນເປັນພິເສດ ຢູ່ໄດ້ນານປະມານຂວບໝາ ແມ່ໂຕນັ້ນຈ້ຳເກີດລູກອອກມາເປັນ ຍິງຝາແຝດ ສາແລ.

ຍິງຝາແຝດ ເມື່ອໃຫຍ່ຂຶ້ນເທົ່າໃດ ຜິວກໍ່ນວນດີງອ່ອນສະຫງ່ານຳດ້ວຍ. ຊາຍບ່າວຊາວແພວແຖບນັ້ນກາຍໄປມໍ່ກິນອງຫາ ຍ່າງກາຍມາກໍ່ລັກຢຽມຢູ່ເລື້ອຍ, ຍິງຝາແຝດເມື່ອໃຫຍ່ເຕັມສາວ ຊາວເຕັມຂວບແລ້ວຜູ້ເປັນນ້ອງຮູບຮ່າງຈ້ຳບໍ່ສົມພານ ບານບໍ່ສົມ ມັກດັ່ງຜູ້ເປັນເອື້ອຍ. ດັ່ງນັ້ນການໄປນອກຊອກຫາກິນກໍ່ແມ່ນພາລະຂອງຜູ້ເປັນນ້ອງ. ຢູ່ນານຕາມນານເລື່ອງລາຍສາວຝາແຝດຜູ້ໂສມຮູບທູບຫຼັ່ມກໍ່ດັງໄປເຖິງພະຍາເມືອງໜຶ່ງອີກ ພະຍາກໍ່ຫົງແຕ່ງລູກຊາຍໄປດູຈົ່ມ ສາວທັງສອງນັ້ນ. ເມື່ອລູກຊາຍພະຍາມາພໍ້ກໍ່ ເກີດຄວາມມັກຜູ້ເປັນເອື້ອຍແລ້ວກໍ່ສູ່ຂໍຍໍເອົານາງນັ້ນໄປເມືອງພະຍາ ທັງໄດ້ແຕ່ງເປັນ ດອງດອງເປັນເນຍຢ່າງເສັດສັ້ນ. ຢູ່ຕໍ່ມາອີກກໍ່ທົງມີມະຫາດເລັກ ກໍ່ໄດ້ເດີນມາຕາມຄຳຊາຄາຄຳລືຂອງຊາວເມືອງ ແລະ ກໍ່ມາເຖິງເຮືອນນັ້ນຈຶ່ງເຫັນວ່າມີຄວາມມັກກັບຜູ້ເປັນນ້ອງແລ້ວກໍ່ສູ່ຂໍເອົາເສຍແລ. ຄາວນັ້ນສອງເອື້ອຍນ້ອງກໍ່ແຍກກັນໄປຢູ່ຄົນລະທີ່ ປີໃດຈຶ່ງຂ່າວກັນຄົນລະເທື່ອ. ເມື່ອລູກສາວຈາກໄປໝົດຜູ້ເປັນແມ່ກໍ່ມີຄວາມປຽວພອຍຄອຍແຕ່ ຢາກເຫັນໜ້າລູກອີກຈຶ່ງໄດ້ຄອບເຈົ້າຂອງເຮືອນແລ້ວນຳໄປຢາມລູກສາວທັງສອງ.

ໝາແມ່ໂຕນັ້ນ ເມື່ອໄປຕາມໄປກໍ່ໄປພໍ້ກັບລູກສາວກົກຜູ້ເປັນໃພພະຍາເມືອງ. ພໍມາບເຫັນລູກສາວ ໝາແມ່ດີໃຈກໍ່ແກວ່ງຫາງທັງນອງເບິ່ງໜ້າລູກ. ຝ່າຍລູກສາວເມື່ອໄດ້ເປັນໃພພະຍາ ມີຄວາມສະໜຸກແລ້ວ ຄາວເຫັນແມ່ຂອງຕົນຍັງເປັນຊາດໝານຳມາກໍ່ຄິດອາຍ ທັງໃຈກໍ່ຢ້ານພະຍາເວົ້າຄວາມຊົ່ວ ຜົວເຂົ້າຫົວໜີ ດັ່ງນັ້ນກໍ່ຈັບເອົາຄ້ອນ ລົງໄປໄລ່ຕີຜູ້ເປັນແມ່ ຈົນເລືອດຕົກຢ່າງໄຫຼ ຮ້ອງຕາຍເວົ້ງ ! ໆ ! ແລ້ວກໍ່ແລ່ນໜີສາ ຈາກນັ້ນກໍ່ຄອຍໄຖຄອຍເຖືອ ເລືອລາກໄປເພື່ອໃຫ້ເຖິງລູກສາວຫຼ້າ. ພໍແຕ່ໄປເຖິງແຄມບ້ານ

ລູກສາວຫຼ້ານີ້ງເຫັນແມ່ກໍ່ຮ້ອງໄຫ້ທັງແລ່ນຟູບແລ່ນຟາຍ ຜູ້ເປັນຜົວເຫັນກໍ່ຕົກໃຈທັ້ງ ຮ້ອງ ຖາມ ຜູ້ເປັນເມຍກໍ່ຕອບວ່າ: ແມ່ຂອງນ້ອງມາຫາເພິ່ນຢ່າງເຊຊັດເຊຊາ ຫນ້າຕາເຕັມແຕ່ເລືອດມາທັ້ນ. ເວົ້າແລ້ວທັງຜົວເມຍກໍ່ຣີບແລ່ນໄປຕ້ອນເອົາຫມາແມ່ນັ້ນມາ. ເມື່ອມາຢູ່ນຳລູກສາວ ແລະ ລູກເຂີຍໄດ້ພໍ້ວັນຄວາມເຈັບຊ້ຳກ່ຳບວມກໍ່ທະວີຂຶ້ນຈົນຫາຍໃຈບໍ່ມາ ມີນຕາບໍ່ຂຶ້ນ ເຖິງບັ້ນທ້າຍກໍ່ແກ່ຄວາມຕາຍໄປແລ້ວແລ. ຄາວເຫັນແມ່ຫາຍໃຈປາ ຕາຄ້າງປີ້ນັ້ນນາງນັ້ນກໍ່ຮ້ອງໄຫ້ເຂົ້າບໍ່ກ້ຳນ້ຳບໍ່ກິນຢູ່ຫຼາຍວັນ. ສົບຂອງແມ່ໄດ້ໃຫ້ຜົວຣັດທີບໄມ້ແລ້ວໃສ່ນຽນໄວ້ທີ່ແຈບຈິນ. ເມື່ອເຖິງມື້ງານຍານບຸນນາງກໍ່ຄິດເຖິງແມ່ເປັນອັນມາກ ຈຶ່ງບອກໃຫ້ຜົວໄຂທີບເບິ່ງຫນ້າແມ່. ພໍແຕ່ໄຂທີບອອກກໍ່ເຫັນແຕ່ທ່ອນເງິນທ່ອນຄຳ ເຕັມທີບ ຈາກນັ້ນຜົວເມຍເຂົາເຈົ້າກໍ່ເກີດມີສຸກສະຫນຸກໃຈຕະຫຼອດໄປ.

ຂ່າວຫມາແມ່ຕາຍແລ້ວກາຍເປັນທ່ອນເງິນຄຳໄດ້ຊ່າລືໄປເຖິງຜູ້ເປັນເອື້ອຍ ແລະ ຜົວຝ່າຍເອື້ອຍກໍ່ເກີດຄວາມກິນແຫນງແຄງໃຈຢູ່ບໍ່ແລ້ວບໍ່ເຊົາຈຶ່ງປ່ອຍໂຊຕົນໄຕຈ່ອຍ ເມຍດ່າຜົວ ຜົວຕີເມຍ ຕົກເຊຍຫນ້າບ້ານຕົກຮ້ານທາງກອຍ ຢູ່ບໍ່ເຊົາ ຈຶ່ງເລົ່າລືມາ ເປັນເລື່ອງເຖິງທຸກວັນນີ້.

● ສົມແສງ ເກສາວິລະ-ຮຽບຮຽງ

ຈິດຕະກຳ ຝາວັດຊຸບມຸງ ວຽງຈັນ



ພັນທະມາສອນ


ກ່ຳໜ້າ ສະຫຼາດ
ອາມາດບຸງສາ
ພະຍາໂງ່ຈ້າ

ແຕ່ກ່ອນຍັງມີພະຍາອົງໜຶ່ງ ສືບລາດຊະສົມບັດແທນພໍ່ມາໄດ້ເກືອບ ໒໐ ປີແລ້ວ ວ່າແຕ່ສືບກໍ່ສືບຄອງເກົ່າເລົ່າ ຄອງເດີມ ບໍ່ສົນນາພາສາວຫຍັງ, ວຽກບ້ານການເມືອງ ກໍ່ມອບໃຫ້ເສນາອາມາດເຮັດໝົດ ຊ້ຳບໍ່ໜຳພະຍາຍັງບໍ່ຮູ້ວ່າ: ຄວາມຕົວະ ແມ່ນຫຍັງ , ມາວັນໜຶ່ງພະຍາອອກເຮືອນໄປຟັງຈ່າສານສືບສວນຄົນໂທດ. ພະຍາໄດ້ຍິນ ຈ່າສານວ່າ: ບໍ່ແມ່ນມຶງຕົວະຫວ່ະ ? ຄົນໂທດກໍ່ຕອບ: ບໍ່ ! ຂ້ານ້ອຍບໍ່ໄດ້ຕົວະ ຄັນຕົວະຂໍ ໃຫ້ຂ້ານ້ອຍບາບນຳກຳເຂັນຫອນ. ພະຍາໄດ້ຍິນດັ່ງນັ້ນກໍ່ຄະນຶງວ່າ: ກູບໍ່ເຫັນຮູ້ເລື່ອງ ນຳເຂົາ. ພໍຄິດແລ້ວກໍ່ຍ່າງໜີໄປ ທັງຈົ່ມພຶມພຳວ່າ: ບາ ວ່າແຫກູກໍໂພດ ຄຳເວົ້າ ຄຳວ່າ ພາສາໂຕແຫງກໍ່ຍັງບໍ່ຮູ້, ກູຕ້ອງໄດ້ຖາມໄດ້ຮຽນນຳເສນາອາມາດອີກ. ພໍຄິດແລ້ວນັ້ນຕໍ່ມາພະຍາກໍ່ຮຽກເສນາອາມາດທັງຫຼາຍມາໂຮມ ເຫັນມາຄົບໜ້າຄົບຕາແລ້ວ ພະຍາກໍ່ກ່າວຈຸດປະສົງ: ດຽວນີ້ພະອົງຢາກຟັງຄວາມຕົວະ: ຖ້າໃຜໃຫ້ຮູ້ໃຫ້ເຫັນຄວາມຕົວະຈະມອບຣາງວັນໃຫ້. ຈາກນັ້ນເສນາອາມາດທັງຫຼາຍກໍ່ຍໍມືໄຫວ້ທັງກ່າວນອມວ່າ: ຂໍເດຊາປານີແດ່ທອນ ພວກຂະນ້ອຍຕົວະບໍ່ເປັນ. ພະຍາກໍ່ກ່າວຕໍ່: ຊັ້ນນີ້ກ່ອນນີ້ຈ່າສານເວົ້າໃສ່ຄົນໂທດວ່າ ບໍ່ແມ່ນມຶງຕົວະຫວ່າ ? ຊັ້ນອັນນັ້ນໝາຍຄວາມວ່າແນວໃດ ? ເມື່ອພະຍາກ່າວຊີ້ຈ່າສານໂດຍກົງຈ່າສານກໍ່ສັ່ນທິດງວ່າ: ຂ້ານ້ອຍຄິດວ່າ ຄົນໂທດນັ້ນໄປ ລັກເຄື່ອງເຂົາ ເມື່ອສໍ້ຖາມກໍ່ວ່າບໍ່ໄດ້ລັກ ຊັ້ນລະພະຍາ. ເວົ້າແລ້ວພະຍາກໍ່ສອຍຄວາມຂັ້ນອາວຊັ້ນກໍ່ແມ່ນຈ່າສານຊ່າງຕົວະຕີ. ຄັນບໍ່ຊ່າງຈັ່ງໃດຊິວ່າຄວາມຕົວະນັ້ນເປັນ, ລອງຕົວະໃຫ້ພະອົງຟັງເບິ່ງຊິໃຫ້ຮາງວັນນີ້ມາ. ເຖິງຢ່າງນັ້ນຈ່າສານກໍ່ຍັງຄຶງວ່າ: ຕົນບໍ່ຊ່າງຕົວະຄືເກົ່າ. ຕອນທ້າຍການມາໂຮມກໍ່ມີວຽກພຽງເທົ່ານັ້ນ ເສນາອາມາດບໍ່ມີ ໃຜກ້າຕົວະພະຍາ, ກ່ອນຈະເລີກລາການໂຮມພະຍາໄດ້ສັ່ງເປັນຄຳຂາດວ່າ: ນີ້ໜ້າ ນີ້ໃນນີ້ກູບໍ່ໄດ້ຟັງຄວາມຕົວະກູບໍ່ຍອມເດີ. ໃຫ້ພວກເຈົ້າໄປຕິດຕ້ອງຮ້ອງປ່າວຊອກເອົາ ຄົນມາຕົວະກູໃຫ້ໄດ້. ໃຜຕົວະໄດ້ຕົວະເປັນຊິລົງໃຈມອບທ່ອນຄຳຊຳໜ່ວຍໝາກຟັກໃຫ້ ແລ້ວການໂຮມກໍ່ເລີກລາໄປ.

ນີ້ຕໍ່ມາເສນາອາມາດກໍ່ແບ່ງທິດແບ່ງທາງກັນໄປ ເພື່ອຫາຄົນມາຕົວະພະຍາ ໄປແຕ່ເຊົ້າເທົ່າເພນກໍ່ຍັງບໍ່ໄດ້ພໍ່ຄົນ. ເສນາທັງຫຼາຍໄປຮອດບ້ານໃດກໍ່ປ່າວຈົນທົ່ວແຫ່ງແຕ່ບໍ່ໄດ້ໃຜພໍ່ຈິສະໝັກມາຕົວະພະຍາໄທເມືອງຖືເລື່ອງນີ້ເປັນເຫດແປກອາດຈະເຖິງແກ່ຕາຍ ອາດຈະອາຍໝົດບ້ານຜູ້ເຄີຍຕົວະເຄີຍຕົ້ນຜ່ານມາກໍ່ທີດຫູຊູຂອດຢູ່ຍອມບໍ່ເຄີຍເຫັນໃຜເຄີຍຕົວະພະຍາແລ້ວໄດ້ຄຳເປັນໂງ່ນຖົ່ງເວົ້ານັ້ນ. ການປ່າວຫາວຫາຄົນຕົວະເປັນ ຈົນນານເຖິງ ໓ ເດືອນຈຶ່ງໄປໄດ້ທ້າວກຳພ້າຢູ່ທົ່ວຝ່າຍປ່າຍດ້ານພູນເປັນຜູ້ກາໄດ້ກາສຽງແລ້ວເສນາ ກໍ່ນຳທ້າວກຳພ້ານັ້ນໄປຫາພະຍາ, ຍ່າງໄດ້ ໗ ວັນກໍ່ໄປເຖິງ, ເສນາກໍ່ພາ ທ້າວກຳພ້າເຂົ້າເຝົ້າພະຍາໃນຄ່ຳຂອງມື້ນັ້ນເອງ. ຊາຍກຳພ້າກໍ່ພັດມື້ພັດຍານຈະທຳການຕົວະ ໃຫ້ພະຍາຟັງໂດຍຖືກເຈົ້ານີ້ໜ້ານີ້. ຈາກນັ້ນເສນາກໍ່ເອົາທ້າວກຳພ້າໄປພັກເຊົາຢູ່ ທີ່ນັ່ງແຂກຂອງພະຍາ ທັງເຄື່ອງຢູ່ປູ່ຢອງນອນໃຫ້ຢ່າງຮຽບຮ້ອຍ.

ເຊົ້ານີ້ໃໝ່ພະຍາສະເຫວີຍອາຫານແລ້ວກໍ່ສັ່ງໃຫ້ເສນາຕີກອງຫຼວງຮຽກໂຮມອາມາດລາດຊະດອນທົ່ວເມືອງໃຫ້ຫລັ່ງໄຫລໄປໂຮມຢູ່ສະໜາມຫຼວງ ເພື່ອຟັງຄຳຕົວະຂອງ ທ້າວກຳພ້າ ຝ່າຍເສນາທັງຫຼາຍກໍ່ແຫ່ແໜນຕາມພະອົງລົງສູ່ສະໜາມຫຼວງ, ສ່ວນ ຊາຍກຳພ້າກໍ່ໄປຖ້າຢູ່ທີ່ນັ້ນກ່ອນແລ້ວ.

- ພະຍາລົງເຖິງສະໜາມຫຼວງຢ່າງຮຽບຮ້ອຍແລ້ວກໍ່ປະກາດໃຫ້ອາມາດ ລາດຊະດອນກຽມຟັງການຕົວະຂອງຊາຍກຳພ້າ ພໍປະກາດແລ້ວກໍ່ສັ່ງໃຫ້ທ້າວກຳພ້າເລີ່ມຕົວະ ໄດ້ທັງສັ່ງກຳພ້າລຸກຢືນຂຶ້ນຕົວະໃຫ້ຄົນທົ່ວສະໜາມຍິນນຳ, ທ້າວກຳພ້າກໍ່ລຸກຂຶ້ນຍໍມືໃສ່ ເກົ້າຂາບເຈົ້າອົງພະຍາ ກະລຸນາລາດຊະດອນ ຂ້ານ້ອຍຈະຕົວະວ່າ: ພໍ່ຂ້ານ້ອຍ ນັບແຕ່ເກີດຈົນໃຫຍ່ໄຮກໍ່ບໍ່ຫາມາກໍ່ບໍ່ສາງ, ເກີດເປັນວັນພັນເປັນມື້ກໍ່ໄປບັກຢາງໂພຢາງໄຮມາໄດ້ ກໍ່ໃສ່ໝໍ້ເຕັ້ນສິບໜ່ວຍແລ້ວຖອກໃສ່ໝໍ້ກະທະຕົ້ມຂຽວເປັນຕັງໜຽວຍືດໆແລ້ວເພິ່ນກໍ່ໄປຕັດເອົາໄມ້ໄຜ່ບ້ານໃດລະສີ່ຫາລຳມາຜ່າເຫຼົາ ເປັນຄົວທໍ່ໂປ້ມື ມັດເປັນມັດແລ້ວກໍ່ແບກ ເອົາຕັງນັ້ນເຂົ້າໄປໃນດົງບ່ອນມີຊ້າງ, ເພິ່ນເອົາຕັງທາໃສ່ໄມ້ແລ້ວກາງໃສ່ທາງຊ້າງຍ່າງ . ຊ້າງໂຕໃດມາຕິດຕັງນັ້ນພໍ່ກໍ່ຈັບເອົາຊັ້ນລະ ຄວາມຕົວະ ຂອງຂ້ານ້ອຍ.

- ພະຍານັ່ງຟັງຈົນອ້າປາກຕາກເຫື່ອກພໍຟັງສຸດແລ້ວກໍ່ອວາຍໜ້າໄປຖາມອາມາດທັງຫຼາຍວ່າ: ແມ່ນມັນຕົວະແລ້ວຫວະທັ້ນ ? ເສນາອາມາດກໍ່ຍໍມືຂາຍແລ້ວເວົ້າວ່າ: ແມ່ນແລ້ວທ້າວກຳພ້າຕົວະ ແລ້ວຂ້ານ້ອຍ, ພະຍາຖາມລາດຊະດອນອີກ ເຂົາກໍ່ວ່າ: ແມ່ນ

ທ້າວກ່ຳພ້າຕົວະແທ້ແລ້ວ. ພະຍາດີໃຈຫົວເອີ້ອສຽງໄພ່ພ້າລາດຊະດອນກໍ່ຫົວຂວັນ ພະຍາຈຶ່ງສຽງຄັບສະໜາມຫຼວງ ແລ້ວພະຍາກໍ່ສັ່ງໃຫ້ເສນາໄປ ຍົກເອົາກອນຄຳນານອຍ ໃຫ້ທ້າວກ່ຳພ້າ. ທັງເວົ້າວ່າ: ເຈົ້າຕົວະເກັ່ງຫຼາຍ ມື້ອື່ນຕົວະໃຫ້ຟັງອີກເດີ ພະອົງ ຍັງຢາກຟັງຕື່ມ. ເມື່ອສຳເລັດການຕົວະ ຮອບນີ້ ທັງພະຍາກໍ່ກັບສູ່ປາງຫອງ, ລາດຊະດອນກໍ່ກັບຄືນບ້ານ ອາມາດກໍ່ບອກໃຫ້ທ້າວກ່ຳພ້າໄປພັກຢູ່ທີ່ນັ່ງແຂກ ຂອງພະຍາດັ່ງເດີມ.

- ຄ່ຳຄືນນັ້ນ ເສນາອາມາດກໍ່ມາລັກລົມກັນວ່າ: ຕາຍ ! ທ້າວກ່ຳພ້າຕົວະ ແຕ່ເທົ່ານັ້ນຊ້ຳໄດ້ຄຳເປັນໂງ່ນ, ເຮົາຢູ່ເຝົ້າພະຍາຕັ້ງສິບປີສີ່ຊາດບໍ່ເຫັນໃຜໄດ້ຄຳທີ່ ຈອມກອຍທັງຈຶ່ງຄຽດພະຍາທັງຂີ້ສຽດທ້າວກ່ຳພ້າ. ຊັ້ນມື້ອື່ນພະຍາກໍ່ບອກໃຫ້ກ່ຳພ້າຕົວະ ຕື່ມອີກພວກເຮົາພາກັນຢ່າວ່າບັກກ່ຳພ້າຂີ້ຕົວະ, ໃຫ້ວ່າແມ່ນອີຫຼີຊັ້ນເດີ ໃຫ້ເວົ້າແນວນັ້ນ ທຸກຄົນພວກເສນາມັດກັນແນວນັ້ນ.

ຄັນເຖິງມື້ໃໝ່ ຮອດຍາມພັດມັດຍາມໂຮມເຂົາກໍ່ຕີກອງຫຼວງໃຫ້ຄົນລົງໂຮມ ສະໜາມຫຼວງບ່ອນເກົ່າ. ລາດຊະດອນກໍ່ລູ່ຫຼັ່ງກັນໄປທັງໂສເລ້ກັນວ່າກ່ຳພ້າຊິຕົວະຫຍັງອີກ ນໍ່ມັນຕັ້ງເກີດມາມີບຸນຍະສົມພານແທ້.

ຄັນພະຍາມາເຖິງສະໜາມກໍ່ປະກາດຟັງການຕົວະຂອງທ້າວກ່ຳພ້າເປັນມື້ ທີ ໔ ອີກທັງບອກໃຫ້ເສນາອາມາດຟັງວ່າມັນຕົວະແທ້ຫຼືບໍ່, ພໍບອກແລ້ວກໍ່ອ່ວາຍມາຖາມ ບັກກ່ຳພ້າວ່າ: ພໍ່ເຈົ້າເອົາຕັງໄປຕິດຊ້າງໄດ້ແລ້ວ ເພິ່ນເອົາໄປເຮັດຫຍັງ ? ໄປໄວ້ໃສ? ກ່ຳພ້າກໍ່ຍິ້ມໄຫວ້ພະຍາພ້ອມລາດຊະດອນທຸກຖ້ວນໜ້າແລ້ວກ່າວວ່າ: ພໍ່ຂ້ານ້ອຍໄດ້ຊ້າງແລ້ວກໍ່ເອົາມາຂາຍໃຫ້ພໍ່ພະຍາ ເງິນຄ່າຊ້າງກໍ່ຍັງບໍ່ໄດ້ເທົ່າປານນີ້ ເພິ່ນກໍ່ຕາຍໄປກ່ອນແລ້ວ. ພໍ່ຂອງພະຍາກໍ່ຊ້ຳຕາຍໄປແລ້ວຄືກັນ ຈັກຊິໄປຖາມໃຜ ມັນກໍ່ເປັນແນວນັ້ນແລ້ວເລື່ອງຂອງມັນ, ພະຍາກໍ່ອ່ວາຍມາຖາມເສນາທັງຫຼາຍອີກວ່າ ມັນເວົ້າແທ້ຫຼືມັນຕົວະ ? ພະຍາຖາມຕັ້ງ ໔ - ໕ ເທື່ອບໍ່ເຫັນເສນາໃດຕອບ. ຄັນວ່າແມ່ນບັກກ່ຳພ້າກໍ່ຊິໄດ້, ຄັນວ່າບໍ່ແມ່ນວ່າຕົວະ ກ່ຳພ້າກໍ່ຍັງຊິໄດ້ເງິນຄ່າຊ້າງຢູ່. ດົນຫຼາຍພະຍາກໍ່ຮ້ອງຖາມເສນາອີກວ່າ: ມັນຕົວະຫຼືມັນເວົ້າແທ້ວະ ?

- ເສນາບໍ່ຊາງແນວເຮັດກໍ່ຍິ້ມໄຫວ້ແລ້ວຕອບວ່າ: ແມ່ນແທ້ຂ້ານ້ອຍ ກໍ່ແມ່ນຄືຄວາມບັກກ່ຳພ້າເວົ້ານັ້ນທຸກອັນແລ້ວ.

- ພະຍາຖາມບັກກຳພ້າຕໍ່: ພໍ່ເຈົ້າມີຊ້າງຈັກໂຕ ? ໂຕໃຫຍ່ຈັກໂຕ, ໂຕນ້ອຍເດ, ມີຈັກໂຕ ? ທ້າວກຳພ້າກໍ່ຕອບ: ມີຈັກໂຕນັ້ນຂ້ານ້ອຍບໍ່ຈື່ ຮູ້ແຕ່ລາຄາຂອງມັນໂຕໃຫຍ່ໂຕລະ ໔.000 ໂຕນ້ອຍໂຕລະ ໓.000 ຊ້າງໃນເມືອງນີ້ແມ່ນຊ້າງພໍ່ຂ້ານ້ອຍໝົດ.

ເວົ້າແນວນີ້ພະຍາກໍ່ສັ່ງໃຫ້ເສນາໄປນັບເບິ່ງຊ້າງທົ່ວເມືອງ ທັງໂຕໃຫຍ່ ໂຕນ້ອຍ ໃຫ້ຈົດແອ່ນແຕ່ນກາຍມາພ້ອມ. ເລື່ອງການຕົວະ ນັ້ນທີສອງນາຮອດນີ້ກໍ່ສຸດສຽງແລວກໍ່ພາກັນກັບຄືນບ້ານໃຜເຮືອນມັນ, ສ່ວນຊາຍກຳພ້າ ເສນາກໍ່ນຳເມືອທີ່ນັ່ງແຂກຂອງພະຍາອີກ ເພື່ອລໍຖ້າເອົາເງິນຄ່າຊ້າງ.

ພວກເສນານາເວົ້າກັນເຖິງເລື່ອງຄວາມໂງຈ້າຂອງພະຍາ ບາງຄົນກໍ່ຢາກແກ້ຄຳຕັດສິນຂອງພະຍາ, ບາງຄົນກໍ່ເວົ້າວ່າ: ເຮົາໄປທູນພະຍາວ່າ ບັກກຳພ້າບໍ່ໄດ້ຕົວະ,ມັນເວົ້າຄວາມຈິງ ລອງເບິ່ງພະຍາຈະເວົ້າແນວໃດ ? ວ່າແລວເຂົາກໍ່ລອງໄປທູນພະຍາດັ່ງທີ່ວ່າ.

ເສນາໄດ້ຖາມພະຍາວ່າ: ບັກກຳພ້າມັນບໍ່ໄດ້ຕົວະ ກໍ່ຊິໃຫ້ມັນຢູ່ຫວະ ? ຂ້ານ້ອຍ ພະຍາຊ້ຳຕອບ: ນັ້ນລະມັນບໍ່ຕົວະກໍ່ແມ່ນມັນເວົ້າຈິງ ກູຈຶ່ງສັ່ງໃຫ້ສູໄປນັບເບິ່ງຊ້າງ ວາງເບິ່ງລາຄາແລວກໍ່ຄິດໄລ່ໄຖ່ເງິນໃຫ້ມັນສາ. ຄັນກູເປັນໜີ້ເປັນສິນແທນພໍ່ອີກ ບອກວ່າຕາຍແລວກູຊິບໍ່ໄດ້ເກີດຊາດໜ້າອີກ. ເປັນດັ່ງນັ້ນເສນາກໍ່ໄດ້ເຮັດຕາມພະຍາສັ່ງ, ນັບເບິ່ງຊ້າງ ວາງໄລ່ລາຄາ ຕົກເປັນເງິນເຖິງໜຶ່ງໂກດສີ່ແສນເອົາມາມອບໃຫ້ທ້າວກຳພ້າ ແລວພະຍາກໍ່ສັ່ງໃຫ້ເສນາໄປສົ່ງຕາມນຳຮອດເຖິງບ້ານຝາຍປາຍທົ່ວນາຂອງທ້າວກຳພ້າ. ຝ່າຍຊາຍກຳພ້າກໍ່ເກີດມັ່ງມີດີໄດບໍ່ໄຮສິນບັດ ອັດຄວາມຈົນອີກ.

● ສິນແສງ ໂກສາວິລະ-ຊຽບຊຽງ



ຈິດຕະກຳ ຝາວັດຊຸບມຸງ ວຽງຈັນ



ພັນທະນາສອນ


ຖ່ຳນ້ຳ
ພະຍາເງືອກ

ສະໄຫມກ່ອນ ມີພໍ່ຫມ້າຍທຸກຍາກຜູ້ຫນຶ່ງ ອາໄສຢູ່ ຕູບນ້ອຍແຄມບ້ານ ກັບລູກສາວຜູ້ດຽວຂອງຕົນ. ພາຍຫລັງເມັຽຕາຍແລ້ວພໍ່ຫມ້າຍຜູ້ນັ້ນກໍ່ຊອກເອົາເມັຽໃຫມ່ ເພື່ອວ່າ ມາເບິ່ງແຍງລ້ຽງດູລູກຊ່ອຍ, ກ່ອນໄດ້ເມັຽໃຫມ່ຜູ້ນັ້ນກໍ່ຍອມລາວຊອກລົມດົນເຕີບຈຶ່ງພໍ້ ນາງເປັນແມ່ຫມ້າຍໃຈດີ ຊຶ່ງຮັກລູກແພງຜົວ ແມ່ຫມ້າຍຜູ້ນັ້ນກໍ່ມີລູກສາວຜູ້ຫນຶ່ງກ່ອນແລ້ວ ອາຍຸສ່ຳຣານປານດຽວກັບລູກສາວຂອງພໍ່ຫມ້າຍ, ຍ້ອນນາງຂາດຜູ້ເພິ່ງພາ ບໍ່ມີຜູ້ພາເຣັດໄຮໄຖນາ ຈຶ່ງຕົກລົງປົງໃຈເອົາກັບພໍ່ຫມ້າຍ.

ພໍ່ຫມ້າຍເອົາກັບແມ່ຫມ້າຍ ຢູ່ຮ່ວມກັນຕໍ່ມາບໍ່ດົນ ເມັຽໃຫມ່ຂອງພໍ່ຫມ້າຍ ກໍ່ຕາຍອີກ ປະລູກສາວນ້ອຍໄວ້ໃຫ້ຜົວໃຫມ່ລ້ຽງ. ແຕ່ໃດມາພໍ່ຫມ້າຍຜູ້ນັ້ນເປັນຄົນໃຈດີ, ບໍ່ເຄີຍ ອິດສາບັງບຽດໃຜ, ເມື່ອເມັຽທັງສອງຕາຍໄປແລ້ວລາວຕອງໃຊ້ຄວາມດຸຫມັ່ນພາກພຽນຂອງຕົນຄວັດເຂ່ຽທຳນາຫາກິນລ້ຽງລູກສາວທັງສອງດ້ວຍຄວາມລຳບາກ ຈຶ່ງພໍ່ກຸມປາກ ໄປແຕລະມື້.

ຢູ່ຕໍ່ມາມື້ຫນຶ່ງ ພໍ່ຫມ້າຍແບກສຽມເຂົ້າປ່າໄປຊອກຫາຂຸດມັນ, ຂຸດກອຍມາລ້ຽງ ລູກຕາມເຄີຍ. **ແຕ່ຂຸດມັນມື້ນີ້**ແນວແປກປະຫຼາດ ລາວຂຸດນຳຮາກເຄືອມັນເຄືອໃຫຍ່ຊຶ່ງມີຫົວໃຫຍ່ດີ ແຕ່ຂຸດລົງໄປທໍ່ໃດຮາກມັນກໍ່ຍັງຍາວຢັ່ງລົງບໍ່ສຸດຈັກເທື່ອ, ຂຸດລົງໄປຄິດວ່າ ຈະເຫັນຫົວມັນບາດໃດກໍ່ບໍ່ເຫັນ ຍ້ອນຄວາມດຸຫມັ່ນພາກພຽນ ແລະ ກໍ່ໄດ້ຕັ້ງໃຈ ແຕ່ຫົວທີແລ້ວ ຈະຍ້າຍໄປຊອກຂຸດເຄືອອື່ນກໍ່ແຮງຊິໄດ້ເລີ່ມມາແຕ່ຕົ້ນກໍ່ຊິໄດ້ຂຸດຫຼາຍຄືກັນ, ເຖິງວ່າອິດເມື່ອຍເມື່ອຍແຮງປານໃດລາວກໍ່ອົດທົນກົ້ມຫນ້າຂຸດຕໍ່ໄປ ແຕ່ເລິກພຽງຫົວເຂົ່າແລ້ວພຽງແອວ ແຕ່ເລິກພຽງແອວ ພຽງຄໍແລ້ວຫລິບຫົວກໍ່ພໍດີລົ່ງຄົວະໃສ່ຜົ້ງກວ້າງອັນຫນຶ່ງ ໃນຜົ້ງນັ້ນມີໄຫຄຳສາມຫນ່ວຍຕັ້ງຢູ່, ພໍ່ຫມ້າຍເຫັນຄຳເຕັມສາມໄຫກໍ່ຫລົງຫວງຂື້ນຫມົດແຮງ"ບຸນກູແລ້ວ !" ແຕ່ນັ້ນພໍ່ຫມ້າຍກໍ່ເຊົາຊອກຂຸດມັນ ລາວຂົນເອົາຄຳຢູ່ໃນໄຫເມືອບ້ານ ຫຼາຍຖຽວຈຶ່ງຫມົດ.

ນັບແຕ່ໄດ້ໄຫຄຳມາເຮືອນ ພໍ່ຫມ້າຍກໍ່ຮັ່ງມີຂຶ້ນ, ບໍ່ອຶດເງິນຄຳໃຊ້ຈ່າຍ ຈົນໄທບ້ານເອີ້ນຊື່ວ່າ ພໍ່ຄຳ. ພໍ່ຄຳປຸກເຮືອນຫລັງໃຫຍ່ທໍ່ໂຮງພະຍາແລວຈ້າງຄົນມາຢູ່ຮັບໃຊ້ ເປັນຮ້ອຍ ເປັນພັນຄົນ. ແຕ່ນັ້ນມາພໍ່ຄຳນັບມື້ໄດ້ຊຸມຄົນໃຊ້ ແລະ ຫວງແຫນນຳຊັບສິນ ເງິນ

ຄຳຫຼາຍ ຈຶ່ງຄ່ອຍກາຍເກີດມີນິໄສມັກໃຈຮ້າຍ, ດູຖູກຄົນອື່ນ ທັງຂີ້ຖີ່ຈັງໄຮຂຶ້ນນຳ ທຸກມື້, ການເວົ້ານຳລູກສາວຂອງຕົນ ແລະ ລູກຂອງເນຍກໍ່ນັບມື້ຕ່າງກັນ ເພາະຄິດວ່າ ບາດມັນເຖົ້າແກ່ຕາຍໄປກໍ່ຕ້ອງມີລູກສາວລູກເຂີຍສືບມູນມັງ. ອີກອັນໜຶ່ງພໍ່ຄຳກໍ່ເຫັນວ່າ ນາງນວນລູກສາວຂອງເນຍແຮງໃຫຍ່ຂຶ້ນທໍ່ໃດນາງນວນກໍ່ແຮງມີຄວາມສວຍງາມ ທັງສະຫງຽມຄ່ຽມຄົມ ແລະ ຮູຕ່ຳຫູກຫໍໄໝເກັ່ງ. ດັ່ງນັ້ນຄົນທັງຫຼາຍຕ່າງກໍ່ຍ້ອງ ແລະ ຮັກແພງ - ນາງ, ສ່ວນນາງໂນລູກສາວຄີງຂອງພໍ່ຄຳເປັນຄົນບໍ່ງາມ ມີໃຈຖ່ອຍ ມັກອິ່ນເຫີ້ງ ນາງນວນ ແລະ ຄົນອື່ນ ດັ່ງນັ້ນຄົນທັງຫຼາຍໃຜກໍ່ຊັງ. ຍ້ອນແນວນັ້ນພໍ່ຄຳຊຶ່ງຄົນ ທັງຫຼາຍຕ້ອງໄດ້ເອີ້ນວ່າເສດຖີຄຳ ແຮ່ງມີຄວາມອິດສາ ແລະ ຢ້ານລູກນ້າລື່ນລູກຕົນ ຈຶ່ງຫາທຸກວິທີເຮັດໃຫ້ນາງນວນຕ້ອງເປັນຄົນເຮື້ຮ້າຍ ບໍ່ໃຫ້ແຕ່ງຕົວ ແລະ ບໍ່ໃຫ້ພົບພໍ້ຊາວບ້ານ ຊາວເມືອງຫຼາຍ. ແຕ່ລະມື້ເສດຖີຄຳ ໄດ້ໃຫ້ນາງນວນໄປລ້ຽງຄວາຍຝູງໜຶ່ງ ຊຶ່ງມີຢູ່ ຫ້າຮ້ອຍໂຕ ຢູ່ ໄກງບ້ານພູດຽວ ແລະ ສັ່ງເດັດຂາດວ່າບໍ່ໃຫ້ຄວາຍເສຽ ແລະ ໃຫ້ມັນໄດ້ກິນຫຍ້າອິ່ມໝົດທຸກໂຕຈຶ່ງໃຫ້ໄລປອງມາແຫລ່ງ. ເພື່ອບໍ່ໃຫ້ຄົນພໍ້ເຫັນຄວາມງາມ ຂອງນາງນວນ, ເສດຖີຄຳໄດ້ບັງຄັບໃຫ້ນາງໄປເອົາຄວາຍອອກໄປລ້ຽງແຕ່ຍາມຍັງມືດ ແລະຈົນຮອດຍາມຄ່ຳມືດຈຶ່ງໃຫ້ໄລຄວາຍມາບ້ານ.

ບັງເອີນມື້ໜຶ່ງ ພະຍາເງືອກຢູ່ໜອງຈອມພູບ່ອນນາງນວນໄປລ້ຽງຄວາຍເຫັນຄວາຍກິນຫຍ້າຢູ່ໃນປ່າເປັ້ນພູກໍ່ຄິດຢາກ ຈຶ່ງປອມເປັນເສືອໂຄ່ງໂຕໜຶ່ງມາຊຸບເອົາຄວາຍ ຂອງເສດຖີຄຳໄປກິນໂຕໜຶ່ງ. ເມື່ອຄ່ຳມືດມານາງນວນໄລຄວາຍເມືອຄອກ, ເສດຖີຄຳ ກໍ່ມາຢືນຢູ່ປາກປະຕູຄອກ ແລະ ນັບຄວາຍ ບໍ່ເຫັນຄວາຍໂຕທີ່ຫ້າຮ້ອຍ ຈຶ່ງມີຄວາມ ໂກດຮ້າຍດ່າວ່າຫຸບຕີນາງນວນ, ສຸດທ້າຍສັ່ງໃຫ້ຄົນໃຊ້ແຖຜົມນາງຖິ້ມຈົນຫົວໂລນຫົວລາຍແລວປາດຫູນາງຖິ້ມເບື້ອງໜຶ່ງ ເຮັດໃຫ້ນາງເປັນຄົນເຮື້ຮ້າຍ.

ມື້ຕໍ່ມາ ນາງກໍ່ຖືກບັງຄັບໃຫ້ໄປລ້ຽງຄວາຍຕາມເຄີຍ ເທື່ອນີ້ເສດຖີຄຳ ກັບລູກ ສາວສັ່ງນາງນວນອີກວ່າ:

- ຄັນມຶງເຮັດຄວາຍເສຽອີກມື້ນີ້ມຶງຕ້ອງເສຽຫູອີກເບື້ອງໜຶ່ງ. ໄດ້ຍິນບໍ ? ນາງນວນກໍ່ກົ້ມຂາບຮັບຄວາມດ້ວຍຄວາມຈຳໃຈ ແລະ ໄລຄວາຍໄປລ້ຽງຢູ່ຕີນພູບ່ອນເກົ່າອີກ. ສ່ວນພະຍາເງືອກເຄີຍໄດ້ກິນຄວາຍກໍ່ອອກມາຈອບເອົາຄວາຍໄປກິນອີກ. ແຕ່ເທື່ອນີ້ພະຍາເງືອກໄດ້ປອມເປັນສິງໂຕມາກຸມປ້ຳເອົາຄວາຍເຖິກໃຫຍ່ ນາງນວນໄດ້ຍິນສຽງ ດັງຄິດຂະກໍ່ຟ້າວແລ່ນໄປເບິ່ງ. ເຫັນສິງໂຕປ້ຳກິນຄວາຍຢູ່ ນາງຈຶ່ງລືມຮອດຄວາມຢ້ານຟ້າວ

ຮ້ອງໄຫ້ຂຶ້ນ ແລະ ອ້ອນວອນ:

- ສິງໂຕໃຫຍ່ຮ້າຍເຮີຍ, ຢ່າໄດ້ກິນຄວາຍຂ້ອຍເທາະ ຄັນເຈົ້າຊິກິນແທ້ກໍ່ໃຫ້ມາກິນຂ້ອຍນີ້ສາ ເພາະວ່າຄັນບໍ່ເຫັນຄວາຍໂຕໜຶ່ງອີກພໍ່ນ້າຂ້ອຍກໍ່ຈະທຸບຕີທາລຸນຂ້ອຍ ແລະ ຫູຂ້ອຍເບື້ອງນີ້ກໍ່ຈະບໍ່ຍັງອີກຂໍໃຫ້ເຈົ້າອີ່ດູຂ້ອຍແດ່ເທາະ. ສິ່ງໂຕຊຶ່ງແມ່ນພະຍາເງືອກ ເຫັນນາງສາວຫົວໂລ້ນ ແລະ ບໍ່ມີຫູເບື້ອງໜຶ່ງນຸ່ງເຄື່ອງຂາດສ້ອຍ ເປິເປື້ອນມາຮ້ອງໄຫ້ ຫານປານບໍ່ໃຫ້ຕົນກິນເຫຍື່ອ ດັ່ງນັ້ນກໍ່ຍັງຄິດໃຈຮ້າຍ, ແຕ່ເມື່ອເບິ່ງໄປມາຄັກໆກໍ່ຈຶ່ງເຫັນນາງເປັນສາວ ແລະ ງາມດີ, ພະຍາເງືອກຈຶ່ງປ່ຽນໃຈ ແລະ ຄິດອີ່ດູຕົນຊາດນາງ ນັບແຕ່ນັ້ນມາພະຍາເງືອກກໍ່ລັກມາຈອບສ່ອງເບິ່ງນາງນວນເລື້ອຍໆ ແຮ່ງເບິ່ງນາງໄປ ຄົນພະຍາເງືອກກໍ່ເຫັນວ່ານາງເປັນຄົນດີ, ຄົນງາມ ແລະ ເປັນຕາຮັກ ຈຶ່ງປອງເອົາ ນາງໄປເປັນເມຽ. ມື້ໜຶ່ງພະຍາເງືອກໄດ້ກັບເພດເປັນຄວາຍເຖິກໂຕໜຶ່ງແລ່ນ ອອກຈາກຝູງຂຶ້ນເນີນຈອມພູ, ນາງນວນເຫັນດັ່ງນັ້ນ ກໍ່ຟ້າວໄລ່ຕິດຕາມໄປຫວັງປ້ອງຄວາຍ ຄືນມາຫາໝູ່ ແຕ່ແລ່ນນຳທໍ່ໃດຄວາຍກໍ່ແຮ່ງແລ່ນຂຶ້ນເນີນນຳບໍ່ທັນຈັກເທື່ອ, ສຸດທ້າຍກໍ່ບໍ່ ເຫັນຄວາຍອີກ ເຫັນແຕ່ຮອຍຕີນຂຶ້ນເນີນຈອມພູຕາເວັນໃກ້ຈະຕົກແລ້ວ ນາງກໍ່ມີຄວາມ ອິດເມື່ອຍຫຼາຍແລ້ວ ແຕ່ກໍ່ບໍ່ໄດ້ຄວາຍກັບມາ ຄັນຊິກັບຄືນເມືອກໍ່ຢ້ານພໍ່ນ້າຕີຂ້າ, ບຶດໜຶ່ງ - ສຽງໂປ້ງຄວາຍກໍ່ມິດ ຮອຍຕີນຄວາຍກໍ່ບໍ່ເຫັນ ຄັນຊິກັບເມືອບ້ານກໍ່ບໍ່ມີທາງ ມີແຕ່ປ່າໜາຕຶບບໍ່ມີທາງລອດໄດ້. ບັງເອີນເວລານັ້ນ ມີນົກນ້ອຍໂຕປະຫຼາດໂຕໜຶ່ງຮ້ອງເປັນຄວາມຄົນວ່າ:

- ຄັນວ່າຍິງຜັດຫົວລາຍ, ຄັນແມ່ນຊາຍຜັດນຸ່ງສິ້ນ... ຄັນວ່າຄົນຂີ້ຮ້າຍເບິ່ງ ໜ້າຊ້ຳຜັດງາມ...

ນາງນວນຍ່າງໄປອີກຍ່ານໜຶ່ງກໍ່ພົບເຫັນຕົ້ນໝາກມີ້ໝາກມ່ວງໝາກຈອງ ໝາກຄາຍ ໝາກສົ້ມ ໝາກຫວານ ຟ່າໄຟມີຄົບ ເບິ່ງສວນອ້ອຍທົກລຳທໍ່ຂາ ອ້ອຍປາ ລຳທໍ່ແຄ່ງ ມີທັງໝາກກ້ວຍ ເຄື່ອ ລະຮອຍທີວເຕັມ ສວນຄືມີຄົນປູກ ບົວລະບັດຄອຍເຝົ້າ ແຕ່ນາງນວນບໍ່ເຫັນຄົນ, ນາງຈຶ່ງເຍື້ອນຍ່າງເຂົ້າໄປອີກຮອດກາງສວນກໍ່ເຫັນເປັນ ໜອງກວ້າງ ນ້ຳຂຽວໃສຈົ່ງຫລົ່ງ ນາງນວນກໍ່ຄິດສົງໄສວ່າຄືຊິແມ່ນແດນຫົວພູພະຍາເງືອກ ທີ່ຊາວບ້ານເຄີຍຊ່າລືມີຄົນມາຫລົງແກວ່ຢູ່ນີ້ຍ້ອນກິນໝາກໄມ້ແລ້ວລັກໃສ່ຖົງເມືອນຳ. ເມື່ອປານໃດກໍ່ກ້ຽວກັບມາໜອງບໍ່ໄປຮອດເຮືອນຈັກເທື່ອ. ແຕ່ນາງກໍ່ອົດບໍ່ໄດ້, ຍອມ ອິດ

ເມື່ອຍຫອດຫິວ ຈຶ່ງລົງຕັກກິນນ້ຳໜອງ ແລະ ຕ່ອຍໝາກໄມ້ມາກິນ. ພະຍາເງືອກໄດ້ກັບເພດເປັນນົກສັບໝາກໄມ້ຫຼົ່ນລົງໃສ່ຖົງເສື້ອນາງນວນ, ດັ່ງນັ້ນນາງຈຶ່ງຍ່າງອິ່ນ ໄປວຽນມາຢູ່ແຕ່ແຄມໜອງບໍ່ມີທາງອອກຈົນຟ້າມືດແລ້ວນາງກໍ່ຮ້ອງໄຫ້ຮ່ຳໄຮ ແລະ ຖາມກົກໄມ້ໃຫຍ່ກົກໜຶ່ງວ່າ:

- ເຈົ້າປ່າດົງວົງກົດເຮີຍ, ເຈົ້າປ່າຮູ້ບໍ່ນໍ່ວ່າຜູ້ຂ້ານີ້ມີກຳມີເວນຫຍັງ ຈຶ່ງໄດ້ ມາກ້ຽວໆວຽນໆຢູ່ໃນປ່າແຫ່ງນີ້ ບອກຜູ້ຂ້າແດ່ເທາະ.

ກົກໄມ້ໃຫຍ່ສັ່ນງ່າຕິ່ງໃບ ແລະ ມີສຽງເວົ້າດັງກ້ອງອອກມາວ່າ:

- ນາງສາວຜູ້ດີຜູ້ງາມເຮີຍ ຕົນເຈົ້າສົມຄວນເປັນເຈົ້າປ່າແຫ່ງນີ້ກັບເຮົາແລ້ວ ເຮົາຢາກໃຫ້ເຈົ້າມີຄວາມສຸກສະບາຍ ແລະ ເຈົ້າຈະສຸກສະບາຍຖ້າເຈົ້າຢູ່ນຳເຮົາຕໍ່ໄປ.

- ເຈົ້າປ່າເຮີຍ ຖ້າແມ່ນເຈົ້າປ່າເປັນຜູ້ບໍ່ປ່ອຍໃຫ້ຜູ້ຂ້າເມືອ ຜູ້ຂ້າກໍ່ຂໍໃຫ້ເຈົ້າປ່າຈົ່ງໄດ້ປ່ອຍຜູ້ຂ້າເມືອກ່ອນເທາະ ເພາະວ່າພໍ່ມາຄົງຈະຄອງຄອຍ ແລະ ຮ້າຍດ່າຜູ້ຂ້າ ທີ່ໄດ້ປະວົງປະຄວາຍໜີມາຢູ່ນີ້ ຜູ້ຂ້າຂໍທານຊີວິດນຳເທາະ.

ຕົ້ນໄມ້ຫົວຂຶ້ນ ຮະ ຮະ ແລ້ວເວົ້າຕໍ່ໄປວ່າ:

- ເຈົ້າບໍ່ຕ້ອງກັບເມືອໃຫ້ເຂົາຮ້າຍດ່າຂົ່ມເຫັງເຈົ້າຕໍ່ໄປນາງເຮີຍ ເຮົາຈະ ທານຄວາມສຸກໃຫ້ເຈົ້າທຸກຢ່າງຕາມທີ່ເຈົ້າປະສົງ.

ນາງນວນລຸກຂຶ້ນຖອຍຫລັງຢ່າງສັ່ນເຊັນ ແລະ ເວົ້າວ່າ:

- ບໍ່ ! ບໍ່ ຈະໃຫ້ຂ້ອຍຢູ່ນຳເຈົ້າໄດ້ຢ່າງໃດ ໃນເມື່ອຂ້ອຍບໍ່ຮູ້ວ່າເຈົ້າແມ່ນໃຜ ມີຮູບຊົງແນວໃດ ຖ້າເຈົ້າແມ່ນຜີປ່າ ແມ່ນສັດ ຫຼື ເງືອກຮ້າຍທາລາກິນຄົນ, ຂ້ອຍກໍ່ບໍ່ຢູ່ນຳເຈົ້າໄດ້ແລ້ວ, ປ່ອຍຂ້ອຍເມືອຕາມເວນຂ້ອຍສາເທາະ.

- ນາງນ້ອງເຮີຍ ອ້າຍນີ້ເປັນພະຍາແຫ່ງເງືອກທັງຫຼາຍ, ແຕ່ກ່ອນຂ້ອຍກໍ່ເຄີຍ ທຳຮ້າຍຂ້າຄົນກິນເປັນອາຫານ, ແຕ່ເມື່ອມາເຫັນມະນຸດຜູ້ທຸກຍາກແຕ່ດີງາມເປັນຕາຮັກ ຄືເຈົ້ານີ້ເຮັດໃຫ້ອ້າຍບໍ່ກ້າກິນຄົນອີກ ແລະ ຖ້ານ້ອງຕົກລົງຮັກແພງຢູ່ນຳອ້າຍຕໍ່ໄປ ອ້າຍກໍ່ຈະເຊົາກິນຄົນ ເປັນພີ່ເປັນນ້ອງກັບຄົນຕະຫຼອດໄປ.

- ອ້າຍພະຍາເງືອກເຮີຍ ຂ້ອຍຢູ່ນຳເຈົ້າບໍ່ໄດ້ດອກ ເພາະວ່າຖ້າເຈົ້າບໍ່ກິນ ຂ້ອຍແລະ ຄົນທັງຫຼາຍ ກໍ່ຍັງເຊື້ອສາຍພີ່ນ້ອງຂອງເຈົ້າຕ້ອງກິນເປັນແນ່.

ພະຍາເງືອກເວົ້າວ່າ:

- ນາງຄົນງາມເຮີຍ ເຮົາເປັນພະຍາເງືອກ ເຮົາມີສິດສັ່ງໃຫ້ພວກເງືອກງູທັງມວນ

ເຊົາກິນຄົນໄດ້ໝົດ. ສ່ວນເຮົາຢາກເອົານາງມາເປັນເມຍຍາມໃດກໍ່ໄດ້ ແຕ່ເຮົາຢາກໃຫ້ເຈົ້າລ້ຽງກັບເຮົາ ແລະ ມີຄວາມຮັກແພງກັບເຮົາກ່ອນ.

ນາງນວນຍິນດັ່ງນັ້ນກໍ່ເຊົາຢ້ານແຕ່ຍັງເວົ້າຂັດໃຫ້ເງືອກເອົາຕາມເງື່ອນໄຂ ຂອງຕົນວ່າ:

- ພະຍາເງືອກງູຜູ້ມີອຳນາດເອີຍ ຖ້າເຈົ້າຊິເອົາເຮົາ ຖ້າເຈົ້າເຊົາກິນຄົນ ແທ້ໆ ເຮົາກໍ່ບໍ່ວ່າແຕ່ເຮົາບໍ່ຮູ້ຮັກມັກຜູ້ທີ່ເຮົາບໍ່ຮູ້ບໍ່ເຫັນຈັກເທື່ອດອກ ເຈົ້າຈົ່ງອອກມາໃຫ້ ເຮົາເຫັນແດ່ເທາະ !

- ເຮົາຈະອອກໄປໃຫ້ນາງເບິ່ງດຽວນີ້ ເວົ້າແລ້ວພະຍາເງືອກກໍ່ປອມເປັນ ບ່າວຜູ້ງາມ ລ່ຳສັນແຂງແຮງເນື້ອແດງອ່ອນຄືແຕງ. ຍ່າງອອກຂ້າງກົກໄມ້ກົກນັ້ນມາຫາ ນາງສາວ, ນາງນອຍຮູ້ສຶກໜ້າອາຍ ຍ້ອນເຄື່ອງນຸ່ງຂອງຖືຂາດສ້ອຍແປນຄິງ ຈຶ່ງນັ່ງໂຍບລົງບັງພຸ່ມໄມ້, ທັນໃດນັ້ນກໍ່ໄມ້ໃຫຍ່ກັບກາຍເປັນຫໍພະສາດຫລັງໃຫຍ່ຈອມສູງພຽງຟ້າ ພຸ່ມໄມ້ພຸ່ມນາງນັ່ງກໍ່ກາຍເປັນສວນ.

ບ່າວພະຍາເງືອກໂຍນເສື້ອແພລ້ວ ກັບສິ້ນໝີ່ສິ້ນໄໝເງິນໄໝຄຳງາມເຫຼື້ອມໄປໃຫ້ນາງຖາຍ. ນາງນຸ່ງທັງເຄື່ອງໃໝ່ໃສ່ແພງາມແລ້ວພາໃຫ້ນາງງາມຂຶ້ນກວ່າເກົ່າ ຕໍ່ມານາງສາວລູກແມ່ໝ້າຍກໍ່ກາຍເປັນເມຍຂອງພະຍາເງືອກ ແລະ ເມືອງເງືອກທັງເມືອງກໍ່ປ່າວກັນເຊົາກິນຄົນ, ຍ້ອນນາງສາວໄດ້ສັ່ງສອນໃຫ້ພະຍາເງືອກຮູ້ຮັກຄົນ, ຮັກພີ່ນ້ອງ - ເຊື້ອສາຍຂອງຕົນ, ແຕ່ນັ້ນມາພວກເງືອກງູ ທັງຫຼາຍກໍ່ບໍ່ເປັນປໍລະປັກກັບຄົນອີກ ເຫັນຄົນດຳນ້ຳກໍ່ຊ່ອຍຍູ້ ເອົາຂຶ້ນຝັ່ງໂດຍດີ. ຜົວເມຍໃໝ່ຢູ່ຮ່ວມກັນຢ່າງມີຄວາມສຸກ.

ສ່ວນເສດຖີພໍ່ໝ້າຍຢູ່ທາງບ້ານ ຄ່ຳມືດແລ້ວເຫັນຄວາຍມາແຫຼງຄົບຖ້ວນ, ບໍ່ເຫັນແຕ່ລູກສາວຂອງເມຍ ມັນກໍ່ແຮ່ງດີໃຈ ມັນຄິດໃນໃຈວ່າ:

" ມັນບໍ່ມາເລີຍກໍ່ດີແລ້ວ ໜີໄປຕາຍເອງບໍ່ຖ້າຂ້າຍາກຂ້າຊາ "

ແລະ ເສດຖີກໍ່ຄຶດດີໃຈອີກວ່າລູກສາວຂອງຕົນກໍ່ໃຫຍ່ເປັນສາວ ເຖິງວ່າບໍ່ງາມ ປານໃດແຕ່ກໍ່ເປັນລູກຜູ້ຮັ່ງຜູ້ມີ, ມີຫຼາຍຄົນກໍ່ຢາກມາເປັນລູກເຂີຍເສດຖີ ເພື່ອໄດ້ມູນມັງຂອງພໍ່. ແຕ່ເສດຖີພໍ່ໝ້າຍ ຢາກໄດ້ເຂີຍຜູ້ວິເສດ ເກັ່ງກ້າສາມາດເຂົາຈຶ່ງຫາວິທີເລືອກເບິ່ງ ຜູ້ເປັນແນວນັ້ນ.

ມື້ໜຶ່ງເສດຖີປ່າວໃຫ້ຊາວເມືອງໃນເມືອງນອກວ່າ: ຖ້າໃຜຢາກເປັນລູກເຂີຍເສດຖີ

ໃຫ້ຊອກເອົາໄຂ່ຫນ່ວຍໃຫຍ່ທີ່ສຸດມາໃຫ້ຕົນກິນ. ຖ້າໃຜຊອກໄດ້ໄຂ່ຫນ່ວຍໃຫຍ່ ລື່ນຫມູ່ເສດຖີຈະແຕ່ງເອົາເປັນລູກເຂີຍ. ຊາຍຫນຸ່ມບ່າວແພວ, ພໍ່ຮ້າງ, ພໍ່ຫມ້າຍ ທັງທຸກທັງຮັ່ງທົ່ວບ້ານທົ່ວເມືອງຕ່າງກໍ່ອອກ**ຫຼຽວ**ຊອກຫາໄຂ່ໄກ່, ໄຂ່ເປັດ, ໄຂ່ຫ່ານ, ໄຂ່ນົກ ທີ່ໃຫຍ່ກວ່າຫມູ່ມາເຮືອນເສດຖີ, ຮອດມື້ນັດຫມາຍຄົນກໍ່ເອົາໄຂ່ຫຼັ່ງໄຫຼເຂົ້າມາເຮືອນເສດຖີ ນັບເປັນຮ້ອຍເປັນພັນຫນ່ວຍກໍ່ບໍ່ມີຫນ່ວຍໃດໃຫຍ່ລື່ນຫມູ່. ຜູ້ສຸດທ້າຍເອົາໄຂ່ ເຂົ້າມາເຮືອນເສດຖີແມ່ນຊາຍກຳພ້າຂາແພະຜູ້ຫນຶ່ງທີ່ອາໄສຢູ່ຜົ້ງໂກນກໍໄຮຂອກບ້ານ ກ່ອນທ້າວຈະໄດ້ໄຂ່ມາເສັງກໍ່ເພາະວ່າກ່ອນມື້ນີ້ຫນຶ່ງ ເມື່ອທ້າວໄປຫາຂໍທານມາຮອດແຄມນ້ຳກໍ່ເຫັນໄຂ່ຫນ່ວຍໃຫຍ່ທີ່ຫມາກພຸກ ຍ່ອງຢູ່ໂງ່ນຫີນແຄມຝັ່ງ, ທ້າວກໍ່ຟ້າວເອົາມາຕາມຄຳປ່າວປະກາດຂອງເສດຖີລອງເບິ່ງ. ເສດຖີມາບເຫັນກຳພ້າຂາແພະຜູ້ຂີ້ຮ້າຍພາຍຖົງໄຂ່ນັ່ງອັດເປ້ຍວັບໆເຂົ້າມາກາງບ້ານກໍ່ຫົວຂວັນ, ດູຖູກ ເຫັນກຳພ້າຈົກເອົາໄຂ່ໃນຖົງອອກມາຊູ້ພັດຕາຕື່ອອກ ຕົກໃຈຢ້ານກຳພ້າຜູ້ຂີ້ຮ້າຍຈະໄດ້ເປັນລູກເຂີຍ ຈຶ່ງໂກດຮ້າຍບອກ ຄົນໃຊ້ຂ້ຽນຕີ ແລະ ໄລ່ທ້າວຫນີໄປໂດຍໄວ. ພວກຄົນໃຊ້ຂອງເສດຖີ ແລະ ຊາວບ້ານ ຊາວເມືອງມາເບິ່ງການເສັງໄຂ່ໃຫຍ່ກໍ່ພາກັນງຶດງໍ້ອັດສະຈັນໄຂ່ຫນ່ວຍນັ້ນ ແລະ ກໍ່ທັງ ອິດູຕົນຊາຍກຳພ້າ.

ພາຍຫລັງການເສັງໄຂ່ໃຫຍ່ແລ້ວໆ ເສດຖີກໍ່ເຫັນວ່າມີແຕ່ໄຂ່ຫນ່ວຍດຽວ ກູ້ກຳພ້າຂາແພະເອົາມານັ້ນໃຫຍ່ກວ່າຫມູ່ຫມົດ. ເສດຖີກໍ່ມີຄວາມງຶດງໍ້ ແລະ ດີໃຈ ຊຶ່ງໄດ້ໄຂ່ໃຫຍ່ລ້າງໆຈາກກຳພ້າ ແລະ ກໍ່ຄິດວ່າໄຂ່ຫນ່ວຍນີ້ຕ້ອງແມ່ນໄຂ່ສັກສິດ ກິນແລ້ວອາດຈະເກັ່ງກ້າລື່ນຄົນທຳມະດາ. ດັ່ງນັ້ນມັນຈຶ່ງເອົາໄປຕົ້ມກິນແຕ່ຜູ້ດຽວ. ພໍແຕ່ກິນໄຂ່ຫມົດ ຫນ່ວຍເສດຖີກໍ່ຮູ້ສຶກຮ້ອນທ້ອງ ຮ້ອນຕົນໂຕ ແລະ ຢາກກິນນ້ຳ ຈຶ່ງບອກໃຫ້ລູກສາວໄປຕັກນ້ຳມາໃຫ້ກິນ, ກິນບວຍຫນຶ່ງກໍ່ບໍ່ອີ່ມ ບອກຕັກມາສອງບວຍກໍ່ຍັງບໍ່ອີ່ມ ບອກລູກສາວຫິ້ວມາທັງບັ້ງ ກິນບັ້ງຫນຶ່ງກໍ່ຍັງບໍ່ອີ່ມ ກິນສອງບັ້ງ ສາມບັ້ງກໍ່ຍັງຫິວຢູ່ ຈຶ່ງບອກລູກສາວໄປຕັກເອົາ ຢູ່ທ່ານາໃຫ້ກິນ, ກິນຫາບຫນຶ່ງກໍ່ຍັງຫິວຢູ່, ຕັກມາສອງຫາບ ສາມຫາບກໍ່ບໍ່ພໍ, ກິນບໍ່ທັນໃຈຈຶ່ງແລ່ນລົງທ່ານ້ຳກົ້ມດູດກິນເອງ. ດູດກິນນ້ຳອີ່ມແລ້ວຈຶ່ງລອຍເຂົ້າໄປກາງວັງເລິກ ແລ້ວເອີ້ນມາໃສ່ລູກສາວໃຫ້ເອົາແພຄຽນຫົວສີແດງມາໃຫ້, ທາງລູກສາວກໍ່ແລ່ນເມືອເຮືອນ - ເອົາແພແດງມາໃຫ້ພໍ່, ພໍມາຮອດແຄມຝັ່ງກໍ່ເຫັນແຕ່ຫົວພໍ່ແມ່ນຢູ່ກາງວັງ ນາງຈຶ່ງໂຍນຜ້າແພໄປໃຫ້, ຜ້າແພແດງກໍ່ພໍດີຕົກພອກໃສ່ຫົວພໍ່.ໄດ້ແພແລ້ວເສດຖີກໍ່ມຸດລິບລົງນ້ຳປານ**ເງືອກ** ແພແດງພື້ນນັ້ນກໍ່ຈັບຢູ່ຫົວ ແລະ ກາຍເກີດເປັນຫອນເງືອກເລີຍ, ແຕ່ນັ້ນມາເພິ່ນຈຶ່ງວ່າ

ວ່າໂຕເງືອກນີ້ຫອນສີແດງ. ແຕ່ເງືອກໂຕນັ້ນເປັນໂຕຣ້າຍກາດມັກກິນຄົນ ເພື່ອແກ້ແຄ້ນຜູ້ຄົນທີ່ຍັງຢູ່, ເພາະມັນຮູ້ວ່າມັນເປັນເງືອກແລ້ວ.

ສ່ວນລູກສາວເສດຖີ, ເມື່ອພໍ່ເປັນເງືອກມາແລ້ວກໍ່ດຳລົງຊີວິດຢູ່ຜູ້ດຽວ ແລະ ນັບມື້ນັບທຸກຍາກອຶດຢາກ ເພາະວ່າເສດຖີຫນີແລ້ວເຂົ້າຂອງເງິນຄຳງົວຄວາຍກໍ່ມະລັບຫັບຫາຍຫມົດ. ຄົນໃຊ້ກໍ່ຫນີໄປບ້ານໃຜເຮືອນມັນຫມົດ, ຍັງແຕ່ລູກສາວເສດຖີເລາະຂໍທານ ກິນຕາມບ້ານຕາມເມືອງ. ມື້ຫນຶ່ງລູກສາວເສດຖີພວມຍ່າງໄປຊອກຂໍທານ ກໍ່ຈວບພໍ້ ທ້າວກ່ຳພ້າຂາແຜະພວມຂັດເປ້ຍວັບໆອອກບ່ອນຢູ່ໄປຊອກຂໍທານຄືກັນ, ລູກສາວເສດຖີ ຄຽດແຄ້ນໃຫ້ທ້າວກ່ຳພ້າທີ່ສຸດ ນາງຈຶ່ງບາຍໄດ້ຫີນກ້ອນ ໃຫຍ່ແບ່ນຄວ້າງໄປໃສ່ຫົວປ່ອຍດ່າວ່າຮ້າຍ:

- ບັກກ່ຳພ້າຂາແຜະມຶງມີເກີນຊົ່ວຮ້າຍ ! ມຶງມາຂ້າພໍ່ ດັບມອດຄົວເຮືອນກູ ດ້ວຍເຫດໃດ ? ກູກໍ່ບໍ່ໄດ້ຈັງໄຮ້ບູຽດບູຽມມຶງຈັກຢ່າງ, ເປັນຫຍັງມຶງຈຶ່ງເຮັດໃຫ້ພໍ່ກູເປັນ - ເງືອກເປັນງູ ?. ແຕ່ໄມ້ຄ້ອນກ້ອນຫີນລູກສາວ**ເສດ**ຖີໂຍນໄປໃສ່ຫົວກ່ຳພ້າເທື່ອ ທີ່ຫນຶ່ງເຮັດໃຫ້ຊາຍກ່ຳພ້າເຊົາເປັນຂາເປ້ຽ ແລະ ກັບກາຍເປັນຊາຍຜູ້ງາມຍິ່ງສົດໃສ, ມັນໂຍນຫີນໄປເທື່ອທີສອງພາໃຫ້ໂກນໄຮ້ບ່ອນຢູ່ເຊົາຂອງທ້າວກັບກາຍເປັນຫໍໂຮງຫລັງໃຫຍ່ຊໍ່ສູງຈູ່ຟ້າ ໂຍນໄປບາດທີສາມພາໃຫ້ກາຍເປັນຫນ້າທະນູສອນສາມສິ່ງວາງໃສ່ມືກ່ຳພ້າປານນອບຍໍຖວາຍ. ດັ່ງນັ້ນສາວຜູ້ໃຈຖ່ອຍຮ້າຍລູກສາວເສດຖີຈຶ່ງຄຶດເຫຼືອໃຈ ແລະ ປະຫຼາດໃຈ ເມື່ອກົ້ມເບິ່ງຕີນຊ້ຳພັດເຫັນຈ່ອຍຮ້າຍ, ເປ້ຍລ່ອຍເຂົ້າທັນທີ, ນາງຈຶ່ງເຊົາ ປ່ອຍດ່າ ແລະ ແບ່ນຄ້ອນແບ່ນຫີນໃສ່ທ້າວກ່ຳພ້າ. ແຕ່ນັ້ນນາງກໍ່ຄິດຢ່ານຕົກຂະນ້າແລ້ວ - ຫມອບຄານໄປຫາກ່ຳພ້າແລ້ວກ່າວພ້ອມວ່າ:

- ໂອ້ອ້າຍກ່ຳພ້າ, ຂ້າຂໍນົບນອບໄຫວ້ໃຫ້ຂໍເພິ່ງບຸນແດ່ເທາະ, ເຈົ້າມີບຸນ ເຫຼືອຫຼາຍແທ້. ຂ້າຂໍເປັນຂ້ອຍໃຊ້ຊ່ວຍຕ່າງຕີນເຈົ້າແດ່ - ມັນທັງເວົ້າທັງຮ້ອງໄຫ້ໄຫວ້ວອນ

ຊາຍກ່ຳພ້າເຫັນດັ່ງນັ້ນຈຶ່ງເວົ້າວ່າ:

- ບໍ່ເປັນຫຍັງດອກ ນາງເຮີຍ, ແຕ່ນີ້ເມືອຫນ້າເຈົ້າຢ່າໄດ້ຄິດຮ້າຍ ປອງ ຢ່ຳຢຽບຄົນດັ່ງພໍ່ເຈົ້າເນີ. ເຮົາບໍ່ໄດ້ທຳເວນສາງເຂັນເຮືອນເຈົ້າດອກເນີ, ມັນຫາກເປັນ ແຕ່ກຳພໍ່ເຈົ້າສ້າງຂຶ້ນເອົາເອງຫັ້ນແລ້ວ, ເຮົາກໍ່ບໍ່ໄດ້ຕັ້ງໃຈເຮັດໃຫ້ພໍ່ເຈົ້າເປັນເງືອກ ເຮົາຫາກແລເຫັນໄຂ່ຫນ່ວຍຫຼວງກໍ່ນຳໄປຖວາຍຍື່ນຕາມຄຳປ່າວນັ້ນແລ້ວ. ເຈົ້ານີ້ບໍ່ຄິດໄດ້ ຮູ້ພັດມາທຳໂທດທະວີສອງແລວເດ.

ລູກສາວເສດຖີ ຍິນກຳພ້າກ່າວແນວນັ້ນ ກໍ່ແຮ່ງຄິດຮຽ່ງຮູ້ໂທດແຫ່ງຂອງຕົນ, ສະນັ້ນ ຈຶ່ງຢ້ານກົວກຳພ້າ ແລະ ຟ້າວຂໍນຳອີກວ່າ:

- ອ້າຍກຳພ້າຜູ້ບຸນຫຼາຍເຮີຍ, ຂ້າບໍ່ຮູ້ເຫດເລື້ອງຈຶ່ງໄດ້ເຮັດແນວບໍ່ແມ່ນ, ຂໍໃຫ້ຂ້າ ນີ້ເພິ່ງບຸນເຈົ້າແດ່, ຢ່າໄດ້ຕິຂ້າລົງໂທດຮຸນແຮງ ຂໍເປັນຂ້ອຍໃຊ້ຊ່ວຍໃນເຮືອນແດ່ເທາະ

ກຳພ້າບອກນາງລູກອື້ນ ແຕ່ນາງກໍ່ເປັນເປ້ຍລູກບໍ່ເປັນແລວ ກຳພ້າຈຶ່ງເວົ້າ ນຳນາງ ວ່າ:

- ບໍ່ເປັນຫຍັງດອກເນີນາງ, ເຈົ້າຍັງບໍ່ຫມົດເວນ ແຕ່ກ່ອນເຮົາເປັນຄົນທຸກໄຮ້ຄືກັນ ດັ່ງນັ້ນ ດຽວນີ້ຈຶ່ງບໍ່ສ້າງກຳທຳເຂັນຕໍ່ເຈົ້າ, ບໍ່ໃຫ້ເປັນຂ້ອຍໃຊ້ຊວງແຕ່ຢ່າງໃດເລີຍ. ຂໍໃຫ້ເຈົ້າຢູ່ເປັນຫມູ່ຄູ່ຮັກແພງຂອງເຮົາທີ່ນັ້ນດອກ.

ເວົ້າແລວທ້າວກຳພ້າຈຶ່ງເອົາເຂົ້າຂອງເງິນທອງປັນໃຫ້ລູກສາວເສດຖີເນື້ອສ້າງສາ ໃຫ້ມີຢູ່ມີກິນ. **ຍ້ອນ**ແຕ່ຊາດກ່ອນທ້າວກຳພ້າເຄີຍສົງໄສ້ອ້າຍຂອງເນຍມັກຮັກເປັນຊູ້ ກັບເນຍຕົນ ຈຶ່ງໄດ້ລັດຜູກຕີອ້າຍເນຍຈົນຂາຫັກ, ສ່ວນຜູ້ເປັນອ້າຍ ເຫັນນ້ອງເຂີຍເຮັດ ດັ່ງນັ້ນກໍ່ມີຄວາມຄຽດແຄນຫຼາຍ ຈຶ່ງໄດ້ປ່ອຍແສ່ງຈອງເວນນ້ອງເຂີຍວ່າ: " ເກີດຊາດຫນ້າ ຂໍໃຫ້ມັນທຸກໄຮ້ເຂັນໃຈໃຊ້ຊາດຂາເປ້ຍຂາແພະຄືຜູ້ຂ້ານີ້ເນີ " ເມື່ອນ້ອງເຂີຍຕີອ້າຍ - ເນຍແລວຈຶ່ງຮູ້ວ່າອ້າຍຂອງເນຍເປັນຄົນຊື່ສັດ, ບໍ່ໄດ້ມີໃຈຕ່າງເພດຕໍ່ເນຍຂອງຕົນ, ມັນ ຈຶ່ງຫນ້າອາຍທັງກິນແຫນງແຄງໃຈແລວຫນີໄປຕາຍທາງຫນ້າເລີຍ, ເກີດມາຊາດນີ້ມັນຈຶ່ງ ເປັນຊາຍກຳພ້າທຸກໄຮ້ອັບຈົນ, ຂາແພະ ແລະ ຂໍທານກິນມາຮອດດຽວນີ້ ຫນີ້ກຳເວນມັນ ໃຊ້ກໍ່ຈຶ່ງຫມົດໄປ ສ່ວນສາວລູກເສດຖີກໍ່ຫາກແມ່ນເນຍຂອງກຳພ້າແຕ່ຊາດກ່ອນ, ຍ້ອນ ທ້າວຫມົດກຳເວນແລວຈຶ່ງພົບພໍ່ເນຍຜູ້ມີເວ່ນໃນຊາດນີ້ ແລະ ທ້າວກໍ່ມີລິດເດດເກັ່ງກ້າສັກ ສິດຂຶ້ນທັນທີ, ທ້າວສ່ອງເຫັນວ່າຍິງຄົນນີ້ແມ່ນເນຍຕົນແຕ່ຊາດກ່ອນ, ແຕ່ນາງຍັງຕ້ອງໃຊ້ ຫນີ້ເວນທີ່ມັນສ້າງໃຫ້ນ້ອງສາວລູກແມ່ນານັ້ນອີກກ່ອນ. ດັ່ງນັ້ນກຳພ້າຈຶ່ງບໍ່ບອກໃຫ້ ລູກ ສາວເສດຖີຮູ້ຈັກນຳ ມີແຕ່ສັ່ງວ່າ:

- ນາງເອີຍ, ເຈົ້າຍັງບໍ່ຫມົດເວນ ໃຫ້ເຈົ້າເອົາເງິນຄຳເຂົ້າຂອງນີ້ໄປໃຊ້ ຈ່າຍ ຂາຍກິນເນີ - ແຕ່ພໍເມື່ອເຂົ້າຂອງເງິນຄຳຕົກຖືກມືຂອງລູກສາວເສດຖີຊ້ຳພັດກາຍ ເປັນ ໄມ້ຄອນກ້ອນຫີນຄືເກົ່າ. ກຳພ້າບໍ່ຮູ້ຈະຊ່ວຍແນວໃດອີກ ຈຶ່ງມີແຕ່ສັ່ງບອກວ່າ:

- ນາງເຮີຍ, ກຳເວນເຈົ້າສາວມັນຍັງຈອງຫນັກຫນາ, ໃຫ້ເຈົ້າກັບເມືອຢູ່ຕາມກຳ ເວນເຈົ້າສາ, ຂໍແຕ່ໃຫ້ເຈົ້າສັດຊື່ ຮັກຜູ້ແພງຄົນຢ່າມີໃຈໂລບລ້ຽວເອົາຂອງເພິ່ນ ເປັນ

ຂອງໂຕ, ຢ່າມີໃຈໂລພາດີໂຕອິ່ມເຜີ່ມ ໃຫ້ເຈົ້າເອົາໄມ້ຄ້ອນນັ້ນໄປປູກຢູ່ແຈສ່ວນ, ແຕ່ລະມື້ໃຫ້ໄປຕັກເອົານ້ຳຢູ່ທ່າບໍ່ຕີນພູທວງບ່ອນໄກສຸດເຈັດຊົ່ວສຽງເອີ້ນ ມື້ລະສາມຫາບແລະທົດທາບລະສາມເທື່ອ, ສ່ວນກ້ອນຫີນໜ່ອຍນີ້ກໍ່ໃຫ້ເຈົ້າຝົນຖູເອົາຝຸ່ນມັນໄປຮອຍອ້ອມ ກົກໄມ້ນັ້ນ ຈົນຍາມໃດຫີນກ້ອນນີ້ຫາກຫຼຽນໝົດສຽງຈຶ່ງເຊົາ, ເມື່ອນັ້ນຈຶ່ງຈະມີ້ນກຳເວນ - ເຄາະເຂັນຂອງເຈົ້າສາງນາແທ້ແລ້ວ.

ສາວຂາແຜະຜູ້ຮ້ຽຮາຍ ກໍ່ມີໃຈຈິງມັກທ້າວກ່ຳພ້າຜູ້ດີງາມຫຼາຍ ໄດ້ແຕ່ແຍງຈົນເມື່ອຍຕາມີ້ນກະດາງ ແຕ່ນາງບໍ່ກ້າຄິດຄາດຍາດແຍ່ງເອົາເປັນຜົວໄດ ຍ້ອນເຫັນຕົນເອງຊົ່ວຮ້ຽຮ້າຍ, ເປື້ອລ່ອຍ ແລະ ມີເວນ. ເມື່ອຍິນກຳພ້າສັ່ງດັ່ງນັ້ນນາງກໍ່ຈົນໃຈຄິດຍາກ, ແຕ່ກໍ່ຫຼີກບໍ່ພົ້ນ, ນ່າງຄິດວ່າ " ຕ້ອງໃຊ້ຫນີ້ກຳເວນດ້ວຍການສາງບຸນລຳບາກຈຶ່ງໄດ້ "ເມື່ອນັ້ນມັນກໍ່ຮັບປາກກຳພ້າວ່າ:

- ອາຍກຳພ້າບຸນມີເຮີຍ, ເຖິງວ່າໂຕທຸກໄຮ້ ເປື້ອລ່ອຍຄານດິນກໍ່ຕາມ ເຮົາຈະພຽນປູກຝັງປົ່ນປົວເອົາກົກຄ້ອນນີ້ແລ້ວ.

ເວົ້າເຖິງຊາຍກຳພ້າຜູ້ງາມເລີດເມືອງຄົນ ທ້າວກໍ່ພາຍໜ້າທະນູສອນກັບເມືອ ໂຮງກວ້າງ, ທ້າວໄດ້ເອົາຊັບສິນສົມບັດ, ເຂົ້າຂອງເງິນທອງ, ເສື້ອຜ້າອາພອນຢາຍ ໃຫ້ຊາວບ້ານ ຊາວເມືອງຜູ້ທຸກຍາກກາກກຳ, ໃຫ້ທັງຜູ້ມີໃຈບຸນເຄີຍໃຫ້ທານທ້າວກິນແຕ່ຍາມຍັງເປັຍຍັງແພະຢູ່ນັ້ນຊູຄົນໆ, ເວັ້ນແຕ່ສາວຂາເປັ້ຍຜູ້ດຽວທີ່ທ້າວຊ່ວຍຫຍັງບໍ່ໄດ້. ດັ່ງນັ້ນຊາວບ້ານຊາວເມືອງ ເອົາກໍ່ອື່ນຫົນຳສຳລານ ແລະ ມີແຮງສາງສາບ້ານເມືອງ ຕໍ່ໄປ ແລະ ໃຜໆກໍ່ມີຍິນຊົມຊອບຂອບຄຸນທ້າວກຳພ້າ.

ແຕ່ບັງເອີນມື້ໜຶ່ງ ເງືອກໂຕເສດຖີເປັນມາລໍກິນຄົນຢູ່ທ່ານ້ຳກາງເມືອງ ມັນໄດ້ຍິນໄທບ້ານໄທເມືອງລົມກັນວ່າ:

- ທ້າວກຳພ້າຂາແພະແຕ່ກ່ອນ ດຽວນີ້ເປັນຜູ້ດີຜູ້ງາມ ໃຜກໍ່ຮັກແພງ ແລະ ສົມເປັນເຈົ້າບ້ານເຈົ້າເມືອງຄົນແທ້ແລ້ວ, ມັນບໍ່ຄືເສດຖີຮັ່ງມີຖອຍຮ້າຍຜູ້ກາຍເປັນເງືອກ ນັ້ນດອກ.

ເງືອກເສດຖີຟັງແລ້ວກໍ່ເກີດໂມໂຫ ຄຽດແຄ້ນກຳພ້າໜ້າຂີ້ທຸກເປັນດີ ມັນຈຶ່ງ ເອົາຫາງຕີຟອງນ້ຳເຟືອດຟົ້ງຂຶ້ນຟ້າຈົນກາຍເປັນເມກໜອກມືດຟ້າກໍ່ຝົນເຂົ້າທັນທີ. ບຶດໜຶ່ງຝົນຫ່າຫຼວງກໍ່ຖອກເທລົງມາແຕ່ຟ້າ ທັງມື້ທັງຄືນ ເຮັດໃຫ້ນ້ຳມາກນ້ຳນອງຊິຖ້ວມບ້ານຖ້ວມເມືອງ, ທ້າວພະຍາເມືອງກໍ່ຕົກສະທ້ານຢ້ານກົວ ປ່າວໄປທົ່ວເມືອງໃຫ້ຊອກ ຫາຜູ້

ເກົ້ງກ້າສາມາດມາຜຈບລິດເດດຂອງເງືອກຮ້າຍໂຕນັ້ນ ແຕ່ກໍ່ບໍ່ມີໃຜກ້າຜາບເງືອກ ໄດ້.
ເມື່ອນັ້ນພະຍາເມືອງກໍ່ຍັງຄິດເຫັນແຕ່ກ່ຳພ້າຜູ້ເກັ່ງກ້າຕ່າງຄືນຜູດຽວຄືຊິຜາບເງືອກ ໄດ້,
ຫາກອິດພະຍາກໍ່ບໍ່ຍອມຮຽກຫາກ່ຳພ້າເພາະວ່ານັບແຕ່ກ່ຳພ້າເປັນດີມາ ພະຍາກໍ່ຍັງຄິດ ລະ
ວັງຢ້ານກ່ຳພ້າຊິຍາດເປັນເຈົ້າບ້ານສະພານເມືອງ. ແຕ່ເມື່ອນ້ຳໄຫຼເຂົ້າກຳແພງ ໂຮງ
ພະຍາແລ້ວ ພະຍາຈຶ່ງຈຳຕ້ອງໄປຂໍ້ຮ້ອງໃຫ້ກ່ຳພ້າລົງມືຜາບເງືອກ. ກ່ຳພ້າຈຶ່ງເອົາຫະ
ນູສອນລົງໄປຈຸ່ມໃສ່ນ້ຳເຮັດໃຫ້ນ້ຳແຫ້ງວາບລົງກັບບາດ, ຜີເງືອກຫນີບໍ່ທັນກໍ່ມູດ ຫມົ້ນ
ເຂົ້າຕີນພູພາໃຫ້ຕີນພູກາຍເປັນຮູຖ້ຳຢູ່ຈົນຮອດດຽວນີ້, ຊາວເມືອງພາກັນເອີ້ນຖ້ຳນັ້ນ ວ່າ
ຖ້ຳນາດ, ກ່ຳພ້າຍິງສອນຫນ່ຳເຂົ້າໃຈກາງພູ ເຮັດໃຫ້ນ້ຳຢູ່ພື້ນພູຟົດຮ້ອນຂຶ້ນ ນ້ຳໄຫຼອອກ
ມານອກກາຍເປັນຫ້ວຍນ້ຳຊຸ່ມ, ຮອດຊູ່ມື້ນີ້ ຊາວເມືອງກໍ່ຍັງເອີ້ນວ່າຫ້ວຍນ້ຳຊຸ່ມ ເພາະ
ວ່ານ້ຳນັ້ນຊຸ່ມຢູ່ທຸກຍາມ ເຖິງວ່າຍາມຫນາວຫນອກຊຸນຕົກການນຳຫນ້າດິນ ແຕ່ຫ້ວຍ ນ້ຳກໍ່
ຍັງຊຸ່ມຢູ່ນັ້ນກໍ່ຍອນລູກສອນຂອງກ່ຳພ້າຍັງຄາ ພື້ນພູຢູ່ຫົວເມືອງນັ້ນ.

ສ່ວນຜີເງືອກຖືກກ່ຳພ້າຍິງນັ້ນກໍ່ຫຼີກທັນແລ້ວດີ້ນມາຕາມພື້ນດິນຈົນຮອດກາງເມືອງ ມັນ
ຈຶ່ງກິ້ງຫລັງຍົກພື້ນດິນຂຶ້ນເຊິ່ງບ່ອນໂຮງຂອງກ່ຳພ້າຢູ່. ທ້າວຈຶ່ງທີບຕີນລົງໃສ່ດິນເຮັດໃຫ້
ແຜ່ນດິນຫວັ່ນໄຫວສະເທືອນໄປທົ່ວໂລກ, ຜີເງືອກທົນຢູ່ບໍ່ໄດ້ຟາວເອົາຫາງຫມົ້ນດິນ ກັບ
ຫລັງໄປຢູ່ພື້ນພູທອງ, ຍ້ອນວ່າມັນຫມົ້ນຖອຍໄປທາງຫາງຈຶ່ງເຮັດໃຫ້ເກັດເງືອກປິ້ນ ມາ
ທາງຫົວ ແຕ່ນັ້ນມາເງືອກຈຶ່ງມີເກັດຊອງໄປທາງຫນ້າ. ສ່ວນບ່ອນໂຮງທ້າວກ່ຳພ້າ ທີ່
ເງືອກຍົກຂຶ້ນນັ້ນ ກໍ່ກາຍເປັນໂນນພູ ຮຽກວ່າພູຈົງ, ສ່ວນຈອມພູນັ້ນມີແກ່ວເປັນຮອຍ ລົງ
ນັ້ນແມ່ນຮອຍຕີນຂອງກ່ຳພ້າທີບໃສ່ເງືອກ. ເມື່ອເງືອກຫມົ້ນເຂົ້າພື້ນພູແລ້ວກ່ຳພ້າຄິດວ່າ
ເງືອກຫຼາບຕາຍແລ້ວຈຶ່ງເສີຍຢູ່, ແຕ່ຜີເງືອກໂຕຖ່ອຍຮ້າຍກໍ່ຍັງມີໃຈຄຽດຢູ່ ມີຄືນຫນຶ່ງກ່ຳ
ພ້າພວມນອນຫລັບນອນຝັນ ມັນກໍ່ເຮັດນ້ຳຖ້ວມແລ້ງຄືຝົນບໍ່ຕົກແຕ່ນ້ຳຖ້ວມຂຶ້ນບາດດຽວເຮັດ
ໃຫ້ຄົນ ແລະ ສັດດີ້ນຕາຍດີກນຳນ້ຳ ສຽງຮ້ອງຊ່ວຍທົ່ວບ້ານທົ່ວເມືອງ, ກ່ຳພ້າຈຶ່ງຊວາດ
ຕື່ນ ເຫັນເຫດດັ່ງນັ້ນຈຶ່ງເອົາຢາຄູດກັບປູນມາທາໃສ່ລູກສອນແລ້ວຍິງໃສ່ຫົວເງືອກ ເງືອກ
ຖືກລູກສອນກໍ່ດີ້ນຊັກຕາຍເຂົ້າ, ນ້ຳແຫ້ງລົງກັບບາດ, ຝູງເງືອກງູ ເປັນພັນເປັນຫມື່ນໂຕ
ຊຶ່ງແມ່ນເງືອກເສດຖີໂຕນັ້ນກັບເພດເປັນກໍ່ດີ້ນດ່າວຫາວຕາຍເຮັດໃຫ້ປ່າໄມ້ຢູ່ຜາແຖບອອມ
ແອ້ມເມືອງຝອຍຫມຸ່ນແປ່ນກຽງຫມົດ ແລະ ກໍ່ບໍ່ປົ່ງກໍ່ໄມ້ໄດ້ອີກ ດັ່ງນັ້ນແຖບນັ້ນຈຶ່ງມີພູ -
ປອກໂລ້ນຫຼາຍ, ສ່ວນວ່າເລືອດຢາງຂອງເງືອກຟົ້ງອອກແດງເປັ່ງຫົງແມ່ນນ້ຳບຶດຫນຶ່ງ ກໍ່

ກັບກາຍເປັນໂຕຫາກໂຕປີງ ຊອກໄລ່ດູດກິນເລືອດຄົນ ແລະ ພວກມັນກໍ່ຢ້ານຢາດູດກັບປຸນ ຕໍ່ໆມາເລີຍ. ນັບແຕ່ນັ້ນມາເງືອກໂຕນັ້ນຈຶ່ງຫຼາບ, ລີ້ຫນີ້ມຢູ່ໃນກາງພື້ນພູບໍ່ກ້າຫນີ້ນອອກ ບາກຸກກອນຄົນອີກ.

ກາວເຖິງສາວໂນ ກ່ຳພ້າຂາແພະປູກກົກຄ້ອນ,ແຕ່ລະມື້ນາງກໍ່ຕ້ອງຂັດເປັຍວັບໆ ໄປ ຫາບນ້ຳຢູ່ຕີນພູໄກນາຫົດກໍ້ໄມ້ ແລະ ຝົນຫີນໃສ່ຝຸ່ນບໍ່ໄດ້ຢູ່ບໍ່ໄດ້ເຊົາ, ດັ່ງນັ້ນກົ້ຄ້ອນກໍ່ນັບມື້ ນັບໃຫຍ່ສູງຂຶ້ນ ແລະ ມີໃບໃຫຍ່ຕາກອອກຄືກະດົ້ງ, ຄືວີກອງເຂົ້າ. ເມື່ອກົ້ຄ້ອນສູງກາຍ ກໍໄຜກໍ່ບົງແລ້ວ ໃຜຖາມວ່າແມ່ນກໍຫຍັງ ເຈົ້າຂອງມັນກໍ່ຍິນອາຍຕອບວ່າ "ກໍຄ້ອນ"ເພາະ ວ່າໂຕເຄີຍໄດ້ແບນຄ້ອນໃສ່ຫົວກ່ຳພ້າຜູ້ດີງາມນັ້ນ, ນາງຈຶ່ງຕອບວ່າ: "ກໍຄໍ້" ແຕ່ນັ້ນມາ ໃຜໆກໍ່ຮຽກວ່າກົກຄໍ້ ກໍຄໍ້ ສູງພຽງເຜືອແລ້ວສູງຂຶ້ນຈົນຈຸຟ້າ ກອນຫີນທີ່ນາງສາວ ຂາແພະ ຝົນຮວາຍກໍ່ພໍດີຫມົດ.

ພວກເງືອກທ້າວເງືອກນາງຢູ່ເມືອງຟ້າ ເຫັນປາຍກົກຄໍ້ແປກປະຫຼາດຈຸຕົນຢູ່ປາກ ປະຕູ ໂຂງຫາງເມືອງ, ພວກເຂົາຈຶ່ງໄຕ່ລົງມາຕາມລຳກົກຄໍ້ ເພື່ອຊອກຫາກົກເຄົ້າ ເລື່ອງລາຍ ຂອງມັນ, ໃນນັ້ນມີທັງນາງລູກແມ່ຫມ້າຍຜູ້ເປັນເມຍທ້າວພະຍາເງືອກກໍ່ລົງມານຳ ພວກ ນາງເງືອກແມ່ນແຕ່ສາວງາມລວມຮູບຄືຮູບຫນ້າຄືຫນ້າເປັນຫມື່ນເປັນແສນ ແຫ່ແຫນ ນາງ ນວນເມຍພະຍາຂອງເຂົາລົງມາເມືອງຄົນ, ຜູ້ໃດກໍ່ຫລິ້ງເອີ, ນຸ່ງສິ້ນໄຫມໃສ່ເສື້ອລົ້ວ , ກົ້ງຄັນຮົ່ມສັບພະປີສີ ສົ້ວ ແສດ ຂຽວ ເຫຼືອງ ອອນ ແດງ ໄຕ່ລານລົງມາພ້ອມຫ່າຝົນຍຸຍ ປົນແດດ ພໍແຕ່ພວກນາງເງືອກລົງມາດິນ, ເຂົາກໍ່ເຫັນສາວກ່ຳພ້າຂາແພະຜູ້ເຂີ້ຮາຍຕາກ ຝົນພູນດິນຫຼົກຫຍາຢູ່ກົກກໍຄໍ້ນັ້ນ ເຂົາກໍ່ທັກຖາມວ່າ:

- ໂອນໍ, ນາງຂາຂັດເປັ້ຍເອີຍ, ເຫດໃດເຈົ້າຈຶ່ງດູແລຕົ້ນຄໍ້ດ້ວຍ ຄວາມລຳບາກ ຍາກເຂັນດັ່ງນີ້.

- ໂອພວກນາງຟ້າ, ຜູ້ສວຍງາມທັງຫຼາຍເອີຍ, ກົກໄມ້ເຮົາໄດ້ໄປເຖິງ ເມືອງຟ້າ ພຸ້ນແລ້ວບໍ ? ພວກນາງຈຶ່ງລົງມາຕາມເຖິງພີ້, ເຮົານີ້ຄົນມີເວນຈຶ່ງຕ້ອງທຳແນວດີຖິ້ມໃຊ້ ໄປນີ້ແລ້ວ.

ເມື່ອນັ້ນ ເມຍພະຍາເງືອກກໍ່ຈຶ່ງມາບເຫັນເອື້ອຍ (ລູກພໍ່ນ້າຂອງຕົນ) ນາງ ກໍ່ດີໃຈ ຫຼາຍໂດດໄປກອດຄໍ ທັງໄຫ້ໆທົວໆ ເຫັນເອື້ອຍເປັນດັ່ງນັ້ນນາງຈຶ່ງເວົ້າວ່າ:

- ເອື້ອຍເຮີຍ, ພໍ່ເຮົາຍັງຄອຍຢູ່ດີບໍ່ ?

- ຜູ້ເອື້ອຍຕອບດ້ວຍຄວາມເສົ້າໂສກວ່າ:

- ນ້ອງເຮີຍ ພໍ່ເຮົາກໍ່ຫາກເປັນເງືອກຮ້າຍຫາຈອບກິນຄົນແລ້ວເດ, ຍັງແຕ່ ເອື້ອຍ ຄົນດຽວໃຊ້ເວນສອງຖ້ານນີ້ແລ້ວ.

- ໂອນໍ້ ນ້ອງນີ້ເປັນຜູ້ມີໂທດຮ້າຍຕໍ່ພໍ່ຕໍ່ເອື້ອຍ ນາຫຼາຍແລ້ວ, ເພາະໜີໄປດຽວບໍ່ຮູ້ ຕ່າວມາຫາບ້ານ ເຮັດໃຫ້ພໍ່ ແລະ ເອື້ອຍຕົກທຸກໄດ້ຍາກ ເຖິງຄີງແນວນີ້ ! - ເວົ້າ ແລ້ວກໍ່ນ້ຳຕາໄຫຼອາບແກ້ມອິດູຕົນເອື້ອຍນຶ່ງ, ໃຈໜຶ່ງກໍ່ທັ້ງຄິດສົມນ້ຳໜ້າຄວາມຮ້າຍ ຂຶ້ນ ຄົນຂອງພໍ່ລູກເຂົານັ້ນແດ່. ເຖິງຢ່າງໃດນາງຜູ້ມີບຸນກວ້າງກໍ່ຫຼິງເຫັນຄວາມຢາກດີຄວາມ ອົດທົນດູໝັ່ນຂອງເອື້ອຍ ຊຶ່ງເປັນລູກພໍ່ນ້າຂອງຕົນນັ້ນ ນາງຈຶ່ງເວົ້າວ່າ:

- ເອື້ອຍກໍ່ທຸກຍາກລຳບາກກາກກຳຫຼາຍແລ້ວ, ແຕ່ນີ້ເມື່ອໜ້າເອື້ອຍສົມຄວນເຫ່ອັດ ກຳເຫ່ອັດເວນໄດ້ແລ້ວ - ວ່າແລ້ວນາງພະຍາເງືອກກໍ່ເອົາມີດຄົມເຜັດຄົມພອຍ ຜ່າລົງ ເຊິ່ງຫົວຂອງເອື້ອຍແລ້ວປະໃຫ້ເລືອດດຳເຣີຮ້າຍໄຫຼລິນອອກຈົນໝົດສຽງ ເມື່ອນັ້ນນາງກໍ່ ເອົາມີດເຈາະເອົາຢາງກໍ່ໝາກຄໍ້ທີ່ເອື້ອຍປູກຂຶ້ນນັ້ນມາຖອກໃສ່ຫົວເອື້ອຍ, ຢາງກໍ່ໝາກ ຄໍ້ເປັນສີແດງສົດໃສ ໄຫຼຮອດບ່ອນໃດຮ່າງຄີງເອື້ອຍກໍ່ແດງສົດໃສ, ຊື່ນຄືນມາແລ້ວ ເປັນ ຄົນດີງາມປານສາວເມືອງຟ້າ, ແຕ່ນັ້ນນາງກໍ່ປາກໆຫົວໆເປັນຄົນໃຈດີມີບຸນເລີດ, ນາງ ໂດດກອດເອົານ້ອງສາວຂອງຕົນແລ້ວລູບໆຄຳໆຫົວເໝືອນຊຸມລູກນ້ອຍ. ແລ້ວ ນາງພະ ຍາເງືອກກໍ່ຊີ້ໃຫ້ເອື້ອຍເບິ່ງກອງເລືອດດຳແລ້ວບອກເອື້ອຍວ່າ:

- ເອື້ອຍເຫັນເລືອດເຣີຮ້າຍ ຊຶ່ງຕົກຈາກ ຄີງຂອງເອື້ອຍນັ້ນບໍ ? ດຽວນີ້ມັນພວມ ໄຫຼຊຶມລົງເຖິງຮາກກໍ່ໝາກຄໍ້ນີ້ແລ້ວ, ກ່ອນນີ້ໝາກຄໍ້ເປັນສີແດງສົດໃສ ແຕ່ນ້ອງໄດ້ເອົາ ຢາງແດງຂອງມັນມາປ່ຽນເລືອດດຳກຳແຫຼຂອງເອື້ອຍແລ້ວ, ກໍ່ໝາກຄໍ້ໄດ້ດູດເລືອດເກົ່າ ເອື້ອຍແລ້ວ, ແຕ່ນີ້ເມື່ອໜ້າມັນກໍ່ຈະເປັນໝາກສີແຫຼກ່ຳຄືເລືອດເອື້ອຍກອງນີ້ແຫຼະ.

ເອື້ອຍຂອງນາງພະຍາເງືອກເຫັນນ້ອງຂອງຕົນເປັນຄົນເກັ່ງກ້າສາມາດ ແລະ ມີ ຄວາມດີຕໍ່ຕົນແນວນັ້ນກໍ່ມີຄວາມຊຶມຊື່ນ ແລະ ຂໍໄປຢູ່ນຳ.

ນາງເມຽພະຍາເງືອກຕອບວ່າ:

- ພວກນ້ອງໄດ້ເປັນສັດສິ່ງເສື້ອເມືອງບົນ ກິນອາກາດ ສ່ວນວ່າເອື້ອຍພັດ ເປັນຄົນ ດິບແດງ ດັ່ງນີ້ເມື່ອພຸ້ນບໍ່ຄວນ, ຄົນຊິໄປຢາມຢື້ຄາວດຽວກໍ່ຊ່າງວ່າຢູ່ ຄົນຊິຕັດຊາດເຊື້ອບໍ່ ຄວນແທ້ແລ້ວ - ວ່າແລ້ວນາງກໍ່ຣວາຍມົນສ້າງເປັນເຮືອນຫລັງໃຫຍ່ໄວ້ໃຫ້ເອື້ອຍຢູ່ ກັບ

ທັງສ້າງເດີ່ນກວ້າງຫນອງໃຫຍ່ສວນຊຸດທີ່ຍານໄວ້ເປັນຂວ່າງຫຼິ້ນຂອງນາງເງືອກເມືອງບົນ

ແຕ່ນັ້ນມາທຸກໆວັນສິບ, ສິບແປດ ສິບຫ້າ ຊຸມເງືອກນາງເງືອກທ້າວກໍ່ແຫ່ແຫນແພນກັ້ງລົງມາຕາມກໍ່ຄໍ້ມາທ່ຽວຫຼິ້ນຂວ່າງຢູ່ເມືອງຄົນ.

ຕໍ່ມາມີວັນສິບຫນຶ່ງ ພະຍາເງືອກເຮັດບຸນໃຫຍ່ປາງຫນຶ່ງຂຶ້ນ ເພື່ອສະຫຼອງນາງ ເນຍພະຍາເງືອກເກີດກຳລູກນ້ອຍ. ພວກເງືອກນາງເງືອກທ້າວຫຼິ້ນກິນບຸນຢ່າງມ່ວນຊື່ນ ຄຶກຄື້ນທີ່ສຸດ, ພວກເຂົາພາກັນເອີ່ຍອງ ກົ້ງຮົ່ມກົ້ງຈອງ ສີແສດ ສີ້ວ ເຫຼືອງ ຂຽວ ເປັນເລົ່າດຽວໄຕ່ຂົວລົງເມືອງໃຕ້. ເມື່ອນັ້ນທ້າວກ່ຳພ້າຜູ້ລີ້ເດດເມືອງຄົນກໍ່ແລເຫັນ ຂົວເມືອງບົນໄຕ່ລົງເມືອງໃຕ້. ທ້າວກໍ່ຄິດວ່າແມ່ນໄພເມືອງບ້ານສັດຕູບັງບຽດກໍ່ຈຶ່ງ ຟ້າວທວຍເອົາສອນລູກຫນ້າຍິງເລັ່ງຕັດຂົວ, ເຮັດໃຫ້ຂົວກໍ່ຄື້ທີ່ກາຍເມືອເມືອງຟ້າຂາດທັກກາງເຄິ່ງ, ຍັງເຄິ່ງງຸເມືອງຟ້າ ພະຍາເງືອກເຫັນດັ່ງນັ້ນກໍ່ຟ້າວດຶງຂົວຂຶ້ນໄປໄວ້ເມືອງບົນ , ຍາມໃດມີບຸນຫຼືຢາກມາທ່ຽວຫຼິ້ນເມືອງຄົນເອົາຈຶ່ງຢ່ອນຂົວລົງມາຫຼິ້ນ, ລົງມາກິນນ້ຳໃຕ້ດິນຢູ່ເມືອງລຸ່ມ. ດັ່ງນັ້ນຄົນທັງຫຼາຍຈຶ່ງພາກັນຮຽກວ່າຮຸ້ງກິນນ້ຳ ຍາມຝົນຍຸຍແດດສ່ອງ ຫັ້ນແລວ.

ເວົ້າເຖິງທ້າວກ່ຳພ້າບ່າວໂສດຄົນທານ, ຍິງຂົວຮຸ້ງຂາດລົງເລີຍໄປເບິ່ງ ໄປ ຮອດບ່ອນຮຸ້ງຊ້ຳພັດແມ່ນຂອນໄມ້ຍາວຢຽດຫມື່ນວາ ພ້ອມນັ້ນ ທ້າວກໍ່ເຫັນນາງສາວຂາແພະແຕ່ກ່ອນກັບກາຍເປັນຜູ້ດີຜູ້ງາມຖືກໃຈຕົວພຽງ, ແຕ່ຫາກພວມຮອງໄຫ້ກຸ້ມກອດກາງຂອນ ຈົ່ມວ່າ:

- ໂອ ເຮີຍ ກໍ່ຄໍ້ ກໍ່ຄ້ອນ ທີ່ຮັກແພງຂອງຜູ້ຂ້າເຮີຍ ໃຜເດສິງຊ່າງມາຖ່ອຍຮ້າຍຕັດບັ່ນຂາດທັກສາເດ, ມັນຕັ້ງແມ່ນກໍ່ໄມ້ບຸນຄຸນຂອງອາຍກ່ຳພ້າຜູ້ຫນ້າຮັກຫນ້າແພງ, ແຕ່ນີ້ໄປຫນ້າຜູ້ຂ້າກໍ່ບໍ່ມີຂົວຂຶ້ນເມືອຍາມນອງນຶ່ງອີກແລວ. ເອີຍຂາດນອງ ນອງຂາດເອີຍຫມອງເສົ້າເພິ່ງຜູ້ໃດເດນໍ.

ກ່ຳພ້າເຫັນດັ່ງນັ້ນກໍ່ຟ້າວຫຍັບເຂົ້າໃກ້ຈູກຫລັງນາງງາມ ສາວນາງຟາຍນ້ຳຕາງວາກນາຫາທ້າວ ເມື່ອນັ້ນກ່ຳພ້າຈຶ່ງເວົ້າວ່າ:

- ນາງເຮີຍ ອ້າຍນີ້ມີໂທດຮ້າຍເພາະບໍ່ພິຈາລະນາຄັກ, ອ້າຍກໍ່ບໍ່ຮູ້ວ່າແມ່ນກົກກໍໄມ້ອັນເທື່ອແຮງນາງປູກນັ້ນແລວ, ຈຶ່ງໄດ້ຍິງຕັດໄມ້ຂາດມ້ວນບາດດຽວນີ້ແລວ

ນາງງາມເຫັນດັ່ງນັ້ນຕົກໃຈ ທັງຫນ້າອາຍທ້າວກ່ຳພ້າ ນາງຈຶ່ງຟ້າວເຊັດນ້ຳຕາວັບໆ ແລະ ແຍ່ງກ່ຳພ້າຈົນໂຕແຂງຢືນກະດາງ ນາງກໍຄິດນັກທ້າວຈົນໃຈສັ່ນຢືນງົງ ຫວັງຢາກໃຫ້ກ່ຳພ້າຢ່າຄິດໄກໄປອື່ນ ຈາກນັ້ນນາງກົ້ມເບິ່ງໂຕເອງເຫັນຕົນບໍ່ໄດ້ຊົງເຂີຣ້າຍ ທ້າຍຫັກຄືເກົ່າ ກໍແຮ່ງຄິດຮູ້ບຸນຄູນອ້າຍກ່ຳພ້າ ນາງຈຶ່ງອອກປາກເວົ້າວ່າ:

- ອ້າຍກ່ຳພ້າຜູ້ມີບຸນກວ້າງເຣີຍ ເປັນແຕ່ບຸນຄຸນຂອງອ້າຍ ນ້ອງຈຶ່ງບໍ່ຕົກເປັນຊົ່ວຈຶ່ງບໍ່ຫມອງຫມິ່ນມົ້ວຕາຍລາເພາະເວນ.

- ທ້າວກ່ຳພ້າ ເຫັນເມຍເກົ່າຫມົດເວນ ທັງດີງາມ ຫນ້າຮັກຫນ້າແພງຫຼາຍແທ້ທ້າວຈຶ່ງຊິເອົາມາແຕ່ງແປງເປັນລູກເປັນເມຍຕາມແບບຕາມຊາດ ແຕ່ທ້າວກໍ່ຍັງຢາກລອງໃຈຫຼິ້ນສາວງາມ ວາດອ່ອນ ພໍດີຄິດໄດ້ຄຳຍອກລໍ້ຈຶ່ງເວົ້າວ່າ:

- ໂອ້ນ້ອງເຣີຍ ຄົນຄືອ້າຍບໍ່ເຄີຍຫນ່າຍຄົນຈົນ, ໃຜຫາກຕິດຂັດສົນກໍ່ຊ່ວຍຊູ ຕາມແຮງອ້າຍນີ້ແລ້ວ, ການຊ່ວຍຊູດູແລກັນນັ້ນເປັນຂອງເຮົາຄວນເຮັດສະເຫມີໆ ຫຼືວ່ານ້ອງຫາທາງປັ້ນດູ່ຮ້າຍ ກຽດຊັງຄົນທຸກຍາກ ລັງກຽດຄົນກ່ຳພ້າແບບຄອນຮຸ້ມຫີນໃສ່ຕີບໍ ?

ນາງໂນ້ຍຜູ້ງາມອຳອາຍ ຫູແດງປານເລືອດ, ຟ້າວກົ້ມຫນີຫຼີກຫນ້າຕານ້ອຍລັກ ແນມອ້າຍກ່ຳພ້າບໍ່ເຊົາ.

24/VII

- ຂໍໂທດໂພຍນຳທ່ອນອ້າຍກ່ຳພ້າຜູ້ດີເຣີຍ ອ້າຍຢ່າໄດ້ຊາຄວາມຫລັງດັ່ງຊາຄົນໃບ້ນັ້ນເທາະ ! ບັດນີ້ນ້ອງຂໍເຊີນອ້ອນອ້າຍເມືອເຮືອນຍານແວ່ກ່ອນເທາະ ເຖິງວ່າ ເຮືອນເປົ່າຮ້າງປະຕູກວ້າງຫາກເປີດໄຂຢູ່ດາຍ.

ຍາມນັ້ນ ນາງກໍພາອ້າຍກ່ຳພາເມືອເຮືອນ ແລ້ວເອົາສາດມາປູຂັນຫມາກພູມາຕັ້ງ . ຜ້າສະນະຮອງນັ່ງນາວາງ, ເຫັນນາງຕ້ອນແຂກດັ່ງນັ້ນທ້າວກ່ຳພ້າກໍນຶກເຫັນວາດຊົງຄາວນາງເປັນເມຍເກົ່າແຕ່ຊາດຫລັງພຸ້ນ ແລ້ວກໍຄິດນ່ອນຢາກຍອກລໍ້ລອງໃຈເບິ່ງວ່າ ນາງຍັງຊິມີໃຈຮັກນັກຕູ້ນຫຼືບໍ່ວ່າ:

- ໂອ ນ້ອງເຣີຍ ອ້າຍໄດ້ມາເຫັນນ້ອງ ຄາວດຽວຊິໄດ້ຈາກເສຍດາຍເດ ເປັນເພາະບຸນບໍ່ກວ້າງຊິຕາຍລາລູກບໍ່ເມຍສາແລ້ວ.

- ເປັນແນວໃດອ້າຍຈຶ່ງວ່າໄປແນວນັ້ນນໍ, ຄົນດີງາມຈັ່ງອ້າຍຕາຍລ້າບໍ່ທ່ອນເປັນ.

- ໂອຍ, ອ້າຍບໍ່ຕາຍຍ້ອນໄຮ້ອຶດຢາກສັນໃດ ກໍ່ບໍ່ຕາຍຍ້ອນເສິກທາງເຫນືອ ບໍ່ຕາຍຍ້ອນເສືອທາງໃຕ້ດອກນ້ອງເຣີຍ. ອ້າຍນີ້ຫາກຊິຕາຍຈາກນ້ອງ ຈາກໂລກ ເມືອງ

ຄົນ ເມື່ອນຳທາດອນພໍ່ຄີງຢູ່ເມືອງຟ້າ, ອ້າຍຈະເມືອຢູ່ລ້ຽງດູແລພໍ່ແມ່ກ່ອນແລ້ວ ເພາະຫາຜູ້ເມືອຕາງບໍ່ໄດ້ ຕ້ອງຕາຍແລ້ວລ່ວງໄປນ້ອງເຣີຍ.

ນາງໄດ້ຍິນທ້າວກ່າວດັ່ງນັ້ນກໍ່ນ້ຳຕາຊຶມອອກເຕັມເບົ້າຕາ ທັງເວົ້າວ່າ:

- ອ້າຍຜູ້ເກັ່ງກ້າ ດີງາມ ສິນຍືນຢູ່ໃຫ້ຄົນເພິ່ງກ່ອນແລ້ວຄັນເຫດນີ້ດັ່ງນັ້ນໃຫ້ ນາງນ້ອງຊ່ວຍແທນສານາ.

- ໂອ້ອ້າຍຂໍຂອບໃຈນຳຄວາມດີຂອງນ້ອງທີ່ມີຕໍ່ຊາຍພອຍນີ້ແລ້ວ ແຕ່ວ່າຄວາມ ເປັນຕາຍຂອງຕົນບໍ່ກ້າເຄືອງຮອດນາງນ້ອງ ຢ້ານແຕ່ນາງຊິເອົານ້ຳໃຈເຄືອບໜ້າລັບຫລັງພັດປະປ່ອຍ ຄົນກຳພອຍເຣື້ຣາຍຕາຍຖິ້ມຊາງມັນວ່າລະນໍ ?

- ອ້າຍຜູ້ຈົບຜູ້ງາມເຣີຍ ນ້ອງກໍ່ຄົນກຳພອຍກຳພ້າ ຫົວດຽວເພິ່ງເພິ່ນຫັ້ນແລ້ວ ບໍ່ຫ່ອນກ້າຫຼອກລໍ້ຕົວະຣາຍລ້າຍພາງອ້າຍແລ້ວ ຄັນໄດ້ຊູຊ່ວຍອ້າຍຕາຍຖິ້ມກໍ່ບໍ່ແໜງແຫ້ແລ້ວເຊື່ອນ້ອງເທາະເຫັນໃຈນ້ອງແດ່ ຜູ້ດີເຣີຍ.

ຊາຍກຳພ້າເວົ້າລອງຕໍ່ໄປວ່າ:

- ອ້າຍບໍ່ກ້າເຊື່ອແລ້ວ, ຄວາມປາກຢູ່ນຳລີ້ນ ຫົວໃຈຢູ່ນຳເລືອດ ຄົນຜູ້ດີດັ່ງນາງຄົນຜູ້ງາມດັ່ງນ້ອງ ຊິຕາຍຖິ້ມເພື່ອພີ່ຊາຍໄດ້ຢ່າງໃດດ.

ເມື່ອນັ້ນ ນາງກໍ່ແຄ້ນຄັ່ງໃນໃຈ ເວົ້າແນວໃດທ້າວກໍ່ບໍ່ເຊື່ອ ຈິ່ງຫລູບໄປໃສ່ພ້າ ເອົາປາຍຕາວໃສ່ຄໍຂອງຕົນ. ທ້າວກຳພ້າຕົກໃຈຟ້າວຍາດເອົາພ້າ ດວງແຫຼມຄົມແລບ ແລ້ວຈິ່ງຂໍໂທດແທ້ ວ່າອ້າຍລອງຫຼິ້ນຢອກໄຍນີ້ແລ້ວ ບັດນີ້ອ້າຍກໍ່ເຫັນໃຈຈິງຂອງເຈົ້າແລ້ວ, ຕໍ່ນັ້ນທ້າວກໍ່ເລົ່າເລື່ອງລາຍສ້າຍເຫດ ທີ່ເຄີຍເປັນສາຍເນື້ອສາຍແນນກັນມາແຕ່ຫຼາຍ ຊາດມາແລ້ວ, ຕົກມາຊາດນີ້ ຍອມຕົກເວນໃຊ້ໜີ້ຈິງມານພໍ້ຈອບກັນ, ຕໍ່ມາເຂົາກໍ່ລົມເອົາກັນເປັນຜົວເປັນເມຍ ໃນນີ້ແຕ່ງດອງພື້ນ້ອງຈຸ່ມເຈົ້ອນ້ອງສາວຢູ່ເມືອງເງືອກທ້າວເງືອກນາງມ່າຣວມ ມີນັ້ນເງືອກນາງທັງເງືອກທ້າວແຫ່ແໜນກັນລົງມາຕາມຂົວຮຸ້ງທີ່ເຂົາຢ່ອນ ລົງມາພອນ, ຫຼຽວເບິ່ງເຂົາເອຍ່ອງກັ້ງຮົ່ມສີຂຽວແຫຼ ແສດ ເຫຼືອງ ເຣືອງ ເຣືອລົງມາ ຜູ້ໃດກໍ່ເປັນຮູບຄົນງາມລ່ວນຄືຊິ້ຍອຍຢາດເປັນນັບແຕ່ນັ້ນມາ ຜົວເມຍກຳພ້າກໍ່ພາກັນສ້າງ ສ້າຢ້າວເຣືອນນຳກັນຢ່າງສະໜຸກສະບາຍຈົນມີລູກສອງຄົນ, ຜູ້ເປັນເມຍຈິ່ງເວົ້າກັບຜົວວ່າ:

- ອ້າຍເຣີຍ ນ້ອງກໍ່ຢູ່ນຳອ້າຍມານານເຫີງເຕີບ ບັດນີ້ນ້ອງກໍ່ຄິດຮອດພໍ່ເກີດຜູ້ມີເວນຫຼາຍແລ້ວ, ຫຼືວ່າພໍ່ໜົມດເວນຊິຕາວດີກໍ່ບໍ່ຮູ້ ຄັນວ່າດີຫຼືຣາຍໃຫ້ພໍ່ຮູ້ເງືອນຮູ້ສັ້ນຈິ່ງຊິເປັນ.

ທ້າວກ່ຳພ້າເລີຍຍິງສອນໄປຖາມນ້ອງເມຍຢູ່ເມືອງເງືອກທ້າວເງືອກນາງ ໃຫ້ນາງບອກພະຍາເງືອກທ້າວແດ່ວາເງືອກຕົວເສດຖີກັບ ໄປຫຼືຍັງ ຢູ່ໃສແທ ຫຼື ວາຕາຍໄປແລວ ພະຍາເງືອກກໍ່ຟ້າວໄປທວງທາວຫາຢູ່ທົ່ວ ທັງເມືອງເງືອກທ້າວເງືອກນາງ ໄປຮອດເມືອງເງືອກຢູ່ປາກກະດົງກໍ່ບໍ່ເຫັນ ຈຶ່ງຫລົບມາເມືອງນາກ ພະຍານາກຈຶ່ງບອກວ່າ: " ເງືອກເສດຖີມັນໄດ້ກັ້ນໃຈຕາຍແຕ່ມື້ຂົວຮຸ້ງຖືກກ່ຳພ້າຍິງຂາດ, ເພາະວ່າ**ມັນ** ຈະ ຢູ່ຮ່ອນໂລກນຳບໍ່ໄດ້ເພາະລຶດທິຄົນເກົ່າລື່ນມັນແລ້ວ ". ດັ່ງນັ້ນພະຍາເງືອກກໍ່ນຳ ເລື່ອງລາຍໄປເວົ້າສູ່ກ່ຳພ້າຟັງ, ກ່ຳພ້າຈຶ່ງເລົ່າຂ່າວໃຫ້ເມຍຮູ້, ແຕ່ວ່ານາງຮູ້ແລ້ວໄດ້ແຕ່ ຄະນຶງໃນໃຈວ່າ " ແຕ່ຍອມພໍ່ໃຈໂຫດເປັນເສດຖີກໍ່ບໍ່ເປັນຍອນໃຜບຸດບຸນທຳຮາຍແທ ແລວ ".

● ຜິວລາວັນ



ຈິດຕະກຳ ຝາວັດອຸບມຸງ ວຽງຈັນ



ພັນທະນາສອນ

ໜ້າ ໑. ພະຍານົກເປົ້າ
ເລົ່າ : ຍ່າກາລີ
ຂຽນ : ເຊລະນອງ
໑໓. ລູກໜໍ່ເຕືອກ
ຂຽນ : ພາບວິວສະໜັນ
໑໙. ນາງຜານອງ
ຂຽນ : ເດນທະນູ ກຸນພົນພັກດີ

໒໗. ໄຊວິເສດ
ເລົ່າ : ພໍ່ບົວລີ ລັດຕະນະໄພທູນ
ຂຽນ : ໜູທຳມະດາ
ຮຽບຮຽງ : ສິນແສງ ເກສາວິລະ
໓໓. ຄາດໄດບໍ່ທອນເສຍ
ຂຽນ : ໝາກໂມຫວານ
ຮຽບຮຽງ : ສິນແສງ ເກສາວິລະ
໓໗. ສອງເອື້ອຍນ້ອງ
ເລົ່າ : ແມ່ເຖົ້າ ບົວລີ
ຂຽນ : ພູວັນໄຊ
ຮຽບຮຽງ : ສິນແສງ ເກສາວິລະ
໔໑. ກຳພ້າສະຫຼາດ ອາມາດທົ່ງສາ
ພະຍາໂງຈາ
ຂຽນ : ລຸງຊູນ
ຮຽບຮຽງ : ສິນແສງ ເກສາວິລະ
໔໗. ກຳພ້າ ພະຍາເງືອກ
ເລົ່າ : ພິມພາ ຫຼວງວັນນາ
ຂຽນ : ພິວລາວັນ

